# ປຶ້ມຖາມ-ຕອບ
# ກ່ຽວກັບການສືບສວນ-ສອບສວນ

## Q&A Book on Investigation

ຄະນະຄົ້ນຄວ້າກົດໝາຍວ່າດ້ວຍການດຳເນີນຄະດີອາຍາ
ໂຄງການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຍຸຕິທຳ ແຫ່ງ ສປປ ລາວ

ໂດຍການຮ່ວມມືລະຫວ່າງ ອົງການໄອຍະການປະຊາຊົນ, ສານປະຊາຊົນ, ກະຊວງຍຸຕິທຳ,
ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ
ກັບອົງການຮ່ວມມືສາກົນຍີ່ປຸ່ນ (ໄຈກາ)

ສະບັບປັບປຸງ ປີ 2018

# ປື້ມຖາມ-ຕອບ
# ກ່ຽວກັບການສືບສວນ-ສອບສວນ

## Q&A Book on Investigation



ຄະນະຄົ້ນຄວ້າກົດໝາຍວ່າດ້ວຍການດຳເນີນຄະດີອາຍາ

ໂຄງການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຍຸຕິທຳ ແຫ່ງ ສປປ ລາວ

ໂດຍການຮ່ວມມືລະຫວ່າງ ອົງການໄອຍະການປະຊາຊົນ, ສານປະຊາຊົນ, ກະຊວງຍຸຕິທຳ,

ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ

ກັບອົງການຮ່ວມມືສາກົນຍີ່ປຸ່ນ (ໄຈກາ)

ສະບັບປັບປຸງ ປີ 2018

## ຄະນະຊີ້ນຳໂຄງການ

1. ທ່ານ ສຈ.ເກດ ກຽດຕິສັກ — ຮອງລັດຖະມົນຕີກະຊວງຍຸຕິທຳ
2. ທ່ານ ຄຳພາ ແສງດາຣາ — ຮອງປະທານສານປະຊາຊົນສູງສຸດ
3. ທ່ານ ໄຊຊະນະ ໂຄດພູທອນ — ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ
4. ທ່ານ ຣສ.ປອ. ພຸດ ສິມມະລາວົງ — ຮອງອະທິການບໍດີມະຫາວິທະຍາໄລແຫ່ງຊາດ

## ຄະນະບໍລິຫານງານໂຄງການ

1. ທ່ານ ປອ. ຈອມຄຳ ບຸບຜາລີວັນ — ຫົວໜ້າກົມສົ່ງເສີມລະບົບຍຸຕິທຳ ກະຊວງຍຸຕິທຳ
2. ທ່ານ ບຸນຂວາງ ທະວິສັກ — ຫົວໜ້າຫ້ອງການ ສານປະຊາຊົນສູງສຸດ
3. ທ່ານ ສີສູນທອນ ສ.ຜາບມີໄຊຍ໌ — ຫົວໜ້າຫ້ອງການ ອົງການໄອຍະການປະຊາຊົນສູງສຸດ
4. ທ່ານ ຣສ. ວຽງວິໄລ ທ່ຽງຈັນໄຊ — ຄະນະບໍດີ ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ

## ຜູ້ຮ່ວມມີຄຳເຫັນ

1. ທ່ານ ສຈ.ດາວອນ ຫວ່າງວິຈິດ — ພະນັກງານບຳນານ ອາຈານອາວຸໂສ
2. ທ່ານ ນະລົງລິດ ນໍລະສິງ — ຫົວໜ້າກົມກວດກາ ແລະ ປະເມີນຜົນນິຕິກຳ ກະຊວງຍຸຕິທຳ
3. ທ່ານ ຄຳເຜີດ ສີມວໍລະຈິດ — ຮອງຫົວໜ້າກົມພົວພັນຕ່າງປະເທດ ອົງການໄອຍະການປະຊາຊົນສູງສຸດ

## ຄົ້ນຄວ້າ ແລະ ຮຽບຮຽງ ໂດຍ:

| | |
|---|---|
| 1. ທ່ານ ສຸພາສິດ ລໍວັນໄຊ | ອົງການໄອຍະການປະຊາຊົນສູງສຸດ |
| 2. ທ່ານ ທອງວັນ ແກ້ວວິໄລ | ອົງການໄອຍະການປະຊາຊົນສູງສຸດ |
| 3. ທ່ານ ບຸນຕີ ສຸລິສັກ | ອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ |
| 4. ທ່ານ ສຸລິພອນ ແກ້ວສຸວັນ | ອົງການໄອຍະການປະຊາຊົນ ພາກກາງ |
| 5. ທ່ານ ສີວັນ ບຸນທະລາ | ສານປະຊາຊົນພາກກາງ |
| 6. ທ່ານ ແສງສຸລິຍາ ພວງເພັດ | ສານປະຊາຊົນເຂດ 1 ນະຄອນຫຼວງ ວຽງຈັນ |
| 7. ທ່ານ ສຸລິເດດ ສໍອິນໄຊ | ສານປະຊາຊົນສູງສຸດ |
| 8. ທ່ານ ນາງ ຂວັນແຂ ເຕັມສິມບັດ | ສານປະຊາຊົນສູງສຸດ |
| 9. ທ່ານ ສິນທະວົງ ພົມຈັນທະພອນ | ກະຊວງຍຸຕິທຳ |
| 10. ທ່ານ ມິດລະຄອນ ສົງຄຳຈັນ | ກະຊວງຍຸຕິທຳ |
| 11. ທ່ານ ອຸດົມ ສາຍເພຍວົງ | ກະຊວງຍຸຕິທຳ |
| 12. ທ່ານ ແສງທະວີ ອິນທະວົງ | ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ |
| 13. ທ່ານ ເຊີງຄຳ ສີຫາລາດ | ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ |
| 14. ທ່ານ ແກ້ວສາຍຈິງ ສາຍສຸວັນນະວົງ | ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ |

| | | |
|---|---|---|
| 15. | ທ່ານ ພອນໄຊ ປະພັດສະລາງ | ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ |
| 16. | ທ່ານ ວໍລັດສະໝີ ສຸລິປະພັນ | ສະພາທະນາຍຄວາມ |
| 17. | ທ່ານ ນິວັນ ສີມແສງດີ | ສະພາທະນາຍຄວາມ |
| 18. | ທ່ານ ພັທ.ປອ. ຄຳພັນ ຈັນທະວິສຸກ | ກະຊວງປ້ອງກັນຄວາມສະຫງົບ |
| 19. | ທ່ານ ພັທ.ປອ. ພັນໄຊ ທຳມະສິດ | ກະຊວງປ້ອງກັນຄວາມສະຫງົບ |
| 20. | ທ່ານ ພັທ. ອິນປິງ ຈັນທະວົງສາ | ກະຊວງປ້ອງກັນຄວາມສະຫງົບ |
| 21. | ທ່ານ ພັທ. ບຸນກອງ ວັນນະວົງ | ກະຊວງປ້ອງກັນຄວາມສະຫງົບ |
| 22. | ທ່ານ ຣທ. ຄຳສຸດໃຈ ຊຸນສີ | ກະຊວງປ້ອງກັນຄວາມສະຫງົບ |

## ຜູ້ຮ່ວມມີຄຳເຫັນຝ່າຍຍີ່ປຸ່ນ

| | | |
|---|---|---|
| 1 | Prof. Kato Katsuyoshi | Senshu University |
| 2 | Prof. Shumi Mitsuo | Doshisha University |
| 3 | Mr. Miyake Shunji | Attorney of Law |
| 4 | Mr. Ishii Takashi | The General Affairs and Planning Department, Ministry of Justice , Japan |
| 5 | Mr. Morinaga Taro | International Cooperation Department Ministry of Justice, Japan |
| 6 | Mr. Sakai Kohei | ICD, Ministry of Justice, Japan |
| 7 | Mr. Hiroyuki Ito | ICD, Ministry of Justice, Japan |
| 8 | Ms. Watanabe Machiko | The General Affairs and Planning Department, Ministry of Justice, Japan |
| 9 | Mr.Tsutsumi Masaaki | ICD, Ministry of Justice, Japan |

| | | |
|---|---|---|
| 10 | Mr. Tashiro Tomohiro | Second secretary and Security Attache, Embassy of Japan |
| 11 | Mr.Nakamura Kenichi | JICA Project legal expert |
| 12 | Mr.Suda Hiroshi | JICA Project legal expert |
| 13 | Mr.Ito Atsushi | JICA Project legal expert |
| 14 | Mr.Irie Katsunori | JICA Project legal expert |

# ຄຳນຳ

ປຶ້ມຖາມ-ຕອບກ່ຽວກັບການສືບສວນ-ສອບສວນ ເປັນຜົນງານທາງວິຊາການຂອງບັນດານັກວິຊາການລະດັບສູງຈາກອົງການໄອຍະການປະຊາຊົນ, ສານປະຊາຊົນ, ກະຊວງຍຸຕິທຳ, ຄະນະນິຕິສາດ-ລັດຖະສາດມະຫາວິທະຍາໄລແຫ່ງຊາດ, ກະຊວງປ້ອງກັນຄວາມສະຫງົບ ແລະ ສະພາທະນາຍຄວາມ ປະກອບເປັນຄະນະຄົ້ນຄວ້າກົດໝາຍວ່າດ້ວຍການດຳເນີນຄະດີອາຍາຂອງໂຄງການພັດທະນາຊັບພະຍາກອນມະນຸດໃນຂົງເຂດຍຸຕິທຳ ຊຶ່ງເປັນຜົນງານຕໍ່ຍອດມາຈາກປຶ້ມຄູ່ມືການດຳເນີນຄະດີອາຍາ ຢູ່ ສປປ ລາວ.

ປຶ້ມເຫຼັ້ມນີ້ແມ່ນຜົນງານມາຈາກການເກັບໂຮມຄຳຖາມ ແລະ ຂໍ້ຂ້ອງໃຈຂອງຜູ້ເຂົ້າຮ່ວມໃນເວລາຄະນະຄົ້ນຄວ້າກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໄດ້ໄປເຜີຍແຜ່ປຶ້ມຄູ່ມືການດຳເນີນຄະດີອາຍາ ຢູ່ ສປປ ລາວ ຊຶ່ງເປັນຜົນງານທາງດ້ານວິຊາການຂອງຄະນະຊຸດກ່ອນ ພ້ອມທັງສະພາບບັນຫາໃນທາງປະຕິບັດຕົວຈິງຂອງອົງການດຳເນີນຄະດີອາຍາ ໂດຍສະເພາະແມ່ນອົງການສືບສວນ-ສອບສວນເພາະວ່າບາງບັນຫາກົດໝາຍບໍ່ໄດ້ກຳນົດໄວ້ ຫຼື ກຳນົດໄວ້ແຕ່ກໍບໍ່ຊັດເຈນຈຶ່ງເປັນສາເຫດເຮັດໃຫ້ການປະຕິບັດວຽກງານຕົວຈິງພົບຄວາມຫຍຸ້ງຍາກ ແລະ ບໍ່ເປັນເອກະພາບກັນ.

ຄະນະຄົ້ນຄວ້າໄດ້ມີຄວາມພະຍາຍາມ ແລະ ສຸມສະຕິປັນຍາເປັນເວລາ 2 ປີກວ່າໃນການເກັບໂຮມບັນຫາເຫຼົ່ານັ້ນມາສ້າງເປັນຄຳຖາມໂດຍຈັດເປັນໝວດໝູ່ຕາມລຳດັບຂອງຂັ້ນຕອນການສືບສວນ-ສອບສວນ ເພື່ອຫາຄຳຕອບດ້ວຍການຈັດກອງປະຊຸມລະດົມແນວຄວາມຄິດເຫັນປຶກສາຫາລືໂດຍອີງໃສ່ການໄປເກັບໂຮມຂໍ້ມູນຢູ່ທ້ອງຖິ່ນ, ຜົນຂອງການໄປຝຶກອົບຮົມຢູ່ປະເທດຍີ່ປຸ່ນ, ລັດຖະທຳມະນູນ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ກົດໝາຍທີ່ກ່ຽວຂ້ອງກັບການດຳເນີນຄະດີອາຍາ, ລະບຽບການສືບສວນ-ສອບສວນ, ຄຳຄິດເຫັນຂອງຜູ້ຊ່ຽວຊານປະຈຳໂຄງການໄຈກາ(JICA), ອາຈານອາວຸໂສ ແລະ ສະພາບຕົວຈິງດ້ານເສດຖະກິດ-ສັງຄົມ ຂອງ ສປປ ລາວ ຈຶ່ງກາຍເປັນປຶ້ມເຫຼັ້ມນີ້.

ຄະນະຄົ້ນຄວ້າຫວັງຢ່າງຍິ່ງວ່າ ປຶ້ມເຫຼັ້ມນີ້ຈະເປັນປະໂຫຍດແກ່ທ່ານຜູ້ປະຕິບັດວຽກງານຕົວຈິງນັກວິຊາການ, ນັກກົດໝາຍ, ນັກສຶກສາ ແລະ ຜູ້ສົນໃຈຢາກຮຽນຮູ້ຂັ້ນຕອນການສືບສວນ-ສອບສວນຄະດີອາຍາບໍ່ຫຼາຍກໍໜ້ອຍ, ພ້ອມກັນນີ້ ຫວັງວ່າຈະໄດ້ຮັບການຕຳນິຕິຊົມຈາກບັນດາທ່ານເພື່ອເປັນແນວທາງໃນການປັບປຸງແກ້ໄຂປຶ້ມເຫຼັ້ມນີ້ໃຫ້ດີຂຶ້ນໃນຂັ້ນຕໍ່ໄປ.

ຄະນະຊີ້ນຳໂຄງການ

ຮສ.ປອ ພຸດ ສິມມາລາວົງ

# ຄຳເຫັນຂອງຄະນະຊ່ຽວຊານຕໍ່ປຶ້ມສະບັບປັບປຸງ

ປຶ້ມເຫຼັ້ມນີ້ແມ່ນປຶ້ມສະບັບປັບປຸງຂອງ " ປຶ້ມຖາມ - ຕອບ ກ່ຽວກັບການສືບສວນ - ສອບສວນ " ທີ່ໄດ້ຮັບການຕີພິມໃນເດືອນ ສິງຫາ ປີ 2017 ຜ່ານມາ ຊຶ່ງເປັນຜົນງານໃນການສ້າງເອກະສານທາງດ້ານວິຊາການ ເພື່ອອ້າງອີງໃຫ້ແກ່ພາກປະຕິບັດຕົວຈິງ ຂອງກົດໝາຍທີ່ກ່ຽວຂ້ອງກັບຂົງເຂດອາຍາ ໂດຍໄດ້ຮັບການຊ່ວຍເຫຼືອຈາກໂຄງການພັດທະນາຊັບພະຍາກອນມະນຸດໃນຂົງເຂດຍຸຕິທຳຂອງ ສປປ ລາວ (ໄລຍະທີ 2).

ເພື່ອເປັນບ່ອນອ້າງອີງໃຫ້ແກ່ການປັບປຸງທາງດ້ານທິດສະດີ ແລະ ພາກປະຕິບັດຕົວຈິງຂອງວຽກງານການດຳເນີນຄະດີອາຍາ, ທາງໂຄງການໄດ້ຍົກເອົາໝາກຜົນຂອງກິດຈະກຳຕ່າງໆເຫຼົ່ານີ້ໃຫ້ເປັນຜົນສຳເລັດສ່ວນໜຶ່ງຂອງໂຄງການ. ພ້ອມກັນນັ້ນ, ກຸ່ມຄົ້ນຄວ້າກົດໝາຍອາຍາ ຊຶ່ງປະກອບດ້ວຍສະມາຊິກມາຈາກຄູ່ຮ່ວມມືຂອງໂຄງການຄື: ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ກະຊວງຍຸຕິທຳ ແລະ ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ ພ້ອມດຽວກັນນັ້ນຍັງໄດ້ຮັບການຮ່ວມມືຈາກກະຊວງປ້ອງກັນຄວາມສະຫງົບ ແລະ ສະພາທະນາຍຄວາມລາວ ເພື່ອວິເຄາະ ແລະ ຄົ້ນຄວ້າບັນຫາຕ່າງໆໃນພາກປະຕິບັດຕົວຈິງຂອງວຽກງານການດຳເນີນຄະດີອາຍາ (ຂັ້ນຕອນການສືບສວນ - ສອບສວນ) ຊຶ່ງເປັນບັນຫາທີ່ເຫັນວ່າຄວນນຳມາອ້າງອີງໃນບົດຄົ້ນຄວ້າ ແລະ ວຽກງານຕົວຈິງຂອງບັນດານັກວິຊາຊີບ ແລະ ນັກຄົ້ນຄວ້າກົດໝາຍ ຈົນສາມາດພິມອອກມາເປັນເຫຼັ້ມ. ຍິ່ງໄປກວ່ານັ້ນພາຍຫຼັງທີ່ປຶ້ມສະບັບທຳອິດໄດ້ຮັບການຕີພິມກໍ່ມີການໂຄສະນາ ແລະ ເຜີຍແຜ່ຕະຫຼອດມາ.

ໂຊກດີທີ່ປຶ້ມສະບັບທຳອິດໄດ້ຮັບການປະເມີນຢ່າງເປັນປະຈຳ ແລະ ໄດ້ຮັບສຽງຕອບຮັບຈາກຜູ້ອ່ານຢ່າງຫຼວງຫຼາຍ ໂດຍສະເພາະ ນັກວິຊາຊີບ ແລະ ນັກຄົ້ນຄວ້າກົດໝາຍ. ທັງນີ້, ເພື່ອໃຫ້ເຂົ້າໃຈງ່າຍຫຼາຍກວ່າສະບັບທຳອິດ ທາງກຸ່ມຄົ້ນຄວ້າກໍ່ໄດ້ຮັບຄວາມຮຽກຮ້ອງຕ້ອງການຈາກຜູ້ອ່ານຢາກໃຫ້ມີປຶ້ມສະບັບປັບປຸງຫືວນີ້ຂຶ້ນມາ.

ໂດຍການຕອບຮັບຄວາມຮຽກຮ້ອງດັ່ງກ່າວ, ທາງກຸ່ມຄົ້ນຄວ້າກໍ່ໄດ້ລົງມືປັບປຸງປຶ້ມສະບັບນີ້ ນັບຕັ້ງແຕ່ເດືອນ ພະຈິກ ປີ 2017, ຄຽງຄູ່ກັບ 23 ຄຳຖາມທີ່ສຳເລັດແລ້ວຈາກສະບັບທຳອິດກໍ່ໄດ້ເພີ້ມອີກ 4 ຄາຖາມໃໝ່ທີ່ເປັນບັນຫາໃນພາກປະຕິບັດຕົວຈິງໃນຂັ້ນຕອນການສືບສວນ - ສອບສວນເຂົ້າມາເພີ່ມເຕີມ. ຕໍ່ກັບຈຸດນີ້, ເພື່ອໃຫ້ເຂົ້າໃຈງ່າຍຂຶ້ນກໍ່ໄດ້ມີການເພີ່ມແຜນວາດ ແລະ ຮູບພາບຕ່າງໆ ຊຶ່ງວ່າ " ປຶ້ມຖາມ - ຕອບ ກ່ຽວກັບການສືບສວນ - ສອບສວນ " ສະບັບປັບປຸງນີ້ໄດ້ສຳເລັດໃນເດືອນ ມີນາ ປີ 2018 ຜ່ານມານີ້.

ຫວັງຢ່າງຍິ່ງວ່າ ປຶ້ມສະບັບທຳອິດກໍຄືສະບັບປັບປຸງນີ້ ຈະເປັນປະໂຫຍດຕໍ່ບັນດາທ່ານຜູ້ອ່ານ ເພື່ອນຳໃຊ້ເຂົ້າໃນການອ້າງອີງໃຫ້ແກ່ການປັບປຸງການນຳໃຊ້ ແລະ ການຈັດຕັ້ງປະຕິບັດໃນວຽກງານການດຳເນີນຄະດີອາຍາ ອີກດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖື ເປັນຢ່າງສູງ

ອົງການ JICA ໂຄງການພັດທະນາຊັບພະຍາກອນມະນຸດໃນຂົງເຂດຍຸຕິທຳ (ໄລຍະ 2)

ຄະນະຊ່ຽວຊານປະຈຳໂຄງການ

# ສາລະບານ

ໜ້າ

I. ຄວາມຮູ້ທົ່ວໄປກ່ຽວກັບການສືບສວນ-ສອບສວນ........................................ 1

ຄໍາຖາມ 1: ການສືບສວນ-ສອບສວນແມ່ນຫຍັງ ........................................ 1

ຄໍາຖາມ 2: ການສືບສວນ-ສອບສວນ ມີຄວາມສໍາຄັນແນວໃດ........................... 2

ຄໍາຖາມ 3: ການສືບສວນ-ສອບສວນ ມີຈຸດປະສົງຫຍັງ .................................. 3

ຄໍາຖາມ 4: ທະນາຍຄວາມ ສາມາດເຂົ້າຮ່ວມເພື່ອປົກປ້ອງລູກຄວາມ ຂອງຕົນໃນຂັ້ນຕອນ ການສືບສວນ-ສອບສວນໄດ້ໃນເວລາໃດ? ມີສິດ ແລະ ໜ້າທີ່ຫຍັງແດ່? ........................................................................ 5

ຄໍາຖາມ 5: ກ່ຽວກັບບຸກຄົນທີ່ຈະສາມາດເປັນຜູ້ປົກປ້ອງອື່ນ ................................ 9

II. ການເປີດການສືບສວນ-ສອບສວນ ........................................................ 12

ຄໍາຖາມ 6: ຈຸດປະສົງຂອງການອອກຄໍາສັ່ງເປີດການສືບສວນ-ສອບສວນ............. 12

ຄໍາຖາມ 7: ກໍລະນີການເຂົ້າມອບຕົວຂອງບຸກຄົນ........................................... 13

ຄໍາຖາມ 8: ກໍລະນີການລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດ............. 14

ຄໍາຖາມ 9: ຄໍາຮ້ອງຟ້ອງ, ການແຈ້ງຄວາມ ທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ແຕ່ລະອັນນັ້ນແມ່ນແນວໃດ ............................. 17

ຄໍາຖາມ 10: ການພິຈາລະນາຄໍາຮ້ອງຟ້ອງ ຫຼື ການແຈ້ງຄວາມ ......................... 19

ຄໍາຖາມ 11: ພາຍຫຼັງອົງການສືບສວນ-ສອບສວນ ຫຼື ອົງການໄອຍະການໄດ້ຮັບຄໍາຮ້ອງຟ້ອງ ຫຼື ການແຈ້ງຄວາມຂອງບຸກຄົນ ຫຼື ການຈັດຕັ້ງແລ້ວຈະດໍາເນີນການຄືແນວໃດ ................................................................. 22

ຄຳຖາມ 12: ກໍລະນີການກະທຳຜິດເກີດຂຶ້ນຢູ່ແຂວງໜຶ່ງ ແຕ່ຜົນຂອງການກະທຳຜິດ ເກີດຂຶ້ນຢູ່ແຂວງອື່ນ ການສືບສວນ-ສອບສວນຈະເປັນສິດອຳນາດຂອງ ແຂວງໃດ....................................................................... 24

III. ບາງວິທີການສືບສວນ-ສອບສວນ....................................................................... 26

ຄຳຖາມ 13: ກ່ອນເຈົ້າໜ້າທີ່ສືບສວນ-ສອບສວນຈະເອົາຄຳໃຫ້ການຂອງຜູ້ຖືກຫາໃນ ຄະດີອາຍາຕ້ອງດຳເນີນແນວໃດ .................................................. 26

ຄຳຖາມ 14: ກ່ອນເຈົ້າໜ້າທີ່ສືບສວນ-ສອບສວນ ຈະເອົາຄຳໃຫ້ການຂອງຜູ້ຖືກສົງໄສ ໃນຄະດີອາຍາຕ້ອງດຳເນີນແນວໃດ.............................................. 28

ຄຳຖາມ 15: ການເອົາຄຳໃຫ້ການຂອງຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ໃນການດຳເນີນຄະດີ ອາຍາ, ໃນກໍລະນີຂ້າງລຸ່ມນີ້ ຈຳເປັນຕ້ອງໃຊ້ຜູ້ແປພາສາ ຫຼື ບໍ່ ............... 29

15.1: ກໍລະນີ ຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ເປັນຄົນຕ່າງປະເທດທີ່ບໍ່ຮູ້ພາສາລາວ ........ .......................................................................................... 29

15.2: ກໍລະນີ ຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ເປັນຄົນລາວຊຶ່ງເປັນຄົນຊົນເຜົ່າທີ່ບໍ່ ຮູ້ພາສາລາວ (ພາສາທາງການ) .................................................. 29

15.3: ກໍລະນີ ຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ເປັນຄົນຕ່າງປະເທດ ທີ່ຮູ້ພາສາລາວ (ເວົ້າ, ອ່ານ ແລະ ຂຽນໄດ້) ..................................................... 30

ຄຳຖາມ 16: ເຈົ້າໜ້າທີ່ສືບສວນ-ສອບສວນ ຈັບຕົວ ທ້າວ ກ ອາຍຸ 16 ປີ ຊຶ່ງເປັນ ຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ມາດຳເນີນຄະດີຕາມລະບຽບກົດໝາຍ, ໃນ ການເອົາຄຳໃຫ້ການທ້າວ ກ ເຈົ້າໜ້າທີ່ຈະດຳເນີນການແນວໃດ............... 31

ຄຳຖາມ 17: ກໍລະນີການກວດຄົ້ນເຄຫະສະຖານໂດຍບໍ່ມີຄຳສັ່ງກວດຄົ້ນຂອງ ຫົວໜ້າອົງການໄອຍະການ ຫຼື ສານ ................................................. 34

ຄຳຖາມ 18: ກໍລະນີການກວດຄົ້ນເຄຫະສະຖານຕາມຄຳສັ່ງກວດຄົ້ນແຕ່ພົບເຫັນສິ່ງທີ່ຜິດ ກົດໝາຍອື່ນຊຶ່ງບໍ່ໄດ້ລະບຸໄວ້ໃນຄຳສັ່ງກວດຄົ້ນ ................................ 37

ຄຳຖາມ 19: ການກວດຄົ້ນເຮືອໂດຍບໍ່ມີຄຳສັ່ງ.......................................... ...40

ຄຳຖາມ 20: ກໍລະນີການກວດຄົ້ນຕົວບຸກຄົນ............................................................. 43

IV. ມາດຕະການສະກັດກັ້ນ ........................................................................... 46

ຄຳຖາມ 21: ການພາຕົວຜູ້ຖືກສົງໄສ, ຜູ້ຖືກຫາທີ່ບໍ່ຖືກກັກຕົວ ຫຼື ກັກຂັງພາງ, ພະຍານ, ໂຈດທາງແພ່ງ ແລະ ຜູ້ຮັບຜິດຊອບທາງແພ່ງນັ້ນ ຕ້ອງມີເງື່ອນໄຂໃດແດ່.............................................................................................. 46

ຄຳຖາມ 22: ການກັກຕົວ ........................................................................ 49

22.1 ການກັກຕົວທ້າວ ກ ຂອງເຈົ້າໜ້າທີ່ສືບສວນ-ສອບສວນໂດຍບໍ່ມີຄຳສັ່ງກັກຕົວ.............................................................................. 49

22.2: ເຈົ້າໜ້າທີ່ສືບສວນ-ສອບສວນໄດ້ກັກຕົວທ້າວ ກ ໃນຕອນແລງຂອງວັນສຸກ.............................................................................51

22.3: ເຈົ້າໜ້າທີ່ສືບສວນ-ສອບສວນໄດ້ກັກຕົວ ທ້າວ ກ ຕາມຄຳສັ່ງກັກຕົວ.............................................................................52

22.4: ເຈົ້າໜ້າທີ່ສືບສວນ-ສອບສວນໄດ້ກັກຕົວທ້າວ ກ ໂດຍມີຄຳສັ່ງກັກຕົວທີ່ຖືກຕ້ອງ.............................................................................53

ຄຳຖາມ 23: ກໍລະນີການຈັບຕົວບຸກຄົນຕາມຄຳສັ່ງຈັບຕົວ .............................. 54

ຄຳຖາມ 24: ການຈັບຕົວບຸກຄົນໃນກໍລະນີເຊິ່ງໜ້າ....................................... 57

ຄຳຖາມ 25: ການກັກຂັງພາງໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ກຳນົດເວລາໃນການກັກຂັງພາງ.............................................................................. 60

ຄຳຖາມ 26: ທິດສະດີກ່ຽວກັບການປ່ອຍຕົວພາງ ......................................... 63

26.1. ການປ່ອຍຕົວພາງແມ່ນຫຍັງ ແລະ ມີຈັກວິທີ .......................... 63

26.2. ການກະທຳຜິດທີ່ສາມາດໄດ້ຮັບການປ່ອຍຕົວພາງນັ້ນແມ່ນມີການຈຳກັດໄວ້ສະເພາະ ຫຼື ບໍ ................................................................ 63

26.3. ຜູ້ທີ່ສາມາດຮ້ອງຂໍໃຫ້ປ່ອຍຕົວພາງໄດ້ນັ້ນແມ່ນບຸກຄົນໃດ............ 64

26.4. ຊັບທີ່ຈຳເປັນໃນການຄ້ຳປະກັນການປ່ອຍຕົວພາງນັ້ນ ແມ່ນຊັບ
ແນວໃດ...................................................................................... 64

26.5. ການປ່ອຍຕົວພາງໂດຍໜ້າທີ່ຂອງອົງການໄອຍະການ ຫຼື ສານ
ນັ້ນມີກໍລະນີໃດແດ່ ............................................................... 64

ຄຳຖາມ 27: ການປ່ອຍຕົວພາງຕາມການຮ້ອງຂໍໂດຍມີຫຼັກຊັບຄ້ຳປະກັນ .............. 66

27.1. ບ່ອນຍື່ນຄຳຮ້ອງຂໍປ່ອຍຕົວພາງ........................................... 66

27.2. ເງື່ອນໄຂຂອງການປ່ອຍຕົວພາງຕາມການຮ້ອງຂໍ ....................... 66

# ອັກສອນຫຍໍ້

- ກດຍ: ໝາຍເຖິງ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ (ສະບັບປັບປຸງປີ 2012)
- ກອຍ: ໝາຍເຖິງ ກົດໝາຍອາຍາ (ສະບັບປັບປຸງປີ 2005)
- ກດດ: ໝາຍເຖິງ ກົດໝາຍວ່າດ້ວຍການດຳເນີນຄະດີເດັກ (ປີ 2013)
- ປກສ: ໝາຍເຖິງ ປ້ອງກັນຄວາມສະຫງົບ
- ສ$^{4}$: ໝາຍເຖິງ ສືບສວນ-ສອບສວນ
- ມ: ໝາຍເຖິງ ມາດຕາ

# I. ຄວາມຮູ້ທົ່ວໄປກ່ຽວກັບການສືບສວນ-ສອບສວນ

**ຄໍາຖາມ 1: ການສືບສວນ-ສອບສວນແມ່ນຫຍັງ?**

**ຄໍາຕອບ**

ການສືບສວນ-ສອບສວນ ແມ່ນການເຄື່ອນໄຫວຂອງອົງການສືບສວນ-ສອບສວນ ຫຼື ອົງການໄອຍະການ ໃນເວລາສົງໄສວ່າມີການກະທໍາຜິດທາງອາຍາເກີດຂຶ້ນ ເຊັ່ນ ມີການຮ້ອງຟ້ອງ ຫຼື ແຈ້ງຄວາມ, ມີການເຂົ້າມອບຕົວ ຫຼື ມີການພົບເຫັນຮ່ອງຮອຍຂອງການກະທໍາຜິດ (ມາດຕາ 86 ວັກ 1 ກດຍ) ເພື່ອຊອກໃຫ້ເຫັນ ຫຼື ກໍານົດຕົວຜູ້ຖືກສົງໄສ ຫຼື ຜູ້ຖືກຫາ, ເກັບໂຮມຂໍ້ມູນຫຼັກຖານ, ພິສູດ ແລະ ກວດກາຊັ່ງຊາຕີລາຄາຫຼັກຖານ ເພື່ອເປັນພື້ນຖານໃຫ້ແກ່ອົງການໄອຍະການໃນການພິຈາລະນາວ່າຈະສັ່ງຟ້ອງ ຫຼື ບໍ່ສັ່ງຟ້ອງ.

ໂດຍທົ່ວໄປແລ້ວການສືບສວນ-ສອບສວນດໍາເນີນໄດ້ກ່ອນການສັ່ງຟ້ອງຂອງອົງການໄອຍະການ, ແຕ່ເຖິງຢ່າງໃດກໍຕາມໃນກໍລະນີທີ່ສານຫາກເຫັນວ່າການສືບສວນ-ສອບສວນຍັງບໍ່ທັນຄົບຖ້ວນ ສານກໍສາມາດສົ່ງປະເດັນສອບສວນໃຫ້ອົງການໄອຍະການເພື່ອທໍາການສືບສວນ-ສອບສວນເພີ່ມເຕີມໄດ້[1] (ມາດຕາ 167 ວັກ 1 ຂໍ້ 1 ກດຍ). ການສືບສວນ-ສອບສວນເພີ່ມເຕີມທີ່ດໍາເນີນພາຍຫຼັງມີການສັ່ງຟ້ອງຂຶ້ນສານແລ້ວນັ້ນ ມີຈຸດປະສົງຢັ້ງຢືນ, ປ່ຽນແປງ[2], ເພີ່ມເຕີມການສັ່ງຟ້ອງ ແລະ ເຮັດໃຫ້ຄະດີທີ່ຖືກສັ່ງຟ້ອງດັ່ງກ່າວ ໄດ້ຮັບການພິຈາລະນາຕັດສິນຕາມກົດໝາຍ (ມາດຕາ 85 ວັກ 1 ແລະ ມາດຕາ 168 ວັກ 2 ແລະ ວັກ 3 ກດຍ).

---

[1] ອີງຕາມກົດໝາຍ ສານກໍມີສິດນໍາໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ (ມາດຕາ 51 ຂໍ້ 2, 60 ຂໍ້ 3 ແລະ 166 ວັກ 1 ກດຍ), ໃນພາກປະຕິບັດຕົວຈິງສານບໍ່ໄດ້ນໍາໃຊ້ສິດດັ່ງກ່າວແຕ່ໄດ້ສົ່ງປະເດັນສອບສວນໃຫ້ອົງການໄອຍະການດໍາເນີນການສືບສວນ-ສອບສວນເພີ່ມເຕີມ.

[2] ປ່ຽນແປງ ການສັ່ງຟ້ອງບໍ່ມີກົດໝາຍມາດຕາໃດ ໄດ້ກໍານົດໄວ້ ແຕ່ໃນຕົວຈິງແລ້ວໄດ້ມີການປະຕິບັດ, ດັ່ງນັ້ນ ໃນຕໍ່ໜ້າຄວນໃຫ້ມີລະບຽບຫຼັກການທີ່ເປັນລາຍລັກອັກສອນກໍານົດໄວ້.

**ຄຳຖາມ 2: ການສືບສວນ-ສອບສວນ ມີຄວາມສຳຄັນແນວໃດ?**

**ຄຳຕອບ**

ການສືບສວນ-ສອບສວນມີຄວາມສຳຄັນຫຼາຍຕໍ່ການດຳເນີນຄະດີອາຍາ, ຖ້າການສືບສວນ-ສອບສວນຫາກດຳເນີນບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນກໍຈະບໍ່ສາມາດພິຈາລະນາວ່າ ຈະສັ່ງຟ້ອງ ຫຼື ບໍ່ສັ່ງຟ້ອງໄດ້. ສະນັ້ນ, ການສືບສວນ-ສອບສວນຈຶ່ງເປັນພື້ນຖານໃຫ້ແກ່ການພິຈາລະນາດັ່ງກ່າວ. ນອກຈາກນັ້ນພາຍຫຼັງທີ່ມີການສັ່ງຟ້ອງແລ້ວບັນດາຫຼັກຖານທີ່ເກັບໂຮມໄດ້ໃນເວລາສືບສວນ-ສອບສວນຈະເປັນພື້ນຖານໃຫ້ແກ່ການພິຈາລະຄະດີຢູ່ສານເພາະວ່າໃນເວລາໄຕ່ສວນສານຈະຕ້ອງກວດກາ, ຊັ່ງຊາ ແລະ ຕີລາຄາຫຼັກຖານຜູກມັດທີ່ຢັ້ງຢືນຄວາມຜິດ, ຫຼັກຖານແກ້ມັດທີ່ຢັ້ງຢືນຄວາມບໍລິສຸດ ແລະ ຫຼັກຖານທີ່ກ່ຽວຂ້ອງກັບການກຳນົດໂທດຢ່າງຄົບຖ້ວນແລ້ວຈຶ່ງພິຈາລະນາຕັດສີນ. ດັ່ງນັ້ນ, ຈຶ່ງເວົ້າໄດ້ວ່າການສືບສວນ-ສອບສວນມີຄວາມສຳຄັນຫຼາຍເພາະວ່າຂໍ້ມູນຫຼັກຖານທີ່ເກັບໂຮມໄດ້ຈາກການສືບສວນ-ສອບສວນເປັນພື້ນຖານໃຫ້ແກ່ອົງການໄອຍະການໃນການພິຈາລະນາວ່າຈະສັ່ງຟ້ອງ ຫຼື ບໍ່ສັ່ງຟ້ອງ ແລະ ທັງເປັນພື້ນຖານໃຫ້ແກ່ສານໃນການພິຈາລະນາວ່າມີຄວາມຜິດ ຫຼື ບໍ່ມີຄວາມຜິດພ້ອມທັງການວາງໂທດ.

**ຄຳຖາມ 3: ການສືບສວນ-ສອບສວນ ມີຈຸດປະສົງຫຍັງ?**

**ຄຳຕອບ**

ໂດຍທົ່ວໄປແລ້ວການສືບສວນ-ສອບສວນ ມີຈຸດປະສົງເພື່ອໃຫ້ອົງການສືບສວນ-ສອບສວນ ຫຼື ອົງການໄອຍະການຊອກເຫັນຄວາມຈິງຂອງຄະດີແລ້ວນຳໄປສູ່ການພິຈາລະນາວ່າຈະສັ່ງຟ້ອງ ຫຼື ບໍ່ສັ່ງຟ້ອງເພື່ອໃຫ້ຖືກຕ້ອງ ແລະ ແທດເໝາະກັບແຕ່ລະກໍລະນີດັ່ງລຸ່ມນີ້:

1. ກໍລະນີສັ່ງຟ້ອງ ອີງໃສ່ຜົນຂອງການສືບສວນ-ສອບສວນດັ່ງກ່າວ ຖ້າຫາກມີຫຼັກຖານໜັກແໜ້ນກ່ຽວກັບຜູ້ກະທຳຜິດ ແລະ ການກະທຳຜິດ, ຫົວໜ້າອົງການໄອຍະການກໍຈະສັ່ງຟ້ອງ (ມາດຕາ 152 ວັກ 1 ຂໍ້ 5 ກດຍ)

2. ກໍລະນີບໍ່ສັ່ງຟ້ອງ ໄດ້ແກ່ກໍລະນີດັ່ງນີ້:

- ການໂຈະການສືບສວນ-ສອບສວນຄື: ຜູ້ຖືກຫາໄດ້ລີ້ຊ່ອນ, ຫຼົບຫຼີກຈາກການດຳເນີນຄະດີ ຫຼື ບໍ່ຮູ້ທີ່ຢູ່ຂອງຜູ້ກ່ຽວ; ບໍ່ສາມາດຮູ້ໄດ້ວ່າແມ່ນຜູ້ໃດເປັນຜູ້ກະທຳຜິດ; ຜູ້ຖືກຫາເຈັບປ່ວຍໜັກ ຫຼື ເປັນບ້າເສຍຈິດໂດຍມີການຢັ້ງຢືນຈາກຄະນະແພດ (ມາດຕາ 146 ວັກ 1 ກດຍ);

- ການຊັດມ້ຽນຄະດີຄື: ເມື່ອບໍ່ມີຫຼັກຖານພຽງພໍວ່າຜູ້ຖືກຫາໄດ້ເປັນຜູ້ກະທຳຜິດ; ເມື່ອມີສາເຫດໃດໜຶ່ງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;

ສາເຫດທີ່ພາໃຫ້ການດຳເນີນຄະດີອາຍາຕົກໄປ ຕາມມາດຕາ 6 ກດຍ ມີດັ່ງນີ້:

1. ຂາດເຫດການຂອງການກະທຳຜິດທາງອາຍາ (ວັກ 1 ຂໍ້ 1);

2. ຂາດອົງປະກອບຂອງການກະທຳຜິດທາງອາຍາ[3] (ວັກ 1 ຂໍ້ 2);

3. ໝົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາ (ວັກ 1 ຂໍ້ 3);

4. ມີການນິລະໂທດກຳ (ວັກ 1 ຂໍ້ 4);

5. ມີການຕົກລົງໄກ່ເກ່ຍກັນໃນຄະດີທີ່ມີການກະທຳຜິດບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມລະຫວ່າງຜູ້ຖືກເສຍຫາຍກັບຜູ້ຖືກຫາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ (ວັກ 1 ຂໍ້ 5);

---

[3] ສຳລັບເດັກອາຍຸຕ່ຳກວ່າ 15 ປີ ທີ່ມີພຶດຕິກຳຊຶ່ງເປັນອັນຕະລາຍຕໍ່ສັງຄົມນັ້ນກໍຖືວ່າຂາດອົງປະກອບຂອງການກະທຳຜິດທາງອາຍາຄືອົງປະກອບທາງດ້ານເຈົ້າກຳ (ມາດຕາ 7 ກອຍ).

6. ຂາດການຮ້ອງຟ້ອງຂອງຜູ້ຖືກເສຍຫາຍ ຫຼື ຜູ້ຖືກເສຍຫາຍຖອນຄຳຮ້ອງຟ້ອງໃນກໍລະນີການກະທຳຜິດທີ່ຈຳເປັນຕ້ອງມີຄຳຮ້ອງຟ້ອງຂອງຜູ້ເສຍຫາຍຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ (ວັກ 1 ຂໍ້ 6);

7. ການກະທຳຜິດທີ່ມີຜົນເສຍຫາຍທາງດ້ານວັດຖຸຕໍ່າກວ່າມູນຄ່າທີ່ກຳນົດໄວ້ໃນກົດໝາຍອາຍາ (ວັກ 1 ຂໍ້ 7);

8. ຜູ້ກະທຳຜິດໄດ້ເສຍຊີວິດ, ຍົກເວັ້ນກໍລະນີການເສຍຊີວິດໃນເວລາດຳເນີນຄະດີຢູ່ສານ (ວັກ 1 ຂໍ້ 8);

9. ມີຄຳສັ່ງຊັດມ້ຽນ ຫຼື ມີຄຳຕັດສີນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວກ່ຽວກັບຄະດີດຽວກັນ (ວັກ 1 ຂໍ້ 9).

- ການກະທຳຜິດຂອງເດັກທີ່ບໍ່ສົ່ງໃຫ້ສານຕັດສີນ ເດັກທີ່ມີອາຍຸແຕ່ 15 ປີ ຫາຕໍ່າກວ່າ 18 ປີ ກະທຳຜິດໃນສະຖານລະຫຸໂທດ ຫຼື ໂທສານຸໂທດທີ່ກົດໝາຍກຳນົດໂທດຕັດອິດສະຫຼະພາບຕໍ່າກວ່າ 3 ປີລົງມາ ຈະບໍ່ສົ່ງໃຫ້ສານຕັດສີນ ແລະ ຈະຖືກແກ້ໄຂຕາມກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແລະ ຕາມກົດໝາຍອາຍາ (ມາດຕາ 155 ກດຍ).

**ຄຳຖາມ 4: ທະນາຍຄວາມ ສາມາດເຂົ້າຮ່ວມເພື່ອປົກປ້ອງລູກຄວາມ ຂອງຕົນໃນຂັ້ນຕອນການສືບສວນ-ສອບສວນໄດ້ແນວໃດ? ມີສິດ ແລະ ໜ້າທີ່ຫຍັງແດ່?**

**ຄຳຕອບ**

ທະນາຍຄວາມສາມາດເຂົ້າຮ່ວມເພື່ອປົກປ້ອງລູກຄວາມຂອງຕົນໃນການສືບສວນ-ສອບສວນໄດ້ນັບແຕ່ວັນທີ່ໄດ້ຮັບການແຕ່ງຕັ້ງ, ການມອບສິດ ຫຼື ການສະເໜີ[4] ຢ່າງເປັນລາຍລັກອັກສອນຈາກຜູ້ທີ່ຈະເປັນລູກຄວາມ, ສະມາຊິກຄອບຄົວ ຫຼື ອົງການຈັດຕັ້ງທີ່ຜູ້ທີ່ຈະເປັນລູກຄວາມສັງກັດຢູ່ຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ມາດຕາ 71 ວັກ 2 ແລະ ວັກ 8 ແລະ ກົດໝາຍວ່າດ້ວຍທະນາຍຄວາມ ສະບັບປັບປຸງ ປີ 2016 ມາດຕາ 19.

ທະນາຍຄວາມຈະເຂົ້າຮ່ວມເພື່ອປົກປ້ອງລູກຄວາມຂອງຕົນໃນຂັ້ນຕອນການສືບສວນ-ສອບສວນນັ້ນແມ່ນນັບແຕ່ວັນທີໄດ້ຮັບການແຕ່ງຕັ້ງຈາກສະພາທະນາຍຄວາມ (ສຳລັບໃນກໍລະນີທີ່ກົດໝາຍກຳນົດໂທດປະຫານຊີວິດ ຫຼື ກໍລະນີທີ່ເດັກບໍ່ເຖິງກະສຽນອາຍຸທີ່ບໍ່ມີຜູ້ປົກຄອງ ຊຶ່ງເອີ້ນວ່າກໍລະນີແຕ່ງຕັ້ງທະນາຍຄວາມໃຫ້ໂດຍໜ້າທີ່) ຕາມມາດຕາ 71 ວັກສຸດທ້າຍ ຊຶ່ງໄດ້ກຳນົດໄວ້ວ່າອົງການດຳເນີນຄະດີທີ່ກ່ຽວຂ້ອງເປັນຜູ້ສະເໜີຕໍ່ສະພາທະນາຍຄວາມເພື່ອແຕ່ງຕັ້ງທະນາຍຄວາມໃຫ້ໂດຍໜ້າທີ່. ສະພາທະນາຍຄວາມຕ້ອງພິຈາລະນາແຕ່ງຕັ້ງຕາມຄຳສະເໜີຂອງອົງການດຳເນີນຄະດີອາຍາພາຍໃນກຳນົດ ເຈັດວັນ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ.

ການມອບສິດໃຫ້ທະນາຍຄວາມວ່າຄວາມນັ້ນແມ່ນການມອບສິດລະຫວ່າງລູກຄວາມ, ສະມາຊິກຄອບຄົວ ຫຼື ອົງການຈັດຕັ້ງທີ່ຜູ້ທີ່ເປັນລູກຄວາມສັງກັດຢູ່ ກັບທະນາຍຄວາມ ຊຶ່ງຕ້ອງໄດ້ຮັບການຢັ້ງຢືນຈາກໜ່ວຍສະພາທະນາຍຄວາມປະຈຳເມືອງ, ເທດສະບານ, ນະຄອນ ຫຼື ຫ້ອງການສະພາທະນາຍຄວາມປະຈຳແຂວງ, ນະຄອນຫຼວງທີ່ຕົນຂຶ້ນກັບ ຕາມມາດຕາ 19 ວັກ 2 ຂອງກົດໝາຍວ່າດ້ວຍທະນາຍຄວາມ ສະບັບປັບປຸງ ປີ 2016.

---

[4] ໃນພາກປະຕິບັດຕົວຈິງແລ້ວຂັ້ນຕອນການສະເໜີໃຫ້ທະນາຍຄວາມເຂົ້າຮ່ວມໃນການສືບສວນ-ສອບສວນນັ້ນເປັນເງື່ອນໄຂທີ່ພາໃຫ້ສະພາທະນາຍຄວາມອອກໃບແຕ່ງຕັ້ງ.

ການແຕ່ງຕັ້ງ, ການມອບສິດ ຫຼື ການສະເໜີທະນາຍຄວາມເຂົ້າຮ່ວມເພື່ອປົກປ້ອງລູກຄວາມຂອງຕົນໃນການສືບສວນ-ສອບສວນຈຳເປັນຕ້ອງເຮັດເປັນລາຍລັກອັກສອນທັງນີ້ກໍຍ້ອນວ່າເພື່ອເປັນຫຼັກຖານຢັ້ງຢືນທາງພາວະວິໄສຈະແຈ້ງຕໍ່ກັບເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການວ່າແມ່ນທະນາຍຄວາມທີ່ໄດ້ຮັບການແຕ່ງຕັ້ງ ຫຼື ມອບສິດໃຫ້ທະນາຍຄວາມເຂົ້າຮ່ວມໃນການດຳເນີນຄະດີດັ່ງກ່າວນັ້ນຂອງຜູ້ຖືກສົງໄສ, ຜູ້ຖືກຫາ, ຜູ້ຖືກເສຍຫາຍ, ໂຈດທາງແພ່ງ ຫຼື ຜູ້ຮັບຜິດຊອບທາງແພ່ງແທ້ ຫຼື ບໍ່, ຖ້າບໍ່ໄດ້ຮັບການແຕ່ງຕັ້ງ, ການມອບສິດ ຫຼື ການສະເໜີຢ່າງເປັນລາຍລັກອັກສອນ ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການກໍຈະບໍ່ໃຫ້ເຂົ້າຮ່ວມໃນການສືບສວນ-ສອບສວນທັງນີ້ກໍເພື່ອບໍ່ໃຫ້ທະນາຍຄວາມສວຍໃຊ້ໜ້າທີ່, ຕຳແໜ່ງຂອງຕົນໄປວ່າຄວາມໃນທາງທີ່ບໍ່ຖືກຕ້ອງຕາມກົດໝາຍໃນຂັ້ນຕອນການສືບສວນ-ສອບສວນ.

ທະນາຍຄວາມຂອງຜູ້ຖືກສົງໄສ, ຜູ້ຖືກຫາມີສິດຄືກັນເວັ້ນເສຍແຕ່ສິດຂອງທະນາຍຄວາມຂອງຜູ້ຖືກເສຍຫາຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງຈຶ່ງມີສິດແຕກຕ່າງກັນກັບສິດຂອງທະນາຍຄວາມຂອງຜູ້ສົງໄສ, ຜູ້ຖືກຫາບາງສິດຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ມາດຕາ 71 ວັກ 3 ນັ້ນໄດ້ກຳນົດ ສິດ ແລະ ພັນທະຂອງທະນາຍ ຄວາມແມ່ນກຳນົດໃສ່ສະເພາະທະນາຍຄວາມຂອງຜູ້ຖືກສົງໄສ, ຜູ້ຖືກຫາ ແຕ່ບໍ່ໝາຍຄວາມວ່າສິດ ແລະ ພັນທະ ທັງໝົດທີ່ໄດ້ກຳນົດໄວ້ໃນມາດຕາດັ່ງກ່າວຈະບໍ່ແມ່ນສິດຂອງທະນາຍ ຄວາມຂອງຜູ້ຖືກເສຍຫາຍ, ໂຈດທາງແພ່ງ ແລະ ຜູ້ຮັບຜິດຊອບທາງແພ່ງທັງໝົດ ຍ້ອນວ່າໃນມາດຕາ 71 ວັກ 3 ນັ້ນເປັນທີ່ຊັດເຈນແລ້ວວ່າເປັນຂໍ້ກຳນົດທີ່ສະເພາະເຈາະຈົງເຖິງທະນາຍ ຄວາມຂອງຜູ້ທີ່ຖືກກັກຕົວ, ຜູ້ຖືກກັກຂັງພາງເທົ່ານັ້ນ. ສະນັ້ນຈຶ່ງເຫັນວ່າຂໍ້ກຳນົດນີ້ເປັນສິດສະເພາະຂອງທະນາຍຄວາມຂອງຜູ້ຖືກສົງໄສ, ຜູ້ຖືກຫາ.

ໃນຂັ້ນຕອນການສືບສວນ-ສອບສວນທະນາຍຄວາມຂອງຜູ້ຖືກສົງໄສ, ຜູ້ຖືກຫາ ແລະ ທະນາຍຄວາມຂອງຜູ້ຖືກເສຍຫາຍ, ໂຈດທາງແພ່ງ ແລະ ຜູ້ຮັບຜິດຊອບທາງແພ່ງມີຄວາມແຕກຕ່າງກັນບາງສິດດັ່ງນີ້[5]:

[5] ເຄື່ອງໝາຍ ✓ ແມ່ນມີສິດ, ເຄື່ອງໝາຍ X ແມ່ນບໍ່ມີສິດ

| ລ/ດ | ເນື້ອໃນສິດ ແລະ ໜ້າທີ່ຂອງທະນາຍຄວາມ | ທະນາຍຄວາມຂອງ | | | | |
|---|---|---|---|---|---|---|
| | | ຜູ້ຖືກສົງໄສ | ຜູ້ຖືກຫາ | ຜູ້ຖືກເສຍຫາຍ | ໂຈດທາງແພ່ງ | ຜູ້ຮັບຜິດຊອບທາງແພ່ງ |
| 1 | ພົບກັບຜູ້ທີ່ຈະເປັນລູກຄວາມ ຫຼື ລູກຄວາມຕາມການສະເໜີຂອງຜູ້ກ່ຽວ ພາຍຫຼັງຖືກກັກຕົວ, ຈັບຕົວ ຫຼື ຖືກກັກຂັງພາງ ມາດຕາ 71 ວັກ 3 ຂໍ້ 1. | ✓ | ✓ | × | × | × |
| 2 | ຮັບຊາບຂໍ້ກ່າວຫາໃສ່ລູກຄວາມ ແລະ ເຂົ້າຮ່ວມຮັບຟັງການເອົາຄໍາໃຫ້ການຂອງລູກຄວາມຕົນ ມາດຕາ 71 ວັກ 3 ຂໍ້ 2. | ✓ | ✓ | × | × | × |
| 3 | ເບິ່ງເອກະສານຢູ່ໃນສໍານວນຄະດີ, ສໍາເນົາ ຫຼື ກ່າຍເອົາເນື້ອໃນເອກະສານ ມາດຕາ 71 ວັກ 3 ຂໍ້ 3 | ✓ | ✓ | ✓ | ✓ | ✓ |
| 4 | ສະເໜີຫຼັກຖານ ແລະ ພະຍານ ມາດຕາ 71 ວັກ 3 ຂໍ້ 4 | ✓ | ✓ | ✓ | ✓ | ✓ |
| 5 | ສະເໜີຄ້ານຕົວ ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການ, ຜູ່ຊ່ຽວຊານ, ຜູ່ຊໍານານງານ ຫຼື ຜູ້ແປພາສາ ມາດຕາ 71 ວັກ 3 ຂໍ້ 5 | ✓ | ✓ | ✓ | ✓ | ✓ |
| 6 | ຄັດຄ້ານ ຫຼື ຮ້ອງທຸກຕໍ່ການກະທໍາທີ່ບໍ່ຖືກ ຕ້ອງ ຫຼື ບໍ່ເໝາະສົມຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມາດຕາ 71 ວັກ 3 ຂໍ້ 7. | ✓ | ✓ | ✓ | ✓ | ✓ |
| 7 | ຂໍອຸທອນ, ຂໍລົບລ້າງຄໍາສັ່ງ ຂອງຫົວໜ້າອົງ ການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ມາດຕາ 71 ວັກ 3 ຂໍ້ 8 | ✓ | ✓ | ✓ | ✓ | ✓ |
| 8 | ສະເໜີປະກັນຕົວ ການປ່ອຍຕົວພາງ ລູກຄວາມ ຂອງຕົນ ຕາມລະບຽບກົດໝາຍ ມາດຕາ 71 ວັກ 3 ຂໍ້ 9 | ✓ | ✓ | × | × | × |
| 9 | ໃຫ້ການຮ່ວມມືໃນການນໍາຕົວຂອງລູກຄວາມຂອງຕົນ ທີ່ຖືກປ່ອຍຕົວພາງ ເຂົ້າມາອົງການໄອຍະການ ມາດຕາ 71 ວັກ 3 ຂໍ້ 10 | ✓ | ✓ | × | × | × |
| 10 | ໄດ້ຮັບການແຕ່ງຕັ້ງເປັນທະນາຍຄວາມໃນກໍລະນີການກະທໍາຜິດທີ່ກົດໝາຍກໍານົດໂທດປະຫານຊີວິດ ແລະ ການກະທໍາຜິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ມາດຕາ 71 ວັກ 3 ຂໍ້ 11 | ✓ | ✓ | × | × | × |
| 11 | ຮັບໝາຍຮຽກໃຫ້ລູກຄວາມຂອງຕົນເຂົ້າຮ່ວມໃນການດໍາເນີນຄະດີ ມາດຕາ 71 ວັກ 3 ຂໍ້ 12 | ✓ | ✓ | ✓ | ✓ | ✓ |

| | | | | | | |
|---|---|---|---|---|---|---|
| 12 | ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ມາດຕາ 71 ວັກ 3 ຂໍ້ 13 | ✓ | ✓ | ✓ | ✓ | ✓ |

ອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 71 ວັກ 3 ຂໍ້ 3 ທະນາຍຄວາມມີສິດເບິ່ງເອກະສານຢູ່ໃນສຳນວນຄະດີ, ສຳເນົາ ຫຼື ກ່າຍເອົາເນື້ອໃນເອກະສານໄດ້ທຸກຢ່າງ. ເຖິງຢ່າງໃດກໍຕາມໃນທາງປະຕິບັດເຈົ້າໜ້າທີ່ສືບສວນ-ສອບສວນບໍ່ສາມາດໃຫ້ເບິ່ງ ຫຼື ຈົດກ່າຍເອົາເອກະສານທີ່ເປັນຄວາມລັບໃນສຳນວນຄະດີນັ້ນໄດ້[6].

[6] ຄຳຄິດເຫັນຂອງກຸ່ມເຫັນວ່າ ສາມາດໃຫ້ເບິ່ງໄດ້ເອກະສານຈຳນວນໜຶ່ງເທົ່ານັ້ນຍ້ອນວ່າຂໍ້ມູນ ແລະ ຫຼັກຖານທີ່ໄດ້ມານັ້ນຜ່ານການພິສູດຈະແຈ້ງ ຢັ້ງຢືນໄດ້ວ່າມີມູນຄວາມຈິງ ແລະ ບໍ່ມີຜົນກະທົບຕໍ່ຜູ້ຖືກເສຍຫາຍ ແລະ ພະຍານ ໃນນີ້ເພື່ອໃຫ້ທະນາຍຄວາມຮູ້ວ່າເຈົ້າໜ້າທີ່ໄດ້ປະຕິບັດຖືກຕ້ອງຕາມຂັ້ນຕອນຂອງກົດໝາຍ; ບາງເອກະສານເຈົ້າໜ້າທີ່ບໍ່ທັນໃຫ້ເບິ່ງໄດ້ຍ້ອນວ່າ ຂໍ້ມູນ ແລະ ຫຼັກຖານທີ່ໄດ້ມານັ້ນ ບາງອັນຍັງບໍ່ທັນໄດ້ພິສູດຄົບຖ້ວນເຖິງທີ່ມາ ແລະ ເພື່ອປ້ອງກັນບໍ່ໃຫ້ໄປທຳລາຍຫຼັກຖານ. ເອກະສານໃດທີ່ສາມາດໃຫ້ເບິ່ງໄດ້ ຫຼື ບໍ່ສາມາດໃຫ້ເບິ່ງໄດ້ນັ້ນ ບໍ່ສາມາດກຳນົດເປັນຕົວຢ່າງໃນປຶ້ມຄູ່ມືນີ້ໄດ້.

**ຄຳຖາມ 5: ບຸກຄົນໃດແດ່ ທີ່ຈະສາມາດເປັນຜູ້ປົກປ້ອງອື່ນເພື່ອເຂົ້າຮ່ວມໃນຂັ້ນຕອນການສືບສວນ-ສອບສວນໄດ້? ຜູ້ປົກປ້ອງອື່ນສາມາດເຂົ້າຮ່ວມໄດ້ໃນເວລາໃດ? ບຸກຄົນດັ່ງກ່າວມີສິດ ແລະ ພັນທະ ຫຍັງແດ່?**

**ຄຳຕອບ**

ຜູ້ປົກປ້ອງອື່ນ ແມ່ນບຸກຄົນທີ່ເຂົ້າຮ່ວມໃນການດຳເນີນຄະດີອາຍາ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ຜູ້ຖືກຫາ ຫຼື ຈຳເລີຍ, ຜູ້ຖືກເສຍຫາຍ, ໂຈດທາງແພ່ງ ຫຼື ຜູ້ຮັບຜິດຊອບທາງແພ່ງ (ມາດຕາ 71 ວັກ 5 ກດຍ). ເຖິງວ່າມາດຕາດັ່ງກ່າວນີ້ ບໍ່ໄດ້ກຳນົດເຖິງເປົ້າໝາຍການປົກປ້ອງຜູ້ຖືກສົງໄສ ກໍຕາມແຕ່ເພື່ອຮັບປະກັນສິດໃນການຕໍ່ສູ້ຄະດີ ກໍສາມາດຕີຄວາມໝາຍໄດ້ວ່າຜູ້ຖືກສົງໄສ ກໍມີສິດເອົາຜູ້ປົກປ້ອງອື່ນໄດ້ (ມາດຕາ 14 ວັກ 1 ກດຍ).

ບຸກຄົນທີ່ສາມາດເປັນຜູ້ປົກປ້ອງອື່ນໃນການເຂົ້າຮ່ວມການສືບສວນ-ສອບສວນມີ 2 ກໍລະນີຄື ການມອບສິດ ແລະ ຕາມການກຳນົດຂອງກົດໝາຍ.

1. **ຜູ້ຕາງໜ້າທີ່ໄດ້ຮັບການຮັບມອບສິດ** ແມ່ນບຸກຄົນທີ່ມີສິດຕໍ່ສູ້ຄະດີ ໂດຍມີການມອບສິດ ຫຼື ການມອບໝາຍຈາກຜູ້ທີ່ຕົນປົກປ້ອງ. ກົດໝາຍວ່າດ້ວຍການດຳເນີນຄະດີອາຍາບໍ່ໄດ້ກຳນົດເວລາໃນການເຂົ້າຮ່ວມປົກປ້ອງ ແຕ່ໃນທາງປະຕິບັດແລ້ວຜູ້ໄດ້ຮັບມອບສິດຈະເຂົ້າຮ່ວມໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ທີ່ຕົນປົກປ້ອງໃນຂັ້ນຕອນການສືບສວນ-ສອບສວນໄດ້ນັບແຕ່ວັນທີ່ຕົນໄດ້ຮັບການມອບສິດຢ່າງເປັນລາຍລັກອັກສອນຈາກຜູ້ທີ່ຕ້ອງການໃຫ້ປົກປ້ອງ ແລະ ໄດ້ຮັບການເຊັນຢັ້ງຢືນຈາກອົງການປົກຄອງບ້ານເປັນຕົ້ນໄປເທົ່າ.

2. **ຜູ້ຕາງໜ້າຕາມກົດໝາຍ** ແມ່ນບຸກຄົນທີ່ມີສິດຕໍ່ສູ້ຄະດີໂດຍບໍ່ມີການແຕ່ງຕັ້ງ ຫຼື ການມອບສິດຈາກຜູ້ທີ່ຕົນປົກປ້ອງ ເຊັ່ນ: ພໍ່, ແມ່, ຜົວ ຫຼື ເມຍ, ລູກ, ຜູ້ປົກຄອງ ຈະເຂົ້າຮ່ວມດຳເນີນການສືບສວນ-ສອບສວນ ໃນເວລາໃດກໍໄດ້ບໍ່ຈຳເປັນມີໃບມອບສິດ (ມາດຕາ 71 ວັກ 6 ກດຍ).

ຜູ້ປົກປ້ອງອື່ນຂອງຜູ້ຖືກສົງໄສ, ຜູ້ຖືກຫາ ແລະ ຜູ້ຖືກເສຍຫາຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ ມີສິດຄືກັນກັບສິດຂອງທະນາຍຄວາມ ຍົກເວັ້ນສິດທີ່ຈະໄດ້ຮັບການແຕ່ງຕັ້ງໃຫ້ເປັນຜູ້ປົກປ້ອງຜູ້ຖືກສົງໄສ ຫຼື ຜູ້ຖືກຫາໃນກໍລະນີທີ່ກົດໝາຍໄດ້ກຳນົດໂທດປະຫານຊີວິດ ແລະ ການກະທຳຜິດອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ (ມາດຕາ 71 ວັກ 3 ຂໍ້ 11 ກດຍ).

ໃນຂັ້ນຕອນການສືບສວນ-ສອບສວນຜູ້ປົກປ້ອງອື່ນຂອງຜູ້ຖືກສົງໄສ, ຜູ້ຖືກຫາ ແລະ ຜູ້ຖືກເສຍຫາຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ ມີສິດແຕກຕ່າງກັນບາງສິດດັ່ງນີ້[7]:

| | | ທະນາຍຄວາມຂອງ | | | | |
|---|---|---|---|---|---|---|
| ລ/ດ | ສິດຂອງຜູ້ປົກປ້ອງອື່ນ | ຜູ້ຖືກສົງໄສ | ຜູ້ຖືກຫາ | ຜູ້ຖືກເສຍຫາຍ | ໂຈດທາງແພ່ງ | ຜູ້ຮັບຜິດຊອບທາງແພ່ງ |
| 1 | ພົບກັບຜູ້ທີ່ໃຫ້ປົກປ້ອງ ຫຼື ຜູ້ທີ່ຈະໃຫ້ປົກປ້ອງຕາມການສະເໜີຂອງຜູ້ກ່ຽວ ພາຍຫຼັງຖືກກັກຕົວ, ຈັບຕົວ ຫຼື ຖືກກັກຂັງພາງ (ມ 71 ວັກ 3 ຂໍ້ 1) | ✓ | ✓ | × | × | × |
| 2 | ຮັບຊາບຂໍ້ສົງໄສ ຫຼື ຂໍ້ກ່າວຫາໃສ່ຜູ້ທີ່ຕົນປົກປ້ອງ ແລະ ເຂົ້າຮ່ວມຮັບຟັງການເອົາຄຳໃຫ້ການຂອງຜູ້ທີ່ຕົນປົກປ້ອງ (ມ 71 ວັກ 3 ຂໍ້ 2) | ✓ | ✓ | × | × | × |
| 3 | ເບິ່ງເອກະສານຢູ່ໃນສຳນວນຄະດີ, ສຳເນົາ ຫຼື ກ່າຍເອົາເນື້ອໃນເອກະສານ (ມ 71 ວັກ 3 ຂໍ້ 3) | ✓ | ✓ | ✓ | ✓ | ✓ |
| 4 | ສະເໜີຫຼັກຖານ ແລະ ພະຍານ (ມ 71 ວັກ 3 ຂໍ້ 4) | ✓ | ✓ | ✓ | ✓ | ✓ |
| 5 | ສະເໜີຄ້ານຕົວ ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການ, ຜູ້ຊ່ຽວຊານ, ຜູ້ຊຳນານງານ ຫຼື ຜູ້ແປພາສາ (ມ 71 ວັກ 3 ຂໍ້ 5) | ✓ | ✓ | ✓ | ✓ | ✓ |
| 6 | ຄັດຄ້ານ ຫຼື ຮ້ອງທຸກຕໍ່ການກະທຳທີ່ບໍ່ຖືກຕ້ອງ ຫຼື ບໍ່ເໝາະສົມຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ (ມ 71 ວັກ 3 ຂໍ້ 7) | ✓ | ✓ | ✓ | ✓ | ✓ |
| 7 | ຂໍອຸທອນ, ຂໍລົບລ້າງຄຳສັ່ງ ຂອງຫົວໜ້າອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ (ມ 71 ວັກ 3 ຂໍ້ 8) | ✓ | ✓ | ✓ | ✓ | ✓ |
| 8 | ສະເໜີປະກັນຕົວ, ການປ່ອຍຕົວພາງ ຜູ້ທີ່ຕົນປົກປ້ອງ ຕາມລະບຽບກົດໝາຍ[8] (ມ 71 ວັກ 3 ຂໍ້ 9) | ✓ | ✓ | × | × | × |
| 9 | ຮັບໝາຍຮຽກໃຫ້ຜູ້ທີ່ຕົນປົກປ້ອງເຂົ້າຮ່ວມໃນການດຳເນີນຄະດີ (ມ 71 ວັກ 3 ຂໍ້ 12) | ✓ | ✓ | ✓ | ✓ | ✓ |
| 10 | ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ (ມ 71 ວັກ 3 ຂໍ້ 13) | ✓ | ✓ | ✓ | ✓ | ✓ |

[7] ເຄື່ອງໝາຍ ✓ ແມ່ນມີສິດ, ເຄື່ອງໝາຍ X ແມ່ນບໍ່ມີສິດ

[8] 1 ການສະເໜີປະກັນຕົວຜູ້ຖືກສົງໄສບໍ່ມີກົດໝາຍມາດຕາໃດກຳນົດໄວ້ແຕ່ໃນຕົວຈິງແລ້ວໄດ້ປະຕິບັດໃນກໍລະນີຜູ້ຖືກສົງໄສທີ່ຖືກກັກຕົວໄວ້ພາຍໃນກຳນົດ 48 ຊົ່ວໂມງໂດຍມີຄຳສັ່ງກັກຕົວຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການດ້ວຍການສະເໜີຕໍ່ຫົວໜ້າອົງການສືບສວນ-ສອບສວນເພື່ອພິຈາລະນາໃຫ້ປະກັນຕົວດ້ວຍການວາງເງິນຄໍ້າປະກັນຕາມແຕ່ລະກໍລະນີ.

ນອກຈາກມີສິດແລ້ວ ຜູ້ປົກປ້ອງອື່ນຍັງມີພັນທະ (ຕາມມາດຕາ 71 ວັກ 7) ດັ່ງນີ້[9]:

1. ນຳໃຊ້ວິທີການປົກປ້ອງ ທີ່ໄດ້ກຳນົດໄວ້ໃນກົດໝາຍ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ທີ່ຕົນປົກປ້ອງ;

2. ເຂົ້າມາຕາມໝາຍຮຽກຂອງອົງການດຳເນີນຄະດີ;

3. ຮັກສາຄວາມລັບໃນການດຳເນີນຄະດີ;

4. ປະກອບສ່ວນຊອກຫາຫຼັກຖານ ເພື່ອເຮັດໃຫ້ການດຳເນີນຄະດີຖືກຕ້ອງ ແລະ ຍຸຕິທຳ.

---

2 ການສະເໜີປະກັນຕົວຜູ້ຖືກຫາແມ່ນກໍລະນີຜູ້ຖືກຫາທີ່ຖືກກັກຕົວຢູ່ໃນໄລຍະ 48 ຊົ່ວໂມງແຕ່ຍັງ ບໍ່ທັນມີຄຳສັ່ງກັກຂັງພາງຂອງຫົວໜ້າອົງການໄອຍະການ, ການສະເໜີປະກັນຕົວນີ້ຕ້ອງສະເໜີຕໍ່ຫົວໜ້າອົງການສືບສວນ-ສອບສວນ ຫຼື ພະນັກງານໄອຍະການປ່ອນດຳເນີນການສືບສວນ-ສອບສວນ.

[9] ມາດຕາ 71 ວັກ 3 ຂໍ້10 ກດຍ ໄດ້ກຳນົດໄວ້ວ່າ ການໃຫ້ການຮ່ວມມືໃນການນຳຕົວລູກຄວາມຂອງຕົນທີ່ຖືກປ່ອຍຕົວພາງເຂົ້າມາສານ ຫຼື ອົງການໄອຍະການ ເປັນໜ້າທີ່ຂອງທະນາຍຄວາມ. ອີງໃສ່ມາດຕາ 71 ວັກ 4 ກໍກຳນົດພຽງແຕ່ວ່າ ຜູ້ປົກປ້ອງອື່ນ ມີສິດຄືກັບສິດຂອງທະນາຍຄວາມ ແຕ່ບໍ່ໄດ້ກຳນົດວ່າ ມີໜ້າທີ່ຄືກັບໜ້າທີ່ຂອງທະນາຍຄວາມ. ສຳລັບພັນທະຂອງຜູ້ປົກປ້ອງອື່ນທີ່ກຳນົດໄວ້ໃນມາດຕາ 71 ວັກ 7 ກດຍ ນັ້ນກໍບໍ່ມີເນື້ອໃນກົງກັບມາດຕາ 71 ວັກ 3 ຂໍ້ 10 ກດຍ. ໝາຍຄວາມວ່າອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາແລ້ວການໃຫ້ຄວາມຮ່ວມມືໃນການນຳຕົວລູກຄວາມທີ່ຖືກປ່ອຍຕົວພາງເຂົ້າມາສານ ຫຼື ອົງການໄອຍະການນັ້ນ ບໍ່ໄດ້ຖືກກຳນົດໄວ້ຢ່າງຈະແຈ້ງວ່າເປັນໜ້າທີ່ ຫຼື ພັນທະຂອງຜູ້ປົກປ້ອງອື່ນ.

## II. ການເປີດການສືບສວນ-ສອບສວນ

**ຄຳຖາມ 6: ຈຸດປະສົງຂອງການອອກຄຳສັ່ງເປີດການສືບສວນ-ສອບສວນ ມີຄືແນວໃດ?**

**ຄຳຕອບ**

ການອອກຄຳສັ່ງເປີດການສືບສວນ-ສອບສວນ ມີ 3 ຈຸດປະສົງດັ່ງນີ້:

1. ເຮັດໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການໄດ້ດຳເນີນການສືບສວນ-ສອບສວນ, ນຳໃຊ້ວິທີການສືບສວນ-ສອບສວນ ລວມທັງນຳໃຊ້ມາດຕະການສະກັດກັ້ນຕາມຂັ້ນຕອນຂອງກົດໝາຍໄດ້ຢ່າງເຕັມສ່ວນ (ມາດຕາ 95 ວັກ 3 ກດຍ);

2. ເປັນການມອບໃຫ້ຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການປະຊາຊົນຜູ້ທີ່ມີສິດອຳນາດນັ້ນໄດ້ຄົ້ນຄວ້າພິຈາລະນາ ແລະ ກວດກາຂໍ້ມູນຫຼັກຖານຢັ້ງຢືນຄວາມຜິດ ແລະ ລະດັບຄວາມສົງໄສຕໍ່ຜູ້ຖືກສົງໄສ, ແກ້ໄຂຄະດີ ຫຼື ຕັດສິນບັນຫາໃຫ້ຖືກຕ້ອງຕາມແຕ່ລະກໍລະນີ. ການອອກຄຳສັ່ງເປີດການສືບສວນ-ສອບສວນຕ້ອງໃຫ້ມີຄວາມລະອຽດຖີ່ຖ້ວນ ພາວະວິໄສໃຫ້ຖືກຕາມຂໍ້ກ່າວຫາ ແລະ ເງື່ອນໄຂຂອງການອອກຄຳສັ່ງເປີດການສືບສວນ-ສອບສວນ (ມາດຕາ 91 ກດຍ);

3. ເປັນການເລີ່ມຕົ້ນເປີດຂັ້ນຕອນການສືບສວນ-ສອບສວນຢ່າງເປັນທາງການ, ປ່ຽນຖານະຜູ້ຖືກສົງໄສມາເປັນຜູ້ຖືກຫາ (ມາດຕາ 3 ຂໍ້ 12 ກດຍ) ທັງເປັນການກຳນົດໄລຍະເວລາຂອງການສືບສວນ-ສອບສວນໄວ້ໃນແຕ່ລະສະຖານຂອງການກະທຳຜິດ (ມາດຕາ 110 ກດຍ).

ຄຳສັ່ງເປີດການສືບສວນ-ສອບສວນອອກໂດຍຫົວໜ້າອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການໃນກໍລະນີທີ່ມີຂໍ້ມູນໜັກແໜ້ນກ່ຽວກັບການກະທຳຜິດ (ມາດຕາ 91 ກດຍ). ການເປີດການສືບສວນ-ສອບສວນດຳເນີນໄດ້ 2 ກໍລະນີຄື: ເປີດໃສ່ເຫດການຂອງການກະທຳຜິດໃນກໍລະນີທີ່ພົບເຫັນຮ່ອງຮອຍຂອງການກະທຳຜິດ ແຕ່ບໍ່ສາມາດຮູ້ໄດ້ວ່າບຸກຄົນໃດເປັນຜູ້ກະທຳຜິດ ແລະ ເປີດໃສ່ບຸກຄົນໃນກໍລະນີທີ່ຮູ້ວ່າບຸກຄົນໃດໜຶ່ງເປັນຜູ້ກະທຳຜິດ.

**ຄຳຖາມ 7: ການເຂົ້າມອບຕົວຂອງບຸກຄົນຕໍ່ອົງການສືບສວນ-ສອບສວນ ຫຼື ອົງການໄອຍະການຍ້ອນຖືກກົດດັນ, ຖືກບັງຄັບດ້ານຈິດໃຈຈາກເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ບຸກຄົນອື່ນ ເປັນກໍລະນີການເຂົ້າມອບຕົວທີ່ເປັນສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນ ຫຼື ບໍ່?**

**ຄຳຕອບ**

ກົດໝາຍໄດ້ກຳນົດວ່າ ການເຂົ້າມອບຕົວເປັນສາເຫດໜຶ່ງທີ່ພາໃຫ້ເປີດການສືບສວນ-ສອບສວນ (ມາດຕາ 86 ວັກ 1 ຂໍ້ 2 ກດຍ), ສ່ວນມາດຕາ 88 ວັກ 1 ໄດ້ກຳນົດເນື້ອໃນກ່ຽວກັບການເຂົ້າມອບຕົວໂດຍກຳນົດວ່າ ການເຂົ້າມອບຕົວແມ່ນການເຂົ້າສະເໜີຕົວຂອງບຸກຄົນໃດໜຶ່ງດ້ວຍຄວາມສະໝັກໃຈ. ການເຂົ້າສະເໜີຕົວດ້ວຍຄວາມສະໝັກໃຈ ໝາຍເຖິງການສະແດງເຈດຈຳນົງ, ຄວາມຕື່ນຕົວເພື່ອສາລະພາບການກະທຳຂອງຕົນໂດຍບໍ່ມີການບັງຄັບນາບຂູ່ ຫຼື ກົດດັນທາງຮ່າງກາຍຈາກບຸກຄົນອື່ນ ຫຼື ຈາກອົງການຈັດຕັ້ງ.

ໃນກໍລະນີມີການຖືກກົດດັນທາງດ້ານຈິດໃຈ, ມີຄວາມຢ້ານກົວ ແລະ ຢ້ານໜີຄວາມຜິດບໍ່ພົ້ນ, ຖືກກົດດັນຈາກບຸກຄົນອື່ນ ຫຼື ອົງການຈັດຕັ້ງໂດຍບໍ່ໄດ້ມີການໃຊ້ຄວາມຮຸນແຮງ ຫຼື ການຄຸມຕົວມາມອບຕົວຊຶ່ງແມ່ນກໍລະນີທີ່ບໍ່ໄດ້ຖືກບັງຄັບທາງຮ່າງກາຍກໍໃຫ້ຖືວ່າແມ່ນການເຂົ້າມອບຕົວເຊັ່ນດຽວກັນ.

ການເຂົ້າມອບຕົວນີ້ໃນມາດຕາ 40 ຂໍ້ 8 ຂອງກົດໝາຍອາຍາກໍໄດ້ກຳນົດໄວ້ເຊັ່ນດຽວກັນ ແຕ່ມາດຕາດັ່ງກ່າວກຳນົດການເຂົ້າມອບຕົວນັ້ນແມ່ນການເຂົ້າມອບຕົວຂອງຜູ້ກະທຳຜິດທີ່ຮູ້ສຶກກິນແໜງແຄງໃຈແລ້ວຈິງໃຈມອບຕົວຕໍ່ເຈົ້າໜ້າທີ່ເພື່ອຮັບສາລະພາບ ແລະ ເປີດເຜີຍການກະທຳຜິດຂອງຕົນ ແລະ ການກະທຳຜິດຂອງຜູ້ອື່ນ, ການເຂົ້າມອບຕົວໃນກໍລະນີນີ້ເຫັນວ່າມີຄວາມໝາຍແຄບກວ່າການເຂົ້າມອບຕົວທີ່ພາໃຫ້ເປັນສາເຫດເປີດການສືບສວນ-ສອບສວນຍ້ອນວ່າການເຂົ້າມອບຕົວຕາມກົດໝາຍອາຍານີ້ບໍ່ພຽງແຕ່ເປັນສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນເທົ່ານັ້ນ ແຕ່ເປັນສາເຫດທີ່ພາໃຫ້ມີການຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາອີກດ້ວຍ.

**ຄຳຖາມ 8: ທ້າວ ກ ໄດ້ລະເມີດກົດຈະລາຈອນ ທີ່ພາໃຫ້ເກີດອຸບປະຕິເຫດເຮັດໃຫ້ທ້າວ ຂ ໄດ້ຮັບບາດເຈັບສາຫັດ ແຕ່ໄດ້ມີການຕົກລົງໃຊ້ແທນຄ່າເສຍຫາຍທາງແພ່ງໃຫ້ແກ່ທ້າວ ຂ ແລ້ວ, ຈາກນັ້ນທ້າວ ກ ຈຶ່ງເຂົ້າໄປສະເໜີຕົວຕໍ່ອົງການສືບສວນ-ສອບສວນ ເພື່ອລາຍງານກ່ຽວກັບການກະທຳຂອງຕົນ. ການເຂົ້າມາສະເໜີຕົວຂອງທ້າວ ກ ນີ້ເປັນສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນ ຫຼື ບໍ່?**

**ຄຳຕອບ**

ມາດຕາ 86 ວັກ 1 ຂໍ້ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ກຳນົດໄວ້ວ່າການເຂົ້າມອບຕົວຂອງຜູ້ກະທຳຜິດເປັນສາເຫດໜຶ່ງທີ່ພາໃຫ້ເປີດການສືບສວນ-ສອບສວນ ແລະ ພ້ອມກັນນັ້ນ, ມາດຕາ 92 ຂອງກົດໝາຍດັ່ງກ່າວຍັງໄດ້ກຳນົດກ່ຽວກັບສາເຫດທີ່ບໍ່ພາໃຫ້ເປີດການສືບສວນ-ສອບສວນໄວ້ອີກ. ເມື່ອສົມທຽບກັບກໍລະນີຂອງ ທ້າວ ກ ນີ້ແລ້ວຈະເຫັນວ່າຖ້າຫາກບໍ່ມີສາເຫດໃດໜຶ່ງຕາມມາດຕາ 92, ການເຂົ້າມອບຕົວຕໍ່ເຈົ້າໜ້າທີ່ ກໍຈະເປັນສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນ ຕາມມາດຕາ 86 ວັກ 1 ຂໍ້ 2. ສະນັ້ນ, ຕ້ອງໄດ້ພິຈາລະນາວ່າກໍລະນີຂອງ ທ້າວ ກ ຂ້າງເທິງນີ້ຈະເປັນ ຫຼື ບໍ່ເປັນສາເຫດທີ່ບໍ່ພາໃຫ້ເປີດການສືບສວນ-ສອບສວນຕາມມາດຕາ 92.

ສາເຫດທີ່ບໍ່ພາໃຫ້ເປີດການສືບສວນ-ສອບສວນຕາມມາດຕາ 92 ນີ້ມີ 1 ໃນ 2 ສາເຫດຄື: ບໍ່ມີຂໍ້ມູນຫຼັກຖານໜັກແໜ້ນ ຫຼື ມີສາເຫດໃດໜຶ່ງຕາມທີ່ກຳນົດໄວ້ໃນມາດຕາ 6 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ. ຄະດີທີ່ມີການກະທຳຜິດທີ່ບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມຖ້າຫາກມີການຕົກລົງໄກ່ເກ່ຍໃຊ້ແທນຄ່າເສຍຫາຍກັນລະຫວ່າງຜູ້ຖືກເສຍຫາຍ ແລະ ຜູ້ຖືກຫາຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ວັກ 1 ຂໍ້ 5 ຈະກົງກັບສາເຫດທີ່ພາໃຫ້ການດຳເນີນຄະດີອາຍານັ້ນຕົກໄປ ແລະ ກົງກັບສາເຫດທີ່ບໍ່ພາໃຫ້ເປີດການສືບສວນ-ສອບສວນ (ມາດຕາ 92 ຂໍ້ 2 ແລະ ມາດຕາ 6 ວັກ 1 ຂໍ້ 5 ກດຍ).

ການກະທຳຜິດທີ່ບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ ຕາມທີ່ກຳນົດໄວ້ໃນມາດຕາ 6 ວັກ 1 ຂໍ້ 5 ນັ້ນໝາຍເຖິງບັນດາການກະທຳຜິດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍອາຍາເທົ່ານັ້ນ ເຊັ່ນ ການທຳຮ້າຍຮ່າງກາຍລະຫວ່າງຍາດໃກ້ຊິດທີ່ບໍ່ມີບາດເຈັບສາຫັດ ຫຼື ບໍ່ເສຍອົງຄະ, ການນິນທາ, ການໃສ່ຮ້າຍ, ການປ້ອຍດ່າ, ການໝິ່ນປະໝາດຊາກສົບ ຫຼື ຊື່ສຽງ

ຂອງຜູ້ຕາຍ, ການກະທຳຜິດຕໍ່ກຳມະສິດສ່ວນຕົວຂອງຍາດໃກ້ຊິດ, ການລ່ວງລະເມີດເຄຫະສະຖານ ແລະ ການລ່ວງລະເມີດຄວາມລັບສ່ວນຕົວ.

ສຳລັບກໍລະນີນີ້ທ້າວ ກ ໄດ້ລະເມີດກົດຈະລາຈອນພາໃຫ້ເກີດອຸບປະຕິເຫດເຮັດໃຫ້ທ້າວ ຂ ໄດ້ຮັບບາດເຈັບສາຫັດເປັນການກະທຳຜິດຕາມມາດຕາ 86 ວັກ 2 ຂອງກົດໝາຍອາຍາ. ສະນັ້ນ, ມາດຕາ 6 ວັກ 1 ຂໍ້ 5 ຈຶ່ງບໍ່ກົງກັບກໍລະນີຂອງທ້າວ ກ. ດັ່ງນັ້ນ, ການຈິງໃຈໃຊ້ແທນຄ່າເສຍຫາຍທາງແພ່ງຂອງທ້າວ ກ ຈຶ່ງບໍ່ຈັດຢູ່ໃນສາເຫດທີ່ບໍ່ພາໃຫ້ເປີດການສືບສວນ-ສອບສວນແຕ່ເປັນພຽງສາເຫດທີ່ພາໃຫ້ຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາຕາມມາດຕາ 40 ວັກ 1 ຂໍ້ 6 ຂອງກົດໝາຍອາຍາເທົ່ານັ້ນ. ດັ່ງນັ້ນ, ການເຂົ້າມອບຕົວຂອງທ້າວ ກ ໃນກໍລະນີຂ້າງເທິງນີ້ຈຶ່ງເປັນສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນ. ຊຶ່ງມີຮູບພາບ ແລະ ແຜນວາດປະກອບດັ່ງນີ້ :







**ການເຂົ້າມາສະເໜີຕົວຂອງທ້າວ ກ ນີ້ເປັນສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນ ຫຼື ບໍ່?**

## ມາດຕາ 92 ກດຢ

### ສາເຫດທີ່ບໍ່ພາໃຫ້ເປີດການສືບສວນ-ສອບສວນ

1. ບໍ່ມີຂໍ້ມູນຫຼັກຖານໜັກແໜ້ນ;
2. ມີສາເຫດໃດໜຶ່ງ ທີ່ໄດ້ກຳນົດໄວ້ໃນ ມາດຕາ 6 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;

❖ ມາດຕາ 6 ກດຢ

1. ຂາດເຫດການຂອງການກະທຳຜິດທາງອາຍາ;
2. ຂາດອົງປະກອບຂອງການກະທຳຜິດ;
3. ໝົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາ;
4. ມີການນິລະໂທດກຳ;
5. ມີການຕົກລົງໄກ່ເກ່ຍກັນ ໃນຄະດີທີ່ການກະທຳຜິດບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ ລະຫວ່າງຜູ້ຖືກເສຍຫາຍ ກັບຜູ້ຖືກຫາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ;
6. ຂາດການຮ້ອງຟ້ອງຂອງຜູ້ຖືກເສຍຫາຍ ຫຼື ຜູ້ຖືກເສຍຫາຍ ຖອນຄຳຮ້ອງຟ້ອງໃນກໍລະນີການກະທຳຜິດທີ່ຈຳເປັນ ຕ້ອງມີຄຳຮ້ອງຟ້ອງຂອງຜູ້ຖືກເສຍຫາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ;
7. ມີການກະທຳຜິດທີ່ມີຜົນເສຍຫາຍທາງດ້ານວັດຖຸຕ່ຳກວ່າມູນຄ່າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ;
8. ຜູ້ກະທຳຜິດໄດ້ເສຍຊີວິດ, ຍົກເວັ້ນກໍລະນີການເສຍຊີວິດ ໃນເວລາການເສຍຊີວິດຢູ່ສານ;
9. ມີຄຳສັ່ງຊັດມ້ຽນ ຫຼື ມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ກ່ຽວກັບຄະດີດຽວກັນ.

## ມາດຕາ 86 ວັກ 1 ຂໍ້ 2 ກດຢ

### ສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນ

1. ມີຄຳຮ້ອງຟ້ອງ ຫຼື ແຈ້ງຄວາມ ຂອງບຸກຄົນ ຫຼື ການຈັດຕັ້ງກ່ຽວກັບການກະທຳຜິດ
2. ມີການເຂົ້າມອບຕົວຂອງຜູ້ກະທຳຜິດ
3. ພົບເຫັນຮ່ອງຮອຍຂອງການກະທຳຜິດ ໂດຍອີງການສືບສວນ-ສອບສວນ ຫຼື ອີງການໄອຍະການ.

**ຄຳຖາມ 9: ຄຳຮ້ອງຟ້ອງ, ການແຈ້ງຄວາມ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແຕ່ລະອັນນັ້ນແມ່ນແນວໃດ?**

**ຄຳຕອບ**

ຄຳຮ້ອງຟ້ອງ, ການແຈ້ງຄວາມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 87 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

1. ຄຳຮ້ອງຟ້ອງແມ່ນຄຳກ່າວອ້າງຂອງຜູ້ຖືກເສຍຫາຍ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ຢ່າງເປັນລາຍລັກອັກສອນ ຫຼື ທາງປາກເປົ່າ ຍື່ນຕໍ່ອົງການສືບສວນ-ສອບສວນ ຫຼື ອົງການໄອຍະການຊຶ່ງຕົນໄດ້ຮູ້ຕົວຜູ້ກະທຳຜິດກ່ຽວກັບການກະທຳຜິດທາງອາຍາໃດໜຶ່ງທີ່ໄດ້ສ້າງຄວາມເສຍຫາຍໃຫ້ແກ່ຕົນ ຈຸດປະສົງເພື່ອນຳເອົາຜູ້ທີ່ໄດ້ກະທຳຜິດມາດຳເນີນຄະດີ. ສ່ວນຄຳຮ້ອງຟ້ອງຂອງອົງການຈັດຕັ້ງຕ້ອງເຮັດເປັນລາຍລັກອັກສອນ.

2. ການແຈ້ງຄວາມແມ່ນການຂຽນຢ່າງເປັນລາຍລັກອັກສອນ ຫຼື ທາງປາກເປົ່າຂອງຜູ້ຖືກເສຍຫາຍ ຫຼື ບຸກຄົນທົ່ວໄປຕໍ່ອົງການສືບສວນ-ສອບສວນ ຫຼື ອົງການໄອຍະການກ່ຽວກັບເຫດການຂອງການກະທຳຜິດທາງອາຍາໃດໜຶ່ງທີ່ໄດ້ສ້າງຄວາມເສຍຫາຍໃຫ້ແກ່ຕົນ ຫຼື ໄດ້ສ້າງຄວາມເສຍຫາຍໃຫ້ແກ່ບຸກຄົນອື່ນ ຊຶ່ງເປັນການດຳເນີນທີ່ນອກເໜືອຈາກຄຳຮ້ອງຟ້ອງຂ້າງເທິງນີ້ ຈຸດປະສົງເພື່ອໃຫ້ອົງການດັ່ງກ່າວຮັບຮູ້ ຫຼື ດຳເນີນຕາມຂະບວນການຂອງກົດໝາຍ. ສ່ວນການແຈ້ງຄວາມຂອງອົງການຈັດຕັ້ງຕ້ອງເຮັດເປັນລາຍລັກອັກສອນ.

3. ຕົວຢ່າງຄຳຮ້ອງຟ້ອງ ແລະ ການແຈ້ງຄວາມ

- ຕົວຢ່າງຄຳຮ້ອງຟ້ອງ: ທ້າວ ກ ແລະ ທ້າວ ຂ ໄດ້ດື່ມສິ່ງມຶນເມົາ ແລະ ທ້າທາຍກັນແລ້ວທ້າວ ກ ຈຶ່ງໄດ້ລົງມືຕີທ້າວ ຂ ຈົນໄດ້ຮັບບາດເຈັບສົມຄວນ ໃນກໍລະນີດັ່ງກ່າວທ້າວ ຂ ຈຶ່ງໄດ້ໄປຮ້ອງຟ້ອງຕໍ່ເຈົ້າໜ້າທີ່ຕຳຫຼວດ ເພື່ອໃຫ້ດຳເນີນຄະດີຕໍ່ ທ້າວ ກ.

- ຕົວຢ່າງການແຈ້ງຄວາມ: ລົດຈັກທ້າວ ກ ຖືກຄົນຮ້າຍລັກໄປ ທ້າວ ກ ຈຶ່ງໄປແຈ້ງຄວາມຕໍ່ເຈົ້າໜ້າທີ່ຕຳຫຼວດ ເພື່ອໃຫ້ດຳເນີນຄະດີ;

ທ້າວ ກ ໄດ້ເຫັນຄົນຕີກັນຈຶ່ງໄດ້ໄປແຈ້ງຄວາມຕໍ່ເຈົ້າໜ້າທີ່ຕຳຫຼວດ ເພື່ອໃຫ້ຮັບຊາບຕໍ່ເຫດການທີ່ເກີດຂຶ້ນ. ຊຶ່ງມີແຜນວາດປະກອບດັ່ງນີ້ :



ມີເຫດການເກີດຂຶ້ນ
ມີການແຈ້ງຂໍ້ມູນກ່ຽວກັບ ເຫດການ
ຜູ້ມາແຈ້ງ ແມ່ນຜູ້ຖືກເສຍຫາຍ , ທະນາຍຄວາມ ຫຼື ຍາດພີ່ນ້ອງ ຂອງຜູ້ຖືກເສຍຫາຍ
ຜູ້ມາແຈ້ງ ບໍ່ແມ່ນຜູ້ຖືກເສຍ ຫາຍ, ທະນາຍຄວາມ ຫຼື ຍາດ ພີ່ນ້ອງຂອງຜູ້ຖືກເສຍຫາຍ
ຮູ້ຕົວຜູ້ກະທຳຜິດ
ບໍ່ຮູ້ຕົວຜູ້ກະທຳຜິດ
ມີເຈດຈຳນົງຢາກ ເອົາຜິດຕໍ່ຜູ້ກະທຳ
ບໍ່ມີເຈດຈຳນົງຢາກ ເອົາຜິດຕໍ່ຜູ້ກະທຳ
ຮ້ອງຟ້ອງ
ແຈ້ງຄວາມ
ແຈ້ງຄວາມ
ແຈ້ງຄວາມ

**ຄຳຖາມ 10: ການພິຈາລະນາຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມ ໃນກໍລະນີຫຍຸ້ງຍາກສັບສົນທີ່ເຮັດໃຫ້ອົງການສືບສວນ-ສອບສວນ ຫຼື ອົງການໄອຍະການທີ່ຮັບຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມ ຕ້ອງຄົ້ນຄວ້າບໍ່ໃຫ້ເກີນ ສິບວັນນັ້ນ ແມ່ນກໍລະນີແນວໃດ?**

**ຄຳຕອບ**

ອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາແລ້ວ ອົງການສືບສວນ-ສອບສວນ ຫຼື ອົງການໄອຍະການຕ້ອງພິຈາລະນາຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມບໍ່ໃຫ້ເກີນກຳນົດ ຫ້າວັນ ນັບແຕ່ວັນໄດ້ຮັບຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມເປັນຕົ້ນໄປ. ໃນກໍລະນີມີຄວາມຫຍຸ້ງຍາກສັບສົນ ກຳນົດເວລາດັ່ງກ່າວແມ່ນບໍ່ໃຫ້ເກີນ ສິບວັນ ຊຶ່ງໃນກໍລະນີຫຍຸ້ງຍາກສັບສົນນີ້ກົດ ໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 90 ກໍບໍ່ໄດ້ອະທິບາຍໄວ້ຢ່າງຈະແຈ້ງວ່າໃຫ້ເຮັດຫຍັງແດ່.

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 90 ວັກ 1 ກຳນົດໄວ້ວ່າອົງການສືບສວນ-ສອບສວນ ຫຼື ອົງການໄອຍະການຕ້ອງພິຈາລະນາຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມພາຍໃນກຳນົດ ຫ້າວັນໃນກໍລະນີບໍ່ຫຍຸ້ງຍາກ, ຖ້າໃນກໍລະນີຫຍຸ້ງຍາກສັບສົນແມ່ນບໍ່ໃຫ້ເກີນສິບວັນ[10] ແລະ ພາຍໃນກຳນົດເວລາດັ່ງກ່າວຕ້ອງອອກຄຳເຫັນໃດໜຶ່ງດັ່ງລຸ່ມນີ້:

1. ອອກຄຳສັ່ງເປີດການສືບສວນ-ສອບສວນ;
2. ອອກຄຳສັ່ງບໍ່ເປີດການສືບສວນ-ສອບສວນ;
3. ສົ່ງຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມໃຫ້ອົງການທີ່ມີສິດ ແລະ ໜ້າທີ່ກ່ຽວຂ້ອງພິຈາລະນາ.

ໃນການພິຈາລະນາຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມກ່ອນທີ່ຈະອອກ ຫຼື ບໍ່ອອກຄຳສັ່ງເປີດການສືບສວນ-ສອບສວນ, ເຈົ້າໜ້າທີ່ຜູ້ດຳເນີນສາມາດທວງເອົາຂໍ້ມູນຫຼັກຖານ ຫຼື ຟັງຄຳອະທິບາຍທີ່ຈຳເປັນກໍໄດ້ (ມາດຕາ 90 ວັກ 2 ກດຍ)

ໃນກໍລະນີທີ່ມີຂໍ້ມູນໜັກແໜ້ນກ່ຽວກັບການກະທຳຜິດ, ຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການຕ້ອງອອກຄຳສັ່ງເປີດການສືບສວນ-ສອບສວນ ໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນ (ມາດຕາ 91 ວັກ1 ກດຍ).

ໃນກໍລະນີທີ່ຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການອອກຄຳສັ່ງບໍ່ເປີດການສືບສວນ-ສອບສວນຕ້ອງໄດ້ແຈ້ງຄຳສັ່ງດັ່ງກ່າວໃຫ້ບຸກຄົນ ຫຼື ການຈັດຕັ້ງທີ່

---

[10] ອີງຕາມພາກປະຕິບັດຕົວຈິງ ກຳນົດຫ້າວັນ ຫຼື ສິບວັນແມ່ນເລີ່ມນັບຕັ້ງແຕ່ເຈົ້າໜ້າທີ່ຜູ້ຮັບຜິດຊອບດຳເນີນຄະດີໄດ້ຮັບຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມເປັນຕົ້ນໄປ.

ໄດ້ຮ້ອງຟ້ອງ ຫຼື ແຈ້ງຄວາມນັ້ນຊາບ (ມາດຕາ 93 ວັກ 1 ກດຍ) ຊຶ່ງສາເຫດທີ່ພາໃຫ້ອອກຄຳສັ່ງບໍ່ເປີດການສືບສວນ-ສອບສວນນັ້ນມີດັ່ງລຸ່ມນີ້ (ມາດຕາ 92 ກດຍ):

1. ບໍ່ມີຂໍ້ມູນຫຼັກຖານໜັກແໜ້ນ;

2. ມີສາເຫດໃດໜຶ່ງທີ່ກຳນົດໄວ້ໃນມາດຕາ 6 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;

ພາຍຫຼັງທີ່ອີງການສືບສວນ-ສອບສວນ ຫຼື ອີງການໄອຍະການຮັບເອົາຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມແລ້ວຕ້ອງໄດ້ພິຈາລະນາດັ່ງລຸ່ມນີ້:

1. ຄະດີທີ່ໄດ້ຮ້ອງຟ້ອງ ຫຼື ແຈ້ງຄວາມແມ່ນຄະດີອາຍາ ຫຼື ຄະດີອື່ນ;

2. ມີຂໍ້ມູນຫຼັກຖານໜັກແໜ້ນທີ່ພົວພັນກັບຄະດີທີ່ໄດ້ຮ້ອງຟ້ອງ ຫຼື ແຈ້ງຄວາມ ຫຼື ບໍ່;

3. ມີສາເຫດໃດໜຶ່ງຕາມທີ່ກຳນົດໄວ້ໃນມາດຕາ 6 ກດຍ ຫຼື ບໍ່.

ຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ທີ່ກຳນົດວ່າກໍລະນີຫຍຸ້ງຍາກສັບສົນບໍ່ໄດ້ໝາຍເຖິງຄວາມຫຍຸ້ງຍາກດ້ານວຽກງານຂອງເຈົ້າໜ້າທີ່ຜູ້ດຳເນີນ ແຕ່ໝາຍຄວາມວ່າແມ່ນກໍລະນີຫຍຸ້ງຍາກສັບສົນດັ່ງລຸ່ມນີ້:

1. ໃນກໍລະນີຕ້ອງໃຊ້ເວລາດົນໃນການພິຈາລະນາວ່າເປັນການກະທຳຜິດທາງອາຍາ ຫຼື ທາງແພ່ງ;

2. ໃນກໍລະນີຕ້ອງໃຊ້ເວລາດົນໃນການພິຈາລະນາວ່າຄະດີທີ່ໄດ້ຮ້ອງຟ້ອງ ຫຼື ແຈ້ງຄວາມນັ້ນມີສາເຫດໃດໜຶ່ງຕາມ ມາດຕາ 6 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;

3. ໃນກໍລະນີຕ້ອງໃຊ້ເວລາດົນໃນການພິຈາລະນາວ່າມີຫຼັກຖານພຽງພໍ ຫຼື ບໍ່[11].

ເຫດຜົນທີ່ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 90 ກຳນົດເວລາໃນການພິຈາລະນາຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມບໍ່ໃຫ້ເກີນ ຫ້າວັນນັບແຕ່ວັນໄດ້ຮັບຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມເປັນຕົ້ນໄປ. ໃນກໍລະນີມີຄວາມຫຍຸ້ງຍາກສັບສົນກຳນົດເວລາດັ່ງກ່າວ ແມ່ນບໍ່ໃຫ້ເກີນ ສິບວັນກໍເພື່ອກຳນົດຂອບເຂດ ແລະ ເຕືອນສະຕິໃຫ້ຜູ້ທີ່ມີໜ້າທີ່ຮັບຜິດຊອບຕ້ອງດຳເນີນການລົງຄຳເຫັນຕາມມາດຕາ 90 ວັກ 1 ກດຍ.

**ຕົວຢ່າງ** 1: ທ້າວ ກ ມາຮ້ອງຟ້ອງວ່າມີບໍລິສັດແຫ່ງໜຶ່ງໄດ້ໂຄສະນາເພື່ອການລະດົມທຶນດ້ວຍຜົນຕອບແທນດອກເບ້ຍທີ່ສູງຕົນເອງຈຶ່ງຫຼົງເຊື່ອແລ້ວເອົາເງິນໄປຝາກ ຊຶ່ງຕໍ່ມາເຈົ້າ

[11] ໃນພາກປະຕິບັດຕົວຈິງແລ້ວໃນກໍລະນີການກວດສານເສບຕິດ, ຜົນຂອງການກວດດັ່ງກ່າວກ່ອນຈະອອກໄດ້ຕ້ອງໃຊ້ເວລາເກີນ ສິບວັນ, ໃນກໍລະນີທີ່ຮູ້ແຈ້ງກ່ຽວກັບໄລຍະເວລາການກວດອີງການສືບສວນສອບສວນ ຫຼື ອີງການໄອຍະການຈະອອກຄຳສັ່ງເປີດການສືບສວນສອບສວນກ່ອນ.

ຂອງບໍລິສັດດັ່ງກ່າວບໍ່ສາມາດທີ່ຈະໃຊ້ແທນຕົ້ນທຶນ ແລະ ດອກເບ້ຍ, ມີຜູ້ເສຍຫາຍຈຳນວນຫຼາຍຄົນ, ມີມູນຄ່າຄວາມເສຍຫາຍຈຳນວນຫຼາຍ.

ຈາກຂໍ້ມູນຫຼັກຖານເບື້ອງຕົ້ນຂອງຜູ້ທີ່ມາຍື່ນຄຳຮ້ອງຟ້ອງໃນກໍລະນີນີ້ຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການບໍ່ສາມາດຕີລາຄາໄດ້ວ່າການຮ້ອງຟ້ອງດັ່ງກ່າວເປັນການລະເມີດສັນຍາ (ຄະດີແພ່ງ) ຫຼື ວ່າເປັນການສໍ້ໂກງຊັບຂອງພົນລະເມືອງ (ຄະດີອາຍາ) ໝາຍຄວາມວ່າຄະດີນີ້ຕ້ອງໄດ້ໃຊ້ເວລາເກີນກວ່າ ຫ້າວັນເພື່ອເກັບກຳຂໍ້ມູນຫຼັກຖານເບື້ອງຕົ້ນຈາກຜູ້ທີ່ຖືກເສັຍຫາຍເພື່ອໃຫ້ມີຄວາມຊັດເຈນວ່າເປັນຄະດີອາຍາ ຫຼື ຄະດີແພ່ງຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຫຼື ບໍ່(ຕົວຢ່າງນີ້ກົງກັບຂໍ້ຫຍຸ້ງຍາກທີ 1 ຂ້າງເທິງ).

**ຕົວຢ່າງ 2:** ທ້າວ ກໄດ້ໂທລະສັບມາແຈ້ງຄວາມຕໍ່ເຈົ້າໜ້າທີ່ວ່າມີເຫດການຄາດຕະກຳເກີດຂຶ້ນຢູ່ໄຮ່ແຫ່ງໜຶ່ງໃນປ່າເມື່ອເຈົ້າໜ້າທີ່ຕຳຫຼວດໄດ້ຮັບການແຈ້ງຄວາມຄືດັ່ງກ່າວກໍໄດ້ເດີນທາງໄປສະຖານທີ່ເກີດເຫດຕາມການແຈ້ງຄວາມ ຊຶ່ງບ່ອນທີ່ເກີດເຫດຢູ່ໃນປ່າໄກຈາກບ້ານ ແລະ ບ້ານນັ້ນຢູ່ໄກຈາກຕົວເມືອງເຂດຫ່າງໄກສອກຫລີກເສັ້ນທາງຄົມມະນາຄົມໄປຫາບ້ານນັ້ນມີຄວາມຫຍຸ້ງຍາກທີ່ສຸດໃນລະດູຝົນ ແລະ ເສັ້ນທາງຈາກບ້ານໄປຫາໄຮ່ບ່ອນເກີດເຫດຜ່ານປ່າຂຶ້ນພູລົງຫ້ວຍບໍ່ສາມາດໄປດ້ວຍລົດມີແຕ່ຂີ່ມ້າ ຫຼື ຍ່າງ, ລະບົບການສື່ສານກໍບໍ່ສະດວກບາງບ່ອນມີສັນຍານ ແລະ ບາງບ່ອນບໍ່ມີສັນຍານ ເພື່ອຄວາມໝັ້ນໃຈເຈົ້າໜ້າທີ່ຈຳເປັນຕ້ອງໄດ້ເດີນທາງໄປສະຖານທີ່ເກີດເຫດຕາມການແຈ້ງຄວາມເພື່ອໄປເກັບກຳຂໍ້ມູນຫຼັກຖານທີ່ເປັນພື້ນຖານເບື້ອງຕົ້ນວ່າມີເຫດການເກີດຂຶ້ນຈິງແທ້ບໍ່ໃນການເດີນທາງໄປ-ກັບ ແລະ ຈົນກວ່າຈະຊອກເຫັນເຫດການ ເຈົ້າໜ້າທີ່ຕ້ອງໃຊ້ເວລາເກີນກວ່າ ຫ້າວັນແຕ່ສາມາດມີເວລາພຽງພໍ ແລະພິຈາລະນາໄດ້ພາຍໃນ ສິບວັນ (ຕົວຢ່າງນີ້ກົງກັບຂໍ້ຫຍຸ້ງຍາກທີ 3 ຂ້າງເທິງ).

**ຄຳຖາມ 11: ພາຍຫຼັງອົງການສືບສວນ-ສອບສວນ ຫຼື ອົງການໄອຍະການ ໄດ້ຮັບຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມຂອງບຸກຄົນ ຫຼື ການຈັດຕັ້ງແລ້ວຈະດຳເນີນການຄືແນວໃດ?**

**ຄຳຕອບ**

ຫຼັງຈາກອົງການສືບສວນ-ສອບສວນ ຫຼື ອົງການໄອຍະການ ໄດ້ຮັບຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມຂອງບຸກຄົນ ຫຼື ການຈັດຕັ້ງແລ້ວ ຕ້ອງພິຈາລະນາຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມ ດ້ວຍການທວງເອົາຂໍ້ມູນຫຼັກຖານເບື້ອງຕົ້ນ ຫຼື ອາດຈະໃຫ້ຜູ້ມາຮ້ອງຟ້ອງ ຫຼື ແຈ້ງຄວາມອະທິບາຍ ຫຼື ເລົ່າເຫດການທີ່ພົວພັນກັບການກະທຳຜິດ, ລົງໄປສະຖານທີ່ເກີດເຫດເພື່ອເກັບໂຮມຂໍ້ມູນຫຼັກຖານ (ມາດຕາ 129 ກດຍ) ເພື່ອນຳໄປສູ່ການອອກຄຳສັ່ງເປີດ ຫຼື ບໍ່ເປີດການສືບສວນ-ສອບສວນ. ການພິຈາລະນາຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມຕ້ອງພິຈາລະນາພາຍໃນກຳນົດບໍ່ໃຫ້ເກີນ 5 ວັນນັບແຕ່ວັນໄດ້ຮັບຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມເປັນຕົ້ນໄປ ຍົກເວັ້ນຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມນັ້ນມີຄວາມຫຍຸ້ງຍາກສັບສົນຈະຕ້ອງໄດ້ພິຈາລະນາບໍ່ໃຫ້ເກີນ 10 ວັນນັບແຕ່ວັນໄດ້ຮັບຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມດັ່ງກ່າວ (ມາດຕາ 90 ວັກ 1 ກດຍ). ໃນກໍລະນີຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມຫາກເຮັດທາງປາກເປົ່າ ເຈົ້າໜ້າທີ່ຜູ້ຮັບຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມ ຕ້ອງເຮັດບົດບັນທຶກເອົາຂໍ້ມູນກ່ຽວກັບປະຫວັດ, ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ ຂອງຜູ້ຮ້ອງຟ້ອງ ຫຼື ຜູ້ແຈ້ງຄວາມ, ເນື້ອໃນຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມແລ້ວໃຫ້ເຈົ້າໜ້າທີ່ ແລະ ຜູ້ຮ້ອງຟ້ອງ ຫຼື ຜູ້ແຈ້ງຄວາມລົງລາຍເຊັນ; ບົດບັນທຶກດັ່ງກ່າວຕ້ອງເຮັດເປັນ 2 ສະບັບຄື ສະບັບໜຶ່ງມອບໃຫ້ຜູ້ຮ້ອງຟ້ອງ ຫຼື ຜູ້ແຈ້ງຄວາມ, ສ່ວນອີກສະບັບໜຶ່ງໃຫ້ເກັບໄວ້ໃນສຳນວນຄະດີ (ມາດຕາ 87 ວັກ 2 ກດຍ).

ເຈົ້າໜ້າທີ່ຜູ້ຮັບຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມຕ້ອງແຈ້ງໃຫ້ບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງຊາບກ່ຽວກັບຄວາມຮັບຜິດຊອບຕາມກົດໝາຍໃນກໍລະນີທີ່ຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມນັ້ນຫາກບໍ່ມີມູນຄວາມຈິງ ຫຼື ເປັນການເທັດ (ມາດຕາ 87 ວັກ 3 ກດຍ). ຊຶ່ງມີແຜນວາດປະກອບດັ່ງນີ້ :


ຮ້ອງຟ້ອງ ຫຼື ແຈ້ງຄວາມ ເປັນລາຍລັກ ອັກສອນ ມຕ 87 ກດຍ
ຄວາມຮັບຜິດ ຊອບຕໍ່ການຮ້ອງ ຟ້ອງ ຫຼື ແຈ້ງ ຄວາມທີ່ບໍ່ມີມູນ ຄວາມຈິງ ຫຼື ເທັດ ມຕ 87 ວັກ 3
ຕ້ອງພິຈາລະນາບໍ່ ໃຫ້ເກີນ 5 ວັນ ແລະ 10 ວັນສຳ ລັບຄຳຮ້ອງຟ້ອງ ຫຼື ແຈ້ງຄວາມທີ່ມີ ຄວາມຫຍຸ້ງ ຍາກ ສັບສົນ ມຕ 90 ວັກ 1 ກດຍ
ທວງຂໍ້ມູນ ເບື້ອງຕົ້ນ ຫຼື ໃຫ້ອະທິ ບາຍ ເຫດການ
ລົງໄປສະ ຖານທີ່ເກີດ ເຫດເກັບ ໂຮມຂໍ້ມູນ ຫຼັກຖານ
ຄຳສັ່ງເປີດການ ສືບສວນ-ສອບສວນ
ຄຳສັ່ງບໍ່ເປີດການ ສືບສວນ-ສອບສວນ
ຮ້ອງຟ້ອງ ຫຼື ແຈ້ງຄວາມ ທາງປາກເປົ່າ ມຕ 87 ກດຍ
ບັນທຶກເອົາຂໍ້ມູນກ່ຽວກັບ ປະຫວັດ ແລະ ເນື້ອໃນຄຳຮ້ອງ ຟ້ອງ ຫຼື ແຈ້ງຄວາມ ມຕ 87 ວັກ 2

**ຄຳຖາມ 12: ກໍລະນີການກະທຳຜິດເກີດຂຶ້ນຢູ່ແຂວງໜຶ່ງ ແຕ່ຜົນຂອງການກະທຳຜິດເກີດຂຶ້ນຢູ່ແຂວງອື່ນ ການສືບສວນ-ສອບສວນຈະເປັນສິດອຳນາດຂອງແຂວງໃດ?**

**ຕົວຢ່າງ: ທ້າວ ກ ໄດ້ປະສົມຢາພິດໃສ່ນ້ຳໃຫ້ທ້າວ ຂ ດື່ມຢູ່ແຂວງໜຶ່ງ ແລ້ວທ້າວ ຂ ໄປເສຍຊີວິດຢູ່ແຂວງອື່ນ ການສືບສວນ-ສອບສວນ ຈະເປັນສິດອຳນາດຂອງແຂວງໃດເປັນຜູ້ດຳເນີນ?**

**ຄຳຕອບ**

ກໍລະນີການກະທຳຜິດເກີດຂຶ້ນຢູ່ແຂວງໜຶ່ງແຕ່ຜົນຂອງການກະທຳຜິດເກີດຂຶ້ນຢູ່ແຂວງອື່ນ ໝາຍຄວາມວ່າສະຖານທີ່ບ່ອນກະທຳຜິດກັບສະຖານທີ່ບ່ອນຜົນຂອງການກະທຳຜິດເກີດຂຶ້ນແມ່ນຢູ່ຄົນລະບ່ອນ.

ກ່ຽວກັບບັນຫາທີ່ກ່າວມາຂ້າງເທິງໂດຍອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາມາດຕາ 83 ວັກ 1 ກຳນົດວ່າ ອົງການສືບສວນ-ສອບສວນມີສິດ ແລະ ໜ້າທີ່ດຳເນີນການສືບສວນ-ສອບສວນຄະດີອາຍາທີ່ເກີດຂຶ້ນຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຫຼື ບ່ອນຢູ່ຂອງຜູ້ກະທຳຜິດ ໃນນີ້ຄຳວ່າເກີດຂຶ້ນຢູ່ໃນຂອບເຂດພື້ນທີ່ຄວາມຮັບຜິດຊອບຂອງຕົນແມ່ນບ່ອນທີ່ຜົນຂອງການກະທຳຜິດເກີດຂຶ້ນ, ສ່ວນບ່ອນຢູ່ຂອງຜູ້ກະທຳຜິດກໍໝາຍເຖິງສະຖານທີ່ບ່ອນທີ່ບຸກຄົນຜູ້ນັ້ນຢູ່ໃນຕົວຈິງ (ບ່ອນມອບຕົວ, ບ່ອນຢູ່ ຫຼື ບ່ອນຈັບຕົວ) ຫຼື ບ່ອນທີ່ຂຶ້ນສຳມະໂນຄົວ ເມື່ອອີງຕາມມາດຕາດັ່ງກ່າວແລ້ວຈະມອບສິດອຳນາດແກ່ອົງການສືບສວນ-ສອບສວນທີ່ມີໜ້າທີ່ຮັບຜິດຊອບໃນບ່ອນທີ່ຜົນຂອງການກະທຳຜິດໄດ້ເກີດຂຶ້ນ ແລະ ອົງການສືບສວນ-ສອບສວນບ່ອນທີ່ມີໜ້າທີ່ຮັບຜິດຊອບບ່ອນທີ່ຜູ້ກະທຳຜິດໄດ້ປາກົດຕົວຢູ່ຕົວຈິງ ແຕ່ເຫັນວ່າໃນພາກປະຕິບັດຕົວຈິງແມ່ນຈະໃຫ້ບູລິມະສິດແກ່ອົງການສືບສວນ-ສອບສວນບ່ອນທີ່ຜົນຂອງການກະທຳຜິດເກີດຂຶ້ນເປັນຜູ້ດຳເນີນການສືບສວນ-ສອບສວນຄະດີອາຍາ.

ເມື່ອສົມທຽບກັບກໍລະນີຂ້າງເທິງນີ້ອີງຕາມມາດຕາ 83 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລ້ວສິດອຳນາດໃນການສືບສວນ-ສອບສວນແມ່ນສາມາດດຳເນີນໄດ້ທັງ 2 ແຂວງຄື: ແຂວງທີ່ທ້າວ ກ ຢູ່ໃນຕົວຈິງ (ແຂວງບ່ອນມອບຕົວ, ບ່ອນຢູ່ ຫຼື ບ່ອນຈັບຕົວ) ຫຼື ແຂວງທີ່ທ້າວ ກ ຂຶ້ນສຳມະໂນຄົວ ແລະ ແຂວງທີ່ທ້າວ ຂ ເສຍຊີວິດ ແຕ່ດັ່ງທີ່ໄດ້ກ່າວ

ມາຂ້າງເທິງນັ້ນເຫັນວ່າ ໃນການປະຕິບັດຕົວຈິງຈະໃຫ້ບູລິມະສິດແກ່ອົງການສືບສວນ-ສອບສວນຂອງແຂວງທີ່ທ້າວ ຂ ເສຍຊີວິດນັ້ນເປັນຜູ້ດຳເນີນ.

ສຳລັບມາດຕາ 96 ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ທີ່ກຳນົດກ່ຽວກັບສະຖານທີ່ດຳເນີນການສືບສວນ-ສອບສວນນັ້ນ ເປັນພຽງມາດຕາທີ່ກຳນົດກ່ຽວກັບການດຳເນີນການສືບສວນ-ສອບສວນຕົວຈິງ ແຕ່ບໍ່ແມ່ນມາດຕາທີ່ກຳນົດກ່ຽວກັບຂອບເຂດສິດອຳນາດໃນການສືບສວນ-ສອບສວນ.



# III. ບາງວິທີການສືບສວນ-ສອບສວນ

**ຄຳຖາມ 13: ກ່ອນເຈົ້າໜ້າທີ່ສືບສວນ-ສອບສວນຈະເອົາຄຳໃຫ້ການຂອງຜູ້ຖືກຫາໃນຄະດີອາຍາຕ້ອງດຳເນີນແນວໃດ?**

**ຄຳຕອບ**

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 54 ວັກ 1 ຂໍ້ 3 ໄດ້ໃຫ້ສິດແກ່ເຈົ້າໜ້າທີ່ສືບສວນ-ສອບສວນ ເອົາຄຳໃຫ້ການຂອງຜູ້ຖືກຫາ.

ອີງຕາມມາດຕາ 116 ວັກ 2 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ກ່ອນຈະເອົາຄຳໃຫ້ການຂອງຜູ້ຖືກຫານັ້ນ ເຈົ້າໜ້າທີ່ສືບສວນ-ສອບສວນຕ້ອງແຈ້ງຂໍ້ກ່າວຫາພ້ອມທັງສິດ ແລະ ພັນທະ ໃຫ້ຜູ້ກ່ຽວຊາບ.

ສິດ ແລະ ພັນທະຂອງຜູ້ຖືກຫາຊຶ່ງເຈົ້າໜ້າທີ່ສືບສວນ-ສອບສວນຕ້ອງແຈ້ງໃຫ້ຮູ້ມີດັ່ງນີ້: ສິດຮັບຊາບ ແລະ ແກ້ຂໍ້ກ່າວຫາໃສ່ຕົນ; ສິດໃຫ້ການ ແລະ ສະເໜີຫຼັກຖານ; ສິດສະເໜີປະກັນຕົວ ແລະ ຍື່ນຄຳຮ້ອງຂໍ; ສິດໄດ້ຮັບເອກະສານກ່ຽວກັບການສືບສວນ-ສອບສວນ; ສິດເບິ່ງເອກະສານໃນສຳນວນຄະດີ, ສຳເນົາ ຫຼື ກ່າຍເອົາເນື້ອໃນເອກະສານ; ສິດເອົາ ແລະ ພົບກັບທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນໃນການຕໍ່ສູ້ຄະດີ; ສິດສະເໜີຄ້ານຕົວຜູ້ດຳເນີນຄະດີ, ຜູ້ຊ່ຽວຊານ, ຜູ້ຊຳນານງານ ຫຼື ຜູ້ແປພາສາ; ສິດຮ້ອງຟ້ອງຕໍ່ການກະທຳ ຫຼື ການອອກຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ຫຼື ພະນັກງານໄອຍະການທີ່ຕົນເຫັນວ່າບໍ່ຖືກຕ້ອງ; ສິດຂໍອຸທອນ, ຂໍລຶບລ້າງຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ. ສ່ວນພັນທະແມ່ນເຂົ້າມາສະເໜີຕົວ ຕາມໝາຍຮຽກ, ຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ແລະ ປະຕິບັດລະບຽບການສືບສວນ-ສອບສວນ (ມາດຕາ 65 ກດຍ).

ໃນກໍລະນີການເອົາຄຳໃຫ້ການຫາກມີຜູ້ປົກປ້ອງອື່ນຂອງຜູ້ກ່ຽວເຂົ້າຮ່ວມນຳ, ເຈົ້າໜ້າທີ່ສືບສວນ-ສອບສວນ ກໍຕ້ອງໄດ້ແຈ້ງສິດ ແລະ ພັນທະ ຕາມທີ່ກຳນົດໄວ້ໃນມາດຕາ 71 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາໃຫ້ຜູ້ປົກປ້ອງອື່ນຮັບຊາບ (ມາດຕາ 116 ວັກ 2 ກດຍ).

ໃນກໍລະນີເອົາຄຳໃຫ້ການຂອງຄົນທີ່ບໍ່ຮູ້ພາສາລາວ ຫຼື ຄົນຕ່າງປະເທດທີ່ຕົກເປັນຜູ້ຖືກຫາທີ່ມີຜູ້ແປພາສາເຂົ້າຮ່ວມນັ້ນເຈົ້າໜ້າທີ່ສືບສວນ-ສອບສວນກໍຕ້ອງໄດ້ແຈ້ງສິດ ແລະ ພັນທະໃຫ້ຜູ້ແປພາສາຮັບຊາບເຊັ່ນ: ຜູ້ແປພາສາຕ້ອງຮັບຜິດຊອບຕໍ່ການແປຂອງຕົນ ແລະ ມີພັນທະ

ໃນການຮັກສາຄວາມລັບໃນຄະດີຕາມທີ່ກຳນົດໄວ້ໃນມາດຕາ 74 ວັກ 3 ຂອງກົດ ໝາຍວ່າດ້ວຍການດຳເນີນຄະດີອາຍາ ຄືກັນກັບການເອົາຄຳໃຫ້ການຂອງຜູ້ຖືກຫາ ຕາມມາດຕາ 116 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ຄຳຖາມ 14: ກ່ອນເຈົ້າໜ້າທີ່ສືບສວນ-ສອບສວນ ຈະເອົາຄຳໃຫ້ການຂອງຜູ້ຖືກສົງໄສໃນຄະດີອາຍາຕ້ອງດຳເນີນແນວໃດ?**

**ຄຳຕອບ**

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 54 ວັກ 1 ຂໍ້ 3 ໄດ້ໃຫ້ສິດເຈົ້າໜ້າທີ່ສືບສວນ-ສອບສວນ ເອົາຄຳໃຫ້ການຂອງຜູ້ຖືກສົງໄສ.

ກ່ອນເອົາຄຳໃຫ້ການຂອງຜູ້ຖືກສົງໄສ ເຈົ້າໜ້າທີ່ສືບສວນ-ສອບສວນ ຕ້ອງແຈ້ງສິດ ແລະ ພັນທະໃຫ້ຜູ້ກ່ຽວຊາບຕາມມາດຕາ 35 ວັກ 2 ແລະ 64 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ດັ່ງນີ້: ສິດຮັບຊາບຂໍ້ສົງໄສຕໍ່ຕົນ; ສິດໃຫ້ຄຳອະທິບາຍ ຫຼື ໃຫ້ການ ກ່ຽວກັບຂໍ້ສົງໄສຕໍ່ຕົນ; ສິດສະເໜີຫຼັກຖານ; ສິດຮ້ອງຟ້ອງຕໍ່ການກະທຳທີ່ບໍ່ຖືກຕ້ອງ ຂອງອົງການສືບສວນ-ສອບສວນ ແລະ ອົງການໄອຍະການ; ສິດສະເໜີປະກັນຕົວຕາມການກະທຳຜິດທີ່ກົດໝາຍກຳນົດ. ນອກຈາກສິດດັ່ງກ່າວແລ້ວ ເຈົ້າໜ້າທີ່ສືບສວນ-ສອບສວນ ຍັງຈະຕ້ອງໄດ້ແຈ້ງພັນທະຕ່າງໆ ໃຫ້ຜູ້ກ່ຽວຊາບ ເຊັ່ນ: ເມື່ອໄດ້ຮັບໝາຍຮຽກກໍຕ້ອງໄດ້ເຂົ້າມາສະເໜີຕົວຕາມໝາຍຮຽກ ແລະ ໃຫ້ການຮ່ວມມືແກ່ອົງການສືບສວນ-ສອບສວນ ແລະ ອົງການໄອຍະການ.

ເຖິງວ່າກົດໝາຍຈະບໍ່ໄດ້ກຳນົດໃຫ້ແຈ້ງສິດ ແລະ ພັນທະໃຫ້ແກ່ຜູ້ປົກປ້ອງອື່ນ ຫຼື ຜູ້ແປພາສາຂອງຜູ້ຖືກສົງໄສຊາບກໍຕາມ ແຕ່ໃນພາກປະຕິບັດຕົວຈິງແລ້ວເຫັນວ່າ ຖ້າມີຜູ້ປົກປ້ອງອື່ນ ຫຼື ຜູ້ແປພາສາຂອງຜູ້ຖືກສົງໄສເຂົ້າຮ່ວມ ແລະ ເພື່ອເປັນການປົກປ້ອງສິດໃນການຕໍ່ສູ້ຄະດີຂອງຜູ້ຖືກສົງໄສນັ້ນ (ມາດຕາ 14 ກດຍ), ເຈົ້າໜ້າທີ່ສືບສວນ-ສອບສວນ ກໍຄວນແຈ້ງສິດ ແລະ ພັນທະຕ່າງໆ ໃຫ້ພວກກ່ຽວຊາບຕາມມາດຕາ 71 ວັກ 3 ແລະ ມາດຕາ 74 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຄືກັນກັບສິດຂອງຜູ້ປົກປ້ອງອື່ນ ຫຼື ຜູ້ແປພາສາຂອງຜູ້ຖືກຫາເຊັ່ນກັນ.

**ຄຳຖາມ 15: ການເອົາຄຳໃຫ້ການຂອງຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ໃນການດຳເນີນຄະດີອາຍາ , ໃນກໍລະນີຂ້າງລຸ່ມນີ້ ຈຳເປັນຕ້ອງໃຊ້ຜູ້ແປພາສາ ຫຼື ບໍ່?**

**15.1: ກໍລະນີ ຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ເປັນຄົນຕ່າງປະເທດ ທີ່ບໍ່ຮູ້ພາສາລາວ.**

**15.2: ກໍລະນີ ຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ເປັນຄົນລາວຊຶ່ງເປັນຄົນຊົນເຜົ່າທີ່ບໍ່ຮູ້ພາສາລາວ (ພາສາທາງການ).**

**15.3: ກໍລະນີ ຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ເປັນຄົນຕ່າງປະເທດ ທີ່ຮູ້ພາສາລາວ (ເວົ້າ, ອ່ານ ແລະ ຂຽນໄດ້).**

**ຄຳຕອບ 15.1**

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 20 ກຳນົດໄວ້ວ່າ: ການດຳເນີນຄະດີອາຍາຕ້ອງໃຊ້ພາສາລາວ. ຜູ້ເຂົ້າຮ່ວມໃນການດຳເນີນຄະດີອາຍາທີ່ບໍ່ຮູ້ພາສາລາວມີສິດໃຊ້ພາສາຂອງຕົນເອງ ຫຼື ພາສາອື່ນໂດຍຜ່ານການແປພາສາ; ຕາມລັດຖະທຳມະນູນແຫ່ງ ສປປ ລາວ ສະບັບປັບປຸງປີ 2015 ມາດຕາ 110 ກຳນົດໄວ້ວ່າ: ພາສາລາວແມ່ນພາສາ ແລະ ອັກສອນທີ່ໃຊ້ເປັນທາງການ. ສະນັ້ນ, ໃນເວລາເອົາຄຳໃຫ້ການຂອງຜູ້ຖືກສົງໄສ ຫຼື ຜູ້ຖືກຫາທີ່ເປັນຄົນຕ່າງປະເທດ ທີ່ບໍ່ຮູ້ພາສາລາວ, ຜູ້ກ່ຽວມີສິດໃຫ້ການເປັນພາສາຂອງຕົນເອງໄດ້ ໂດຍຜ່ານການແປຈາກຜູ້ແປພາສາ. ສະນັ້ນ, ໃນກໍລະນີນີ້ຈຳເປັນຕ້ອງໄດ້ມີຜູ້ແປພາສາ.

ຜູ້ແປພາສາທີ່ເຂົ້າຮ່ວມໃນການດຳເນີນຄະດີອາຍາ ຕ້ອງໄດ້ຮັບການແຕ່ງຕັ້ງໂດຍຜ່ານຂັ້ນຕອນຄືກັນກັບຜູ້ຊ່ຽວຊານ ຕາມມາດຕາ 74 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ; ການແຕ່ງຕັ້ງນັ້ນແມ່ນຫົວໜ້າອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ຫຼື ສານ ຕ້ອງອອກຄຳສັ່ງແຕ່ງຕັ້ງອີງຕາມມາດຕາ 72 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ. ໃນພາກປະຕິບັດຕົວຈິງແລ້ວ ຂັ້ນຕອນການສືບສວນ-ສອບສວນຂອງເຈົ້າໜ້າທີ່ ແມ່ນຫົວໜ້າອົງການສືບສວນ-ສອບສວນ ເປັນຜູ້ແຕ່ງຕັ້ງ ຕາມມາດຕາ 53 ວັກ 1 ຂໍ້ 6 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ຄຳຕອບ 15.2**

ການເອົາຄຳໃຫ້ການຂອງຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ທີ່ເປັນຄົນລາວ ຊຶ່ງເປັນຄົນຊົນເຜົ່າທີ່ບໍ່ຮູ້ພາສາລາວ (ພາສາທາງການ) ນັ້ນ, ຜູ້ກ່ຽວມີສິດນຳໃຊ້ພາສາຂອງຕົນເອງໄດ້ ຄືກັນກັບ

ກໍລະນີ ຄົນຕ່າງປະເທດທີ່ບໍ່ຮູ້ພາສາລາວຂ້າງເທິງນີ້. ສະນັ້ນ, ຈຶ່ງຈຳເປັນຕ້ອງມີຜູ້ແປພາສາທີ່ໄດ້ຮັບການແຕ່ງຕັ້ງ ສ່ວນວິທີການແຕ່ງຕັ້ງແມ່ນຄືກັນກັບກໍລະນີຄົນຕ່າງປະເທດທີ່ບໍ່ຮູ້ພາສາລາວ.

**ຄຳຕອບ 15.3**

ຜູ້ຖືກສົງໄສ ຫຼື ຜູ້ຖືກຫາເປັນຄົນຕ່າງປະເທດທີ່ສາມາດເວົ້າ ແລະ ຂຽນພາສາລາວໄດ້ດີ ແຕ່ຜູ້ກ່ຽວຕ້ອງການຜູ້ແປພາສານັ້ນ ຫົວໜ້າອົງການສືບສວນ-ສອບສວນ ຕ້ອງໄດ້ອອກຄຳສັ່ງແຕ່ງຕັ້ງຜູ້ແປພາສາໃຫ້ຜູ້ກ່ຽວ ຕາມມາດຕາ 53 ຂໍ້ 6 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ເພື່ອປົກປ້ອງສິດ, ຜົນປະໂຫຍດຂອງຜູ້ຖືກດຳເນີນຄະດີ ແລະ ຄວາມສະເໝີພາບຂອງພົນລະເມືອງຕໍ່ໜ້າກົດໝາຍ (ມາດຕາ 13 ກດຍ) ໃນເວລາໃຫ້ການຕໍ່ເຈົ້າໜ້າທີ່ອາດຈະມີການໃຊ້ຄຳສັບທີ່ສື່ສານບໍ່ເຂົ້າໃຈຈຳເປັນຕ້ອງໃຊ້ພາສາຂອງຕົນເອງໂດຍຜ່ານຜູ້ແປພາສາ.

ຖ້າວ່າຜູ້ຖືກສົງໄສ ຫຼື ຜູ້ຖືກຫາເປັນຄົນຕ່າງປະເທດທີ່ສາມາດອ່ານ, ເວົ້າ ແລະ ຂຽນພາສາລາວໄດ້ດີຜູ້ກ່ຽວບໍ່ມີຄຳສະເໜີໃດໆ ວ່າຈະຕ້ອງການຜູ້ແປພາສາ ຫຼື ບໍ່ ຕໍ່ເຈົ້າໜ້າທີ່ສືບສວນ-ສອບສວນ ແຕ່ເພື່ອຮັບປະກັນຄວາມສະເໝີພາບຂອງພົນລະເມືອງຕໍ່ໜ້າກົດໝາຍ ແລະ ສານ (ມາດຕາ 13 ກດຍ) ໃນການດຳເນີນຄະດີອາຍາຄວນໃຫ້ຜູ້ກ່ຽວໃຊ້ພາສາຂອງຕົນເອງ ເພື່ອໃຫ້ໄດ້ຄວາມຈິງທີ່ເປັນຂໍ້ມູນຫຼັກຖານຄົບຖ້ວນ, ຖືກຕ້ອງ, ພາວະວິໄສ ຫົວໜ້າອົງການສືບສວນ-ສອບສວນ ຄວນແຕ່ງຕັ້ງຜູ້ແປພາສາຕາມມາດຕາ 53 ຂໍ້ 6 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ຖ້າວ່າຜູ້ຖືກສົງໄສ ຫຼື ຜູ້ຖືກຫາເປັນຄົນຕ່າງປະເທດ ທີ່ສາມາດເວົ້າ, ອ່ານ ແລະ ຂຽນພາສາລາວໄດ້ດີຊຶ່ງຜູ້ກ່ຽວບໍ່ຕ້ອງການຜູ້ແປພາສານັ້ນ ຕາມກົດໝາຍແລ້ວບໍ່ໄດ້ມີລະບຽບການໃດໆທີ່ຈະແຕ່ງຕັ້ງຜູ້ແປພາສາໃຫ້ຜູ້ກ່ຽວ ແຕ່ໃນພາກປະຕິບັດຕົວຈິງເພື່ອເປັນການປ້ອງກັນບໍ່ໃຫ້ມີບັນຫາຕາມມາພາຍຫຼັງ ເຫັນຄວນໃຫ້ມີການແຕ່ງຕັ້ງຜູ້ແປພາສາໃຫ້ຜູ້ກ່ຽວໄວ້ ເພື່ອໃຫ້ຄວາມຊ່ວຍເຫຼືອໃນເວລາທີ່ຜູ້ກ່ຽວຕ້ອງການ.

**ຄຳຖາມ 16: ເຈົ້າໜ້າທີ່ສືບສວນ-ສອບສວນ ຈັບຕົວ ທ້າວ ກ ອາຍຸ 16 ປີ ຊຶ່ງເປັນຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ມາດຳເນີນຄະດີຕາມລະບຽບກົດໝາຍ, ໃນການເອົາຄຳໃຫ້ການທ້າວ ກ ເຈົ້າໜ້າທີ່ຈະດຳເນີນການແນວໃດ?**

**ຄຳຕອບ**

ສຳລັບການເອົາຄຳໃຫ້ການຂອງຜູ້ຖືກສົງໄສ ຫຼື ຜູ້ຖືກຫາທີ່ມີອາຍຸຕ່ຳກວ່າ 18 ປີ (ຕໍ່ໄປນີ້ເອີ້ນວ່າ: ເດັກ) ນອກຈາກຈະດຳເນີນຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາແລ້ວ ຍັງຈະຕ້ອງໄດ້ດຳເນີນຕາມຂໍ້ກຳນົດ ຂອງກົດໝາຍວ່າດ້ວຍການດຳເນີນຄະດີເດັກ ຊຶ່ງມີເນື້ອໃນດັ່ງນີ້:

**1. ຜູ້ເຂົ້າຮ່ວມໃນການເອົາຄຳໃຫ້ການເດັກ**

ໃນກໍລະນີເອົາຄຳໃຫ້ການຂອງເດັກ ຈຳເປັນຕ້ອງໃຫ້ມີ ພໍ່, ແມ່, ຜູ້ປົກຄອງ, ຄູ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນເຂົ້າຮ່ວມນຳ (ມາດຕາ 117 ກດຍ ແລະ ມາດຕາ 51 ວັກ 1 ກດດ).

**2. ວິທີການເອົາຄຳໃຫ້ການເດັກ**

**① ຜູ້ເອົາຄຳໃຫ້ການເດັກ**

ໃນການເອົາຄຳໃຫ້ການເດັກນັ້ນ ຕ້ອງໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນຄະດີເດັກທີ່ໄດ້ຮັບການຝຶກອົບຮົມສະເພາະກ່ຽວກັບຂັ້ນຕອນການດຳເນີນຄະດີເດັກມາເປັນຜູ້ດຳເນີນການເອົາຄຳໃຫ້ການ (ມາດຕາ 41 ວັກ 2 ກດດ).

ອີງຕາມສະພາບປັດຈຸບັນຈຳນວນເຈົ້າໜ້າທີ່ຜູ້ທີ່ໄດ້ຮັບການຝຶກອົບຮົມສະເພາະນັ້ນຍັງມີໜ້ອຍ, ໃນພາກປະຕິບັດຕົວຈິງໄດ້ໃຫ້ເຈົ້າໜ້າທີ່ທົ່ວໄປ (ທີ່ບໍ່ໄດ້ຮັບການຝຶກ) ມາຮັບຜິດຊອບດຳເນີນການແທນ. ສະນັ້ນ ຈຶ່ງຈຳເປັນຕ້ອງຮີບຮ້ອນໃນການເພີ່ມຈຳນວນເຈົ້າໜ້າທີ່ຜູ້ທີ່ໄດ້ຮັບການຝຶກນີ້ ໂດຍໄວເພື່ອໃຫ້ບຸກຄົນເຫຼົ່ານັ້ນມາຮັບຜິດຊອບດຳເນີນການ.

ເຖິງວ່າກົດໝາຍຈະບໍ່ໄດ້ກຳນົດໄວ້ກໍຕາມ, ແຕ່ໃນພາກປະຕິບັດຕົວຈິງການເອົາຄຳໃຫ້ການເດັກນັ້ນມີພຽງແຕ່ 2 ຄົນຄື: ຜູ້ສຳພາດ ແລະ ຜູ້ບັນທຶກ. ຖ້າຫາກມີຫຼາຍຄົນເກີນກວ່ານັ້ນອາດຈະກາຍເປັນການກົດດັນຕໍ່ຈິດໃຈຂອງເດັກ.

### ② ສະຖານທີ່ເອົາຄຳໃຫ້ການເດັກ

ສະຖານທີ່ເອົາຄຳໃຫ້ການເດັກຈະຕ້ອງເປັນສະຖານທີ່ ທີ່ເໝາະສົມບໍ່ມີສິ່ງກີດຂວາງ, ມີສະພາບແວດລ້ອມທີ່ເປັນມິດຕໍ່ເດັກ ຫຼື ຕ້ອງດຳເນີນໃນສະຖານທີ່ສະເພາະ (ມາດຕາ 49 ກດດ).

### ③ ເຄື່ອງນຸ່ງຖືຂອງຜູ້ເອົາຄຳໃຫ້ການເດັກ

ເຄື່ອງນຸ່ງຖືຂອງເຈົ້າໜ້າທີ່ໃນເວລາເອົາຄຳໃຫ້ການເດັກນັ້ນ ນອກຈາກກໍລະນີສືບສວນ-ສອບສວນສະຖານທີ່ເກີດເຫດ, ການຊັກຖາມໃນກໍລະນີການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນແລ້ວ ເຈົ້າໜ້າທີ່ຕ້ອງນຸ່ງເຄື່ອງສຸພາບ, ຫ້າມນຸ່ງເຄື່ອງແບບ ແລະ ບໍ່ໃຫ້ຖືອາວຸດຕິດຕົວ. ສຳລັບກໍລະນີ ການສືບສວນ-ສອບສວນສະຖານທີ່ເກີດເຫດກໍຄື ການສຳພາດໃນກໍລະນີການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນນັ້ນ ເພື່ອຫຼີກລ້ຽງບໍ່ໃຫ້ເປັນການກົດດັນເດັກນັ້ນ ເຈົ້າໜ້າທີ່ຄວນເຊື່ອງອາວຸດຂອງຕົນ (ມາດຕາ 50 ກດດ). ທັງນີ້ກໍເພື່ອເປັນການສ້າງຄວາມໄວ້ເນື້ອເຊື່ອໃຈ ແລະ ຄວາມໃກ້ຊິດກັບເດັກ ທັງເປັນການບໍ່ເຮັດໃຫ້ເດັກເກີດຄວາມຢ້ານກົວ. ຖ້າຫາກດຳເນີນການດ້ວຍວິທີນີ້ກໍຈະເຮັດໃຫ້ມີຄວາມເປັນໄປໄດ້ສູງທີ່ເດັກຈະຍອມບອກເລົ່າເຫດການທີ່ຕົນໄດ້ພົບພໍ້ມາໄດ້ຢ່າງລະອຽດຖືກຕ້ອງ.

### ④ ວິທີການສອບຖາມ ຫຼື ສຳພາດເດັກ

ໃນການສອບຖາມ ຫຼື ສຳພາດເດັກຕ້ອງໃຊ້ຄຳເວົ້າທີ່ອ່ອນໂຍນ ແລະ ເຂົ້າໃຈງ່າຍເພື່ອບໍ່ເຮັດໃຫ້ເດັກເກີດຄວາມຢ້ານກົວ, ຫ້າມໃຊ້ຄຳຖາມທີ່ເປັນການກົດດັນ, ຄຳຖາມປິດ ຫຼື ຄຳຖາມລັກສະນະຊັກຈູງ ແລະ ບໍ່ໃຫ້ໃຊ້ກຳລັງ, ບັງຄັບ, ນາບຂູ່, ທຸບຕີ, ທໍລະມານ ແລະ ໃຊ້ວິທີການອື່ນທີ່ບໍ່ຖືກຕ້ອງຕາມກົດໝາຍ (ມາດຕາ 51 ວັກ 2 ກດດ) ໝາຍຄວາມວ່າຜູ້ເອົາຄຳໃຫ້ການນັ້ນຕ້ອງຢູ່ໃນຖານະເປັນກາງ, ບໍ່ໃຫ້ໃຊ້ອາລົມ ແລະ ຄວນໂອ້ລົມຊັກຖາມຕາມແບບປົກກະຕິທົ່ວໄປ. ຕົວຢ່າງ ບໍ່ໃຫ້ຄຳໝັ້ນສັນຍາທີ່ບໍ່ມີຄວາມສາມາດປະຕິບັດໄດ້.

ການເອົາຄຳໃຫ້ການເດັກໃນແຕ່ລະຄັ້ງບໍ່ໃຫ້ເກີນ 90 ນາທີ ເພື່ອໃຫ້ເດັກມີເວລາພັກຜ່ອນ. ໃນກໍລະນີທີ່ເດັກເປັນເພດຍິງນັ້ນ ຜູ້ເອົາຄຳໃຫ້ການຕ້ອງເປັນເພດດຽວກັນ ຫຼື ຖ້າບໍ່ດັ່ງນັ້ນ ກໍຕ້ອງໃຫ້ຜູ້ເຂົ້າຮ່ວມ ທີ່ເປັນເພດຍິງເຂົ້າຮ່ວມຟັງນຳ (ມາດຕາ 51 ວັກ 3 ກດດ).

### ⑤ ການເຮັດບົດບັນທຶກເອົາຄຳໃຫ້ການເດັກ

ການເຮັດບົດບັນທຶກເອົາຄໍາໃຫ້ການເດັກ ຕ້ອງໄດ້ປະຕິບັດຕາມກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ມາດຕາ 117 ແລະ ມາດຕາ 100, ກົດໝາຍວ່າດ້ວຍການດໍາເນີນຄະດີເດັກ ມາດຕາ 55.

**ຄຳຖາມ 17: ທ້າວ ກ ໄດ້ຖືກເຈົ້າໜ້າທີ່ຕຳຫຼວດຈັບຕົວໃນກໍລະນີເຊິ່ງໜ້າ ໂດຍຖືກຕ້ອງຕາມຂັ້ນຕອນຂອງກົດໝາຍ ສະຖານມີຢາເສບຕິດໄວ້ໃນຄອບຄອງ (ຢາບ້າ ແລະ ເຮໂຣອີນ) ຢູ່ຄິວລົດແຫ່ງໜຶ່ງ. ເຈົ້າໜ້າທີ່ໄດ້ຍຶດຢາເສບຕິດທີ່ກວດຄົ້ນໄດ້ຈາກຕົນຕົວຂອງຜູ້ກ່າວໃນສະຖານທີ່ຈັບຕົວໄວ້ເປັນຂອງກາງໃນຄະດີ, ຫຼັງຈາກນັ້ນເຈົ້າໜ້າທີ່ໄດ້ເອົາຄຳໃຫ້ການທ້າວ ກ ຢູ່ສະຖານທີ່ຖືກຈັບຕົວໂດຍຖືກຕ້ອງຕາມ]ກົດໝາຍ ຊຶ່ງຜູ້ກ່າວກໍຮັບສາລະພາບວ່າ ຢູ່ເຮືອນຂອງຜູ້ກ່າວຍັງມີຢາເສບຕິດ ຊຸກເຊື່ອງໄວ້ຕື່ມອີກ. ດັ່ງນັ້ນ, ເຈົ້າໜ້າທີ່ຈຶ່ງໄດ້ເຂົ້າກວດຄົ້ນເຮືອນຂອງຜູ້ກ່າວໂດຍບໍ່ມີຄຳສັ່ງກວດຄົ້ນຂອງຫົວໜ້າອົງການໄອຍະການ ຫຼື ສານ. ເຈົ້າໜ້າທີ່ໄດ້ກວດຄົ້ນເຮືອນຂອງທ້າວ ກ ນັ້ນ ຖືກຕ້ອງຕາມລະບຽບກົດໝາຍ ຫຼື ບໍ່?**

**ຄຳຕອບ**

ການກວດຄົ້ນ ເປັນການລ່ວງລະເມີດສິດພື້ນຖານຂອງພົນລະເມືອງ ຊຶ່ງໃນນັ້ນກໍລວມມີທັງສິດຄວາມເປັນສ່ວນຕົວຢູ່ນຳ. ສະນັ້ນ, ເພື່ອປົກປ້ອງສິດຂອງພົນລະເມືອງ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 121 ວັກ 1 ຈຶ່ງໄດ້ກຳນົດເງື່ອນໄຂທາງດ້ານຮູບການຂອງການກວດຄົ້ນໄວ້ຄື: ການກວດຄົ້ນຈະດຳເນີນໄດ້ກໍຕໍ່ເມື່ອມີຄຳສັ່ງເປັນລາຍລັກອັກສອນຈາກຫົວໜ້າອົງການໄອຍະການ ຫຼື ສານເທົ່ານັ້ນ. ນອກນັ້ນ ມາດຕາ 122 ວັກ 1 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ຍັງໄດ້ກຳນົດເງື່ອນໄຂທາງດ້ານເນື້ອໃນຂອງການກວດຄົ້ນໄວ້ຄື: ① ມີຂໍ້ມູນທີ່ພາໃຫ້ເຊື່ອຖືໄດ້ວ່າໃນເຄຫະສະຖານ, ຍານພາຫະນະ ຫຼື ຕົວບຸກຄົນໄດ້ເກັບມ້ຽນ ຫຼື ຊຸກເຊື່ອງວັດຖຸສິ່ງຂອງທີ່ຜິດກົດໝາຍ ຫຼື ໄດ້ມາຈາກການກະທຳຜິດ ຫຼື ວັດຖຸ ແລະ ເອກະສານອື່ນທີ່ພົວພັນກັບການກະທຳຜິດ. ② ກໍລະນີທີ່ມີຄວາມຈຳເປັນ ເພື່ອເກັບໂຮມຫຼັກຖານທາງດ້ານເອກະສານ ແລະ ວັດຖຸສິ່ງຂອງທີ່ພົວພັນກັບການກະທຳຜິດ. ໃນນັ້ນຂໍ້ ① ແມ່ນມີຄວາມໝາຍວ່າ ກໍລະນີທີ່ມີຂໍ້ມູນທີ່ເຊື່ອຖືໄດ້ວ່າ ມີຄວາມສົງໄສວ່າຈະມີຫຼັກຖານທີ່ພົວພັນກັບການກະທຳຜິດ. ຖ້າເວົ້າໃຫ້ລະອຽດໄປກວ່ານັ້ນກໍໝາຍຄວາມວ່າ ມັນຈຳເປັນຈະຕ້ອງເປັນເຫດຜົນທີ່ພຽງພໍທີ່ຈະເຮັດໃຫ້ສົງໄສວ່າມີການກະທຳຜິດ ແລະ ມີເຫດຜົນອັນສົມຄວນທີ່ຈະເຮັດໃຫ້ຄິດໄດ້ວ່າຫຼັກຖານທີ່ພົວພັນກັບການກະທຳຜິດທີ່ເປັນທີ່ສົງໄສນັ້ນ ແມ່ນ

ຢູ່ໃນສະຖານທີ່, ໃນຍານພາຫະນະ, ໃນຕົວບຸກຄົນດັ່ງກ່າວ. ສະນັ້ນ, ໂດຍອີງຕາມຫຼັກການແລ້ວ ການກວດຄົ້ນຈະດຳເນີນໄດ້ກໍຕໍ່ເມື່ອມີເງື່ອນໄຂຄົບຖ້ວນທາງດ້ານຮູບການ ແລະ ທາງດ້ານເນື້ອໃນຕາມທີ່ໄດ້ກ່າວມາຂ້າງເທິງ.

ນອກຈາກນີ້ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 121 ວັກ 1 ປະໂຫຍກຫຼັງໄດ້ກຳນົດໄວ້ວ່າ ກໍລະນີການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນ ແມ່ນສາມາດທຳການກວດຄົ້ນໄດ້ ໂດຍບໍ່ຈຳເປັນຕ້ອງມີຄຳສັ່ງຂອງຫົວໜ້າອົງການໄອຍະການ ຫຼື ສານ. ໃນຈຸດນີ້ ເຮົາສາມາດຕີຄວາມໝາຍໄດ້ວ່າ ໃນກໍລະນີການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນ ຕາມມາດຕາ 140 ນັ້ນ ແມ່ນສາມາດທຳການກວດຄົ້ນໄດ້ໂດຍບໍ່ຈຳເປັນຕ້ອງມີຄຳສັ່ງ ເພາະເປັນກໍລະນີຍົກເວັ້ນ. ໝາຍຄວາມວ່າ ການຈັບຕົວໃນກໍລະນີເຊິ່ງໜ້າ ຫຼື ຮີບດ່ວນນັ້ນ ຖືວ່າມີເຫດຜົນພຽງພໍທີ່ເຮັດໃຫ້ສົງໄສວ່າໄດ້ມີການກະທຳຜິດດັ່ງກ່າວ ແລະ ຖືກຍອມຮັບໃນຂົງເຂດທີ່ມີເຫດຜົນອັນສົມຄວນ ວ່າມີຫຼັກຖານທີ່ພົວພັນກັບການກະທຳຜິດດັ່ງກ່າວເທົ່ານັ້ນ ຈຶ່ງຈະສາມາດທຳການກວດຄົ້ນໄດ້ໃນກໍລະນີຂໍ້ຍົກເວັ້ນ ໂດຍບໍ່ມີຄຳສັ່ງ.

ເມື່ອພິຈາລະນາຕາມຄວາມໝາຍດັ່ງທີ່ໄດ້ກ່າວມາຂ້າງເທິງແລ້ວເຫັນວ່າ ການກວດຄົ້ນໂດຍບໍ່ມີຄຳສັ່ງທີ່ເປັນລາຍລັກອັກສອນຂອງຫົວໜ້າອົງການໄອຍະການ ຫຼື ສານ ໃນກໍລະນີການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນຕາມມາດຕາ 121 ປະໂຫຍກຫຼັງນີ້ ມັນຕິດພັນກັບການກະທຳຜິດກໍລະນີສະເພາະ ການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນ. ສະນັ້ນ, ຈຶ່ງສາມາດຕີຄວາມໄດ້ວ່າມັນຈະຈຳກັດຢູ່ໃນຂອບເຂດທີ່ຖືກຍອມຮັບວ່າ ມີເຫດຜົນພຽງພໍ ຊຶ່ງສາມາດຊີ້ໃຫ້ເຫັນວ່າມີຫຼັກຖານທີ່ກ່ຽວຂ້ອງກັບການກະທຳຜິດກໍລະນີສະເພາະດັ່ງກ່າວເທົ່ານັ້ນ ຊຶ່ງເຮົາຄວນຕີຄວາມໝາຍວ່າ ຂອບເຂດທາງພື້ນທີ່ ຊຶ່ງຈະດຳເນີນການກວດຄົ້ນໂດຍບໍ່ມີຄຳສັ່ງນັ້ນມັນຈະມີຂອບເຂດຈຳກັດ, ໝາຍວ່າຄວນຈຳກັດ ຢູ່ພາຍໃນຂອບເຂດຮ່າງກາຍຂອງຜູ້ຖືກຈັບຕົວ ແລະ ຂອບເຂດຢູ່ບ່ອນຜູ້ກ່ຽວຖືກຈັບຕົວເທົ່ານັ້ນ ຈຶ່ງເປັນທີ່ຍອມຮັບວ່າເປັນເຫດຜົນທີ່ສົມເຫດສົມຜົນວ່າມີຫຼັກຖານທີ່ກ່ຽວພັນກັບການກະທຳຜິດສະເພາະດັ່ງກ່າວ.

ການກວດຄົ້ນ ທ້າວ ກ ທີ່ຖືກຈັບຕົວໃນກໍລະນີເຊິ່ງໜ້ານັ້ນ ແມ່ນຈະຈຳກັດຢູ່ທີ່ ຕົນຕົວຂອງ ທ້າວ ກ ແລະ ຂອບເຂດບ່ອນທີ່ຜູ້ກ່ຽວຖືກຈັບຕົວເທົ່ານັ້ນ ເຖິງວ່າ ທ້າວ ກ ໄດ້ໃຫ້ການຮັບສາລະພາບວ່າ ໄດ້ຊຸກເຊື່ອງຢາເສບຕິດທີ່ຜິດກົດໝາຍໄວ້ທີ່ເຮືອນຂອງລາວກໍຕາມເຈົ້າໜ້າທີ່ກໍຈະບໍ່ສາມາດທຳການກວດຄົ້ນສະຖານທີ່ດັ່ງກ່າວໄດ້ໂດຍບໍ່ມີຄຳສັ່ງທີ່ເປັນລາຍລັກ

ອັກສອນຂອງຫົວໜ້າອົງການໄອຍະການ ຫຼື ສານ ເນື່ອງມາຈາກການຈັບຕົວໃນກໍລະນີເຊິ່ງໜ້າ. ຕາມຫຼັກການແລ້ວການກວດຄົ້ນເຮືອນຂອງ ທ້າວ ກ ຈະຕ້ອງດໍາເນີນບົນພື້ນຖານທີ່ໄດ້ຮັບຄໍາສັ່ງຈາກຫົວໜ້າອົງການໄອຍະການ ຫຼື ສານ ເສຍກ່ອນ. ສະນັ້ນ, ໃນກໍລະນີນີ້ ການທີ່ເຈົ້າໜ້າທີ່ຕໍາຫຼວດທໍາການກວດຄົ້ນເຮືອນຂອງ ທ້າວ ກ ໂດຍບໍ່ມີຄໍາສັ່ງທີ່ເປັນລາຍລັກອັກສອນຂອງຫົວໜ້າອົງການໄອຍະການ ຫຼື ສານນັ້ນ ແມ່ນບໍ່ຖືກຕ້ອງຕາມກົດໝາຍ. ຊຶ່ງມີຮູບພາບປະກອບດັ່ງນີ້ :



**ຄຳຖາມ 18: ເຈົ້າໜ້າທີ່ໄດ້ທຳການກວດຄົ້ນເຮືອນຂອງທ້າວ ກ ພາຍໃຕ້ຄຳສັ່ງກວດຄົ້ນຢາເສບຕິດ (ຢາບ້າ ແລະ ເຮໂຣອິນ) ທີ່ອອກໃຫ້ຢ່າງຖືກຕ້ອງຕາມກົດໝາຍ. ແຕ່ໃນເວລາກວດຄົ້ນເຮືອນຂອງທ້າວ ກ ພັດໄດ້ພົບເຫັນອາວຸດເສິກ (ປືນ) ທີ່ບໍ່ມີໃບອະນຸຍາດນຳໃຊ້ ຊຶ່ງບໍ່ໄດ້ລະບຸໄວ້ໃນຄຳສັ່ງກວດຄົ້ນດັ່ງກ່າວ. ເຈົ້າໜ້າທີ່ຕຳຫຼວດ ສາມາດຍຶດປືນດັ່ງກ່າວເພື່ອນຳມາເປັນຫຼັກຖານໄດ້ ຫຼື ບໍ່?**

**ຄຳຕອບ**

ສຳລັບປືນທີ່ໄດ້ຄົ້ນພົບໃນເວລາທຳການກວດຄົ້ນເຮືອນຂອງທ້າວ ກ ນັ້ນ ອີງຕາມກົດໝາຍອາຍາ ມາດຕາ 76 ແລ້ວແມ່ນວັດຖຸທີ່ຖືກຫ້າມໃຫ້ມີໄວ້ໃນຄອບຄອງ. ໃນເວລາກວດຄົ້ນເຮືອນຂອງທ້າວ ກ ນັ້ນ ຖ້າຫາກທ້າວ ກ ຢູ່ເຮືອນນັ້ນ, ເຈົ້າໜ້າທີ່ຕຳຫຼວດກໍສາມາດຈັບຕົວຜູ້ກ່ຽວໃນກໍລະນີເຊິ່ງໜ້າ ສະຖານມີສິ່ງຜິດກົດໝາຍ ກໍຄືອາວຸດປືນຢູ່ໃນຄອບຄອງ ຊຶ່ງການຈັບຕົວໃນກໍລະນີເຊິ່ງໜ້ານີ້ສາມາດທຳການກວດຄົ້ນໄດ້ໂດຍບໍ່ຈຳເປັນຕ້ອງມີຄຳສັ່ງ (ມາດຕາ 121 ວັກ 1 ກດຍ) ແລະ ປືນທີ່ຄົ້ນພົບຈາກການກວດຄົ້ນດັ່ງກ່າວກໍສາມາດຍຶດມາໄດ້.

ໃນເວລາກວດຄົ້ນເຮືອນຂອງທ້າວ ກ ນັ້ນຫາກເຈົ້າຂອງປືນບໍ່ຢູ່ ວັດຖຸ ຫຼື ເອກະສານທີ່ຄົ້ນພົບນັ້ນຖ້າກ່ຽວຂ້ອງກັບການກະທຳຜິດ ຫຼື ເປັນສິ່ງທີ່ຜິດກົດໝາຍແລ້ວ ອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 123 ວັກສຸດທ້າຍ ແມ່ນສາມາດຍຶດມາໄດ້ ຊຶ່ງໃນພາກປະຕິບັດຕົວຈິງແມ່ນໄດ້ປະຕິບັດຄືແນວນີ້.

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 126 ວັກ 1 ໄດ້ກຳນົດໃຫ້ສາມາດຍຶດໄດ້ ແຕ່ສິ່ງຂອງທີ່ຕິດພັນກັບຄະດີ ໃນເປົ້າໝາຍຂອງຄຳສັ່ງກວດຄົ້ນເທົ່ານັ້ນ. ນອກຈາກນີ້ແລ້ວ ມາດຕາ 123 ວັກສຸດທ້າຍ ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໄດ້ກຳນົດໄວ້ວ່າ ຖ້າຫາກການກວດຄົ້ນເຄຫະສະຖານທີ່ດຳເນີນຕາມກົດໝາຍແລ້ວ, ຖ້າຫາກພົບສິ່ງທີ່ຜິດກົດໝາຍເຊັ່ນ: ວັດຖຸສິ່ງຂອງ ແລະ ເອກະສານຕ່າງໆ ທີ່ພົວພັນກັບການກະທຳຜິດອື່ນ ທີ່ນອກເໜືອຈາກການກະທຳຜິດໃນເປົ້າໝາຍການກວດຄົ້ນເບື້ອງຕົ້ນນັ້ນ ກໍສາມາດຍຶດເອົາມາໄດ້. ຊຶ່ງມີຮູບພາບ ແລະ ແຜນວາດປະກອບດັ່ງນີ້ :


POLICE REPORT
ໄປກວດຄົ້ນ
ເຈົ້າໜ້າທີ່ມີຄຳສັ່ງກວດຄົ້ນຢາເສບຕິດ
ທີ່ຖືກຕ້ອງຕາມກົດໝາຍ.
ເຮືອນທ້າວ ກ
ໃນເວລາກວດຄົ້ນໄດ້ພົບປືນ
ເຮືອນທ້າວ ກ


ເຈົ້າໜ້າທີ່ກວດຄົ້ນເຮືອນທ້າວ ກ ຄົ້ນພົບເຫັນປືນ
ກໍລະນີທ້າວ ກ ຢູ່ເຮືອນ
ກໍລະນີເຈົ້າຂອງປືນບໍ່ຢູ່ເຮືອນ
ຈັບຕົວທ້າວ ກ ກໍລະນີເຊິ່ງໜ້າ ສະຖານມີສິ່ງ ທີ່ຜິດກົດໝາຍໄວ້ຄອບຄອງ
ຈັບຕົວທ້າວ ກ ກໍລະນີເຊິ່ງໜ້າ ສະຖານມີສິ່ງ ທີ່ຜິດກົດໝາຍໄວ້ຄອບຄອງ
ບໍ່ຈຳເປັນຕ້ອງມີຄຳສັ່ງກວດຄົ້ນຕາມມາດຕາ 121 ວັກ 1 ກດຍ
ວັດຖຸ ຫຼື ເອກະສານ ທີ່ຄົ້ນພົບ ສາມາດຍຶດ ມາໄດ້ຕາມມາດຕາ 123 ວັກສຸດທ້າຍ

ຄຳຖາມ 19: ທ້າວ ກ (ເຈົ້າຂອງເຮືອ) ໄດ້ຂັບເຮືອຂົນສົ່ງສິນຄ້າມາແຕ່ທ່າເຮືອແຫ່ງໜຶ່ງເພື່ອມຸ້ງໜ້າເຂົ້ານະຄອນຫຼວງວຽງຈັນ ແລະ ຈະເດີນທາງຕໍ່ໄປບ່ອນອື່ນ ຊຶ່ງໄລຍະການເດີນທາງນັ້ນເຈົ້າໜ້າທີ່ໄດ້ຮັບແຫຼ່ງຂ່າວ ແລະ ຂໍ້ມູນທີ່ເຊື່ອໄດ້ວ່າເຮືອລຳດັ່ງກ່າວມີຢາເສບຕິດປະເພດ (ຢາບ້າ) ຊຸກເຊື່ອງມານຳ ແລະ ໃນລະຫວ່າງການເດີນທາງ, ເຈົ້າໜ້າທີ່ໄດ້ນຳກຳລັງເຂົ້າກວດຄົ້ນເຮືອແຕ່ ທ້າວ ກ ພວມຈະລົບໜີຈາກການກວດຄົ້ນ ເມື່ອເຈົ້າໜ້າທີ່ເຫັນແນວນັ້ນຈຶ່ງທຳການຈັບຕົວ ແລະ ນຳກຳລັງເຂົ້າກວດຄົ້ນໃນທັນໃດ ແລະ ເວລາກວດຄົ້ນແມ່ນໄດ້ເຮັດຊ້ອງໜ້າເຈົ້າຂອງເຮືອໂດຍບໍ່ມີຄຳສັ່ງກວດຄົ້ນ. ການກວດຄົ້ນເຮືອທ້າວ ກ ຂອງເຈົ້າໜ້າທີ່ໂດຍບໍ່ມີຄຳສັ່ງຖືກຕ້ອງຕາມກົດໝາຍ ຫຼື ບໍ່? ເພາະເຫດໃດ?

**ຄຳຕອບ**

ການກວດຄົ້ນແມ່ນການລະເມີດສິດຂັ້ນພື້ນຖານຂອງບຸກຄົນລວມທັງສິດຄວາມເປັນສ່ວນຕົວຂອງພົນລະເມືອງ, ຖ້າອີງໃສ່ຫຼັກການປົກປ້ອງສິດທິມະນຸດແລ້ວຈຶ່ງມີຄວາມຈຳເປັນຕ້ອງມີຄຳສັ່ງກວດຄົ້ນທີ່ອອກໃຫ້ໂດຍຫົວໜ້າອົງການໄອຍະການ ຫຼື ສານ, ແຕ່ເຈົ້າໜ້າທີ່ຕຳຫຼວດໄດ້ທຳການກວດຄົ້ນເຮືອລຳດັ່ງກ່າວໂດຍບໍ່ມີຄຳສັ່ງ.

ຕາມຫຼັກການແລ້ວກ່ອນຈະກວດຄົ້ນຈຳເປັນຈະຕ້ອງມີຄຳສັ່ງຂໍກວດຄົ້ນຢ່າງເປັນລາຍລັກອັກສອນ ແຕ່ໃນນັ້ນກໍມີກໍລະນີຍົກເວັ້ນທີ່ສາມາດໃຫ້ເຈົ້າໜ້າທີ່ຕຳຫຼວດທຳການກວດຄົ້ນໄດ້ໂດຍບໍ່ຈຳເປັນມີຄຳສັ່ງກໍຄືການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນ (ມາດຕາ 121 ວັກ 1 ກດຍ) ແລະ ເປັນກໍລະນີກວດຄົ້ນຕົວບຸກຄົນທີ່ຖືກຈັບຕົວ, ກັກຂັງ ຫຼື ທີ່ຖືກສົງໄສວ່າໄດ້ຊຸກເຊື່ອງສິ່ງຂອງຕ່າງໆ ທີ່ຜິດກົດໝາຍນັ້ນ ຈະເຮັດຂຶ້ນໂດຍບໍ່ມີຄຳສັ່ງຂອງຫົວໜ້າອົງການໄອຍະການ ຫຼື ສານກໍໄດ້ (ມາດຕາ 124 ວັກ 2 ກດຍ).

ໃນກໍລະນີດັ່ງກ່າວ ອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 121 ວັກ 1 ເຈົ້າໜ້າທີ່ຕຳຫຼວດສາມາດທຳການກວດຄົ້ນໂດຍບໍ່ມີຄຳສັ່ງກໍໄດ້ ແລະ ຖືວ່າເປັນຂໍ້ຍົກເວັ້ນຂອງກົດໝາຍ.

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາມາດຕາ 121 ວັກ 1 ໄດ້ກຳນົດເງື່ອນໄຂທາງດ້ານຮູບການຂອງການກວດຄົ້ນໄວ້ວ່າການກວດຄົ້ນຈະດຳເນີນໄດ້ກໍຕໍ່ເມື່ອມີຄຳສັ່ງຢ່າງເປັນລາຍລັກອັກສອນຂອງຫົວໜ້າອົງການໄອຍະການ ຫຼື ສານ ເທົ່ານັ້ນ, ເວັ້ນເສຍແຕ່ເປັນ

ກໍລະນີການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນ. ນອກຈາກນີ້ ມາດຕາ 122 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາຍັງກຳນົດເງື່ອນໄຂທາງດ້ານເນື້ອໃນຂອງການກວດຄົ້ນໄວ້ຄື:

1. ມີຂໍ້ມູນທີ່ເຊື່ອໄດ້ວ່າໃນເຄຫະສະຖານ, ຍານພາຫະນະ ຫຼື ຕົວບຸກຄົນໄດ້ເກັບມ້ຽນ ຫຼື ຊຸກເຊື່ອງວັດຖຸສິ່ງຂອງທີ່ຜິດກົດໝາຍ ຫຼື ໄດ້ມາຈາກການກະທຳຜິດ ຫຼື ວັດຖຸ ແລະ ເອກະສານອື່ນທີ່ພົວພັນກັບການກະທຳຜິດ;

2. ໃນກໍລະນີຈຳເປັນເພື່ອເກັບໂຮມຫຼັກຖານທາງດ້ານເອກະສານ ແລະ ວັດຖຸສິ່ງຂອງທີ່ພົວພັນກັບການກະທຳຜິດ.

ໃນເງື່ອນໄຂທີ່ 1 ທີ່ກຳນົດວ່າເປັນກໍລະນີທີ່ມີຂໍ້ມູນເຊື່ອຖືໄດ້ວ່າມີຫຼັກຖານກ່ຽວກັບການກະທຳຜິດ, ມີເຫດຜົນພຽງພໍທີ່ສົງໄສວ່າເປັນການກະທຳຜິດ ແລະ ມີຫຼັກຖານທີ່ເຊື່ອຖືວ່າໄດ້ຊຸກເຊື່ອງຢູ່ຍານພາຫະນະ. ດັ່ງນັ້ນ, ການກວດຄົ້ນຈຶ່ງສາມາດດຳເນີນໄດ້ເນື່ອງຈາກມີເຫດຜົນພຽງພໍຄົບຖ້ວນ ແລະ ຄົບຕາມເງື່ອນໄຂທາງດ້ານຮູບການ ແລະ ທາງດ້ານເນື້ອໃນຕາມທີ່ກ່າວມາຂ້າງເທິງນັ້ນ.

ກໍລະນີມີຂໍ້ມູນທີ່ເຊື່ອໄດ້ວ່າມີວັດຖຸສິ່ງຂອງທີ່ພົວພັນກັບການກະທຳຜິດນັ້ນຕ້ອງມີເຫດຜົນພຽງພໍທີ່ສົງໄສວ່າມີການກະທຳຜິດ ແລະ ມີເຫດຜົນສົມຄວນທີ່ໜ້າເຊື່ອຖືວ່າຫຼັກຖານທີ່ພົວພັນກັບການກະທຳຜິດທີ່ເປັນສິ່ງສົງໄສນັ້ນແມ່ນຢູ່ໃນພາຫະນະດັ່ງກ່າວ.

ສຳລັບຄຳສັບທີ່ວ່າການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນ ໃນມາດຕາ 121 ວັກ 1 ແລະ ມາດຕາ 140 ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແມ່ນຄຳສັບອັນດຽວກັນ, ແຕ່ໃນຄວາມໝາຍ ມາດຕາ 121 ວັກ 1 ແມ່ນໝາຍເຖິງການກວດຄົ້ນກໍລະນີກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນເພື່ອຊອກຫາວັດຖຸສິ່ງຂອງທີ່ຜິດກົດໝາຍໂດຍບໍ່ຈຳເປັນຕ້ອງມີຄຳສັ່ງຢ່າງເປັນລາຍລັກອັກສອນຂອງຫົວໜ້າອົງການໄອຍະການ ຫຼື ສານ. ສ່ວນມາດຕາ 140 ເປັນການຈັບຕົວບຸກຄົນທີ່ໄດ້ກະທຳຜິດໃນກໍລະນີການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນ

ເມື່ອທຽບໃສ່ເງື່ອນໄຂຂອງກົດໝາຍແລ້ວເຫັນວ່າການເຂົ້າກວດຄົ້ນເຮືອທ້າວ ກ ຂອງເຈົ້າໜ້າທີ່ໂດຍບໍ່ມີຄຳສັ່ງຂອງຫົວໜ້າອົງການໄອຍະການ ຫຼື ສານແມ່ນສາມາດປະຕິບັດໄດ້ເນື່ອງຈາກວ່າມີຂໍ້ມູນທີ່ເຊື່ອໄດ້ວ່າມີການຊຸກເຊື່ອງຢາເສບຕິດມາພ້ອມກັບເຮືອ ແລະ ທ້າວ ກ ພວມຈະຫຼົບໜີ ເຈົ້າໜ້າທີ່ຈຶ່ງຈັບຕົວເປັນການກະທຳຜິດທີ່ເຊິ່ງໜ້າ ຫຼື ຮີບດ່ວນກໍໄດ້ອັນເປັນເຫດຜົນທີ່ພາໃຫ້ມີຄວາມສົງໄສວ່າຈະມີການກະທຳຜິດຈຶ່ງເປັນສາເຫດທີ່ພາໃຫ້ທຳການກວດຄົ້ນເພື່ອຊອກໃຫ້ເຫັນວັດຖຸສິ່ງຂອງທີ່ຜິດກົດໝາຍ, ເກັບໂຮມຫຼັກຖານຂອງການກະທຳຜິດ

ແລະ ເປັນການສະກັດກັ້ນແຕ່ເບື້ອງຕົ້ນຍ້ອນວ່າເຮືອ ທ້າວ ກ ແມ່ນພາຫະນະທີ່ກຳລັງເຄື່ອນຍ້າຍ ແລະ ຈະເດີນທາງຕໍ່ໄປບ່ອນອື່ນໃນໄລຍະເວລາທີ່ລໍຖ້າຄຳສັ່ງກວດຄົ້ນນັ້ນຢາເສບຕິດທີ່ຊຸກເຊື່ອງໄວ້ຢູ່ໃນເຮືອອາດຈະຖືກທຳລາຍ ຫຼື ຖືກຖິ້ມລົງນ້ຳໄດ້ງ່າຍ. ດັ່ງນັ້ນ, ຈຶ່ງເປັນເງື່ອນໄຂໃຫ້ເຈົ້າໜ້າທີ່ຕຳຫຼວດສາມາດເຂົ້າກວດຄົ້ນເຮືອລຳດັ່ງກ່າວໃນກໍລະນີຮີບດ່ວນໂດຍບໍ່ມີຄຳສັ່ງຂອງຫົວໜ້າອົງການໄອຍະການ ຫຼື ສານກໍໄດ້ພ້ອມກັນນັ້ນເຈົ້າໜ້າທີ່ສາມາດຈັບຕົວທ້າວ ກ ໄດ້ເພາະວ່າເປັນກໍລະນີການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນ. ໃນເວລາກວດຄົ້ນຕ້ອງດຳເນີນໂດຍຊ້ອງໜ້າເຈົ້າຂອງພາຫະນະນັ້ນພາຍຫຼັງກວດຄົ້ນແລ້ວຕ້ອງລາຍງານໃຫ້ອົງການໄອຍະການຊາບພາຍໃນ 24 ຊົ່ວໂມງ.

**ຄຳຖາມ 20: ເຈົ້າໜ້າທີ່ສືບສວນ-ສອບສວນໄດ້ຮັບແຫຼ່ງຂ່າວຈາກພົນລະເມືອງດີວ່າ ໃນເວລາປະມານ 16-17 ໂມງຂອງທຸກໆມື້ ໄດ້ເຫັນແມ່ຍິງຄົນໜຶ່ງຂີ່ລົດຈັກເວບ ສີແດງ-ດຳ ໄປຈອດຢູ່ແຄມທາງໜ້າບ້ານຂອງຕົນ, ພໍຜູ້ກ່ຽວຈອດລົດຈັກກໍໄດ້ເຫັນຊາວໜຸ່ມ 2-3 ຄົນ ຍ່າງເຂົ້າໄປຫາແລ້ວແມ່ຍິງຄົນນັ້ນ ກໍຈົກເອົາຖົງຢາງທີ່ມີຢາເປັນເມັດສີສົ້ມຄ້າຍຄືຢາບ້າອອກຈາກຖົງ ທີ່ຜູ້ກ່ຽວພາຍມານັ້ນຍື່ນໃຫ້ຊາວໜຸ່ມພ້ອມທັງໄດ້ຈ່າຍເງິນໃຫ້ກັນແລ້ວຈຶ່ງແຍກກັນໄປຄົນລະທາງຢ່າງຟ້າວຟັ່ງ, ສົງໄສວ່າຈະເປັນການຊື້-ຂາຍຢາເສບຕິດ. ເຈົ້າໜ້າທີ່ຈຶ່ງໄປລໍຖ້າຢູ່ບໍລິເວນດັ່ງກ່າວ ພໍຮອດເວລາ 17 ໂມງ 00 ນາທີ ເຈົ້າໜ້າທີ່ກໍໄດ້ພົບເຫັນເປົ້າໝາຍຂີ່ລົດມາຈອດຢູ່ບໍລິເວນເກົ່າ, ໃນເວລານັ້ນເຈົ້າໜ້າທີ່ ກໍໄດ້ສະແດງຕົວເຂົ້າກວດຄົ້ນຕົວຂອງແມ່ຍິງຄົນນັ້ນທັນທີ ໃນສະຖານທີ່ກຳບັງ ໂດຍບໍ່ມີຄຳສັ່ງກວດຄົ້ນ. ການກວດຄົ້ນດັ່ງກ່າວຖືກຕ້ອງຕາມກົດໝາຍ ຫຼື ບໍ່?**

**ຄຳຕອບ**

ເນື່ອງຈາກວ່າການກວດຄົ້ນເປັນການລະເມີດສິດພື້ນຖານຂອງພົນລະເມືອງ ຊຶ່ງໃນນັ້ນກໍລວມມີສິດຄວາມເປັນສ່ວນຕົວຢູ່ນຳ. ເມື່ອຄຳນຶງເຖິງເນື້ອໃນຈິດໃຈຂອງການປົກປ້ອງສິດຂອງພົນລະເມືອງນັ້ນ ຕາມຫຼັກການແລ້ວຈຳເປັນຈະຕ້ອງມີຄຳສັ່ງຂອງຫົວໜ້າອົງການໄອຍະການ ຫຼື ສານ ເພື່ອດຳເນີນການ. ແຕ່ໃນນັ້ນ ກໍມີກໍລະນີຍົກເວັ້ນທີ່ສາມາດທຳການກວດຄົ້ນຕົວບຸກຄົນໄດ້ໂດຍບໍ່ມີຄຳສັ່ງ ຊຶ່ງແມ່ນກໍລະນີການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນ, ການກວດຄົ້ນຍານພາຫະນະ ທີ່ຖືກສົງໄສວ່າໄດ້ມີການຊຸກເຊື່ອງສິ່ງທີ່ຜິດກົດໝາຍ ຫຼື ຜູ້ກະທຳຜິດ ຕາມມາດຕາ 124 ວັກ 1 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ແລະ ການກວດຄົ້ນຕົວບຸກຄົນຜູ້ທີ່ຖືກຄວບຄຸມຕົວ ຫຼື ບຸກຄົນຜູ້ທີ່ຖືກສົງໄສວ່າໄດ້ຊຸກເຊື່ອງສິ່ງຂອງຕ່າງໆ ທີ່ຜິດກົດໝາຍ ຕາມມາດຕາ 124 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ໃນກໍລະນີນີ້, ກໍມີຄວາມເປັນໄປໄດ້ທີ່ຈະສາມາດ ທຳການກວດຄົ້ນໂດຍປາສະຈາກຄຳສັ່ງ ບົນພື້ນຖານ ມາດຕາ 124 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ການທີ່ຈະສາມາດດຳເນີນການກວດຄົ້ນຕົວບຸກຄົນໂດຍບໍ່ມີຄຳສັ່ງ ອີງຕາມມາດຕາ 124 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍານັ້ນ, ສຳລັບຜູ້ທີ່ຖືກສົງໄສວ່າມີການຊຸກເຊື່ອງສິ່ງຂອງທີ່ຜິດກົດໝາຍນັ້ນ ຈະຕ້ອງຄົບຕາມເງື່ອນໄຂຂອງການກວດຄົ້ນຕາມມາດຕາ 122 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາເສຍກ່ອນ ໝາຍຄວາມວ່າຕ້ອງໃຫ້ຄົບຕາມເງື່ອນໄຂຕໍ່ໄປນີ້:

1. ກໍລະນີທີ່ມີຂໍ້ມູນທີ່ເຊື່ອຖືໄດ້ວ່າ ໃນຕົວບຸກຄົນໄດ້ເກັບມ້ຽນ ຫຼື ຊຸກເຊື່ອງວັດຖຸສິ່ງຂອງທີ່ຜິດກົດໝາຍ ຫຼື ໄດ້ມາຈາກການກະທຳຜິດ ຫຼື ວັດຖຸ ແລະ ເອກະສານອື່ນທີ່ພົວພັນກັບການກະທຳຜິດ;

2. ກໍລະນີຈຳເປັນ ເພື່ອເກັບໂຮມຫຼັກຖານທາງດ້ານເອກະສານ ແລະ ວັດຖຸສິ່ງຂອງທີ່ພົວພັນການກະທຳຜິດ.

ນອກນັ້ນ ໃນການດຳເນີນການກວດຄົ້ນນັ້ນ ກໍລະນີຜູ້ຖືກກວດຄົ້ນເປັນເພດຍິງ, ຈຳເປັນຈະຕ້ອງດຳເນີນໃນສະຖານທີ່ທີ່ມີສິ່ງກຳບັງ ແລະ ດຳເນີນໂດຍເຈົ້າໜ້າທີ່ສືບສວນ-ສອບສວນທີ່ເປັນແມ່ຍິງ (ມາດຕາ 124 ວັກ 3 ກດຍ).

ເມື່ອສົມທຽບໃສ່ກໍລະນີຂ້າງເທິງນີ້ແລ້ວ ເຫັນວ່າການໃຫ້ແຫຼ່ງຂ່າວຂອງພົນລະເມືອງແມ່ນມີຄວາມຈະແຈ້ງ, ເຊື່ອຖືໄດ້ ແລະ ເປັນຮູບປະທຳ ເນື່ອງຈາກວ່າພຶດຕິກຳດັ່ງກ່າວມີລັກສະນະຂອງການຊື້-ຂາຍຢາເສບຕິດເປັນຕົ້ນ ການຈົກເອົາຖົງຢາງທີ່ມີຢາເປັນເມັດສີສົ້ມຄ້າຍຄືຢາບ້າອອກຈາກຖົງທີ່ຜູ້ກ່ຽວພາຍມານັ້ນ ຍື່ນໃຫ້ຊາວໜຸ່ມພ້ອມທັງໄດ້ຈ່າຍເງິນໃຫ້ກັນແລ້ວກໍແຍກກັນໄປຄົນລະທາງຢ່າງຟ້າວຟັ່ງ. ສະນັ້ນ, ໃນກໍລະນີນີ້ ຈຶ່ງເຫັນວ່າມີຂໍ້ມູນທີ່ໜ້າເຊື່ອຖືໄດ້ວ່າຜູ້ຍິງຄົນດັ່ງກ່າວໄດ້ຊຸກເຊື່ອງສິ່ງຂອງທີ່ຜິດກົດໝາຍ ແລະ ຈຳເປັນເພື່ອເກັບໂຮມຫຼັກຖານທາງດ້ານວັດຖຸສິ່ງຂອງທີ່ພົວພັນກັບການກະທຳຜິດ ຊຶ່ງສອດຄ່ອງ ແລະ ຖືກຕ້ອງຕາມສາເຫດທີ່ພາໃຫ້ທຳການກວດຄົ້ນຕາມມາດຕາ 122 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ໃນກໍລະນີທີ່ຜູ້ຖືກກວດຄົ້ນເປັນແມ່ຍິງ ຊຶ່ງກົດໝາຍວ່າດ້ວຍການດຳເນີນຄະດີອາຍາມາດຕາ 124 ວັກ 3 ໄດ້ກຳນົດໄວ້ວ່າ ເຈົ້າໜ້າທີ່ຜູ້ທຳການກວດຄົ້ນຕົວແມ່ຍິງ ຕ້ອງແມ່ນບຸກຄົນທີ່ເປັນເພດດຽວກັນ ແລະ ການກວດຄົ້ນນັ້ນ ຕ້ອງເຮັດໃນສະຖານທີ່ກຳບັງ. ໃນກໍລະນີຂ້າງເທິງນີ້ ໄດ້ທຳການກວດຄົ້ນຢູ່ສະຖານທີ່ກຳບັງແລ້ວ. ສະນັ້ນ, ຖ້າວ່າເຈົ້າໜ້າທີ່ຜູ້ທຳການ

ກວດຄົ້ນຕົວຜູ້ກ່ຽວນັ້ນແມ່ນເພດດຽວກັນ (ແມ່ຍິງ) ແມ່ນຖືກຕ້ອງຕາມກົດໝາຍ, ແຕ່ກົງກັນຂ້າມຖ້າເຈົ້າໜ້າທີ່ຜູ້ທຳການກວດຄົ້ນເປັນເພດຊາຍແມ່ນລະເມີດກົດໝາຍ.

# IV. ມາດຕະການສະກັດກັ້ນ

**ຄຳຖາມ 21: ການພາຕົວຜູ້ຖືກສົງໄສ, ຜູ້ຖືກຫາທີ່ບໍ່ຖືກກັກຕົວ ຫຼື ກັກຂັງພາງ, ພະຍານ, ໂຈດທາງແພ່ງ ແລະ ຜູ້ຮັບຜິດຊອບທາງແພ່ງນັ້ນ ຕ້ອງມີເງື່ອນໄຂໃດແດ່?**

**ຄຳຕອບ**

ການພາຕົວແມ່ນໜຶ່ງໃນມາດຕະການສະກັດກັ້ນເພື່ອຈຳກັດສິດເສລີພາບໃນການໄປມາຂອງບຸກຄົນໃນຂອບເຂດໄລຍະເວລາໃດໜຶ່ງໂດຍມີການຄວບຄຸມ ແລະ ນຳເອົາຕົວບຸກຄົນນັ້ນມາສະຖານທີ່ສືບສວນ-ສອບສວນເພື່ອຕອບຄຳຖາມ ຫຼື ໃຫ້ຄວາມກະຈ່າງແຈ້ງກ່ຽວກັບບັນຫາໃດໜຶ່ງຕໍ່ເຈົ້າໜ້າທີ່ສືບສວນ-ສອບສວນ. ສິດເສລີພາບດັ່ງກ່າວນັ້ນໄດ້ຮັບການປົກປ້ອງຕາມມາດຕາ 42 ຂອງລັດຖະທຳມະນູນ. ສະນັ້ນ, ການພາຕົວຈຶ່ງບໍ່ສາມາດດຳເນີນການໄດ້ໂດຍບໍ່ມີຂອບເຂດ ໝາຍຄວາມວ່າຈະດຳເນີນການໄດ້ແຕ່ຢູ່ໃນຂອບເຂດທີ່ກົດໝາຍກຳນົດໄວ້ເຊັ່ນ: ໃນກໍລະນີທີ່ມີພື້ນຖານທີ່ໜັກແໜ້ນວ່າຈະສ້າງຄວາມຫຍຸ້ງຍາກໃຫ້ການສືບສວນ-ສອບສວນ ຕາມມາດຕາ 135 ແລະ ຄືບຕາມເງື່ອນໄຂທີ່ໄດ້ກຳນົດລະອຽດໃນມາດຕາ 137 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາເທົ່ານັ້ນ.

**ເງື່ອນໄຂຂອງການພາຕົວ:**

1). ມີຄຳສັ່ງພາຕົວຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການ ຫຼື ສານ ຕໍ່ບຸກຄົນນັ້ນ;

2). ບຸກຄົນນັ້ນ ຕ້ອງໄດ້ຮັບໝາຍຮຽກເຖິງ 3 ຄັ້ງ;

3). ບຸກຄົນນັ້ນ ບໍ່ເຂົ້າມາຕາມໝາຍຮຽກໂດຍບໍ່ມີເຫດຜົນພຽງພໍ.

ໃນເງື່ອນໄຂດັ່ງທີ່ໄດ້ກ່າວມາໃນຂ້າງເທິງນັ້ນ, ຄຳວ່າບໍ່ເຂົ້າມາຕາມໝາຍຮຽກໂດຍບໍ່ມີເຫດຜົນພຽງພໍ ແມ່ນໝາຍເຖິງບຸກຄົນທີ່ບໍ່ໄດ້ຖືກຍອມຮັບວ່າບໍ່ສາມາດເຂົ້າມາໄດ້ຍ້ອນເຫດ

ຜົນຈຳເປັນສຸດວິໄສ ແຕ່ບຸກຄົນເຫຼົ່ານັ້ນກໍບໍ່ໄດ້ເຂົ້າມາຕາມໝາຍຮຽກ[12].

**ຕົວຢ່າງ 1:** ໃນກໍລະນີເຈົ້າໜ້າທີ່ສືບສວນ-ສອບສວນສົ່ງໝາຍຮຽກໄປຫາທ້າວ ກ ທີ່ເປັນຜູ້ຖືກສົງໄສເຖິງ 3 ຄັ້ງແລ້ວ. ຜູ້ກ່ຽວໄດ້ຮັບໝາຍຮຽກພຽງ 2 ຄັ້ງ, ແຕ່ມີແຫຼ່ງຂ່າວວ່າຜູ້ກ່ຽວກຳລັງຈະເອົາຕົວຫຼົບໜີ. ດັ່ງນັ້ນ, ເຈົ້າໜ້າທີ່ສືບສວນ-ສອບສວນຈຶ່ງນຳກຳລັງໄປພາຕົວທ້າວ ກ ມາໃຫ້ການຢູ່ຫ້ອງການ ປກສ ເມືອງໂດຍບໍ່ມີຄຳສັ່ງພາຕົວ.

ໃນກໍລະນີດັ່ງກ່າວນີ້ເຫັນວ່າເຈົ້າໜ້າທີ່ສືບສວນ-ສອບສວນໄດ້ລະເມີດເງື່ອນໄຂຂອງການພາຕົວເນື່ອງຈາກວ່າບໍ່ມີຄຳສັ່ງພາຕົວ. ສະນັ້ນ, ການພາຕົວທ້າວ ກ ຈຶ່ງເປັນການພາຕົວທີ່ບໍ່ຖືກຕ້ອງຕາມກົດໝາຍ.

**ຕົວຢ່າງ 2:** ທ້າວ ຂ (ຜູ້ຖືກຫາ) ໄດ້ຮັບໝາຍຮຽກຈາກຫົວໜ້າອົງການສືບສວນ-ສອບສວນເຖິງ 3 ຄັ້ງແລ້ວ, ແຕ່ບໍ່ເຂົ້າມາສະເໜີຕົວຕາມໝາຍຮຽກຍ້ອນວ່າ ເມຍຂອງຜູ້ກ່ຽວຫາກໍອອກລູກໃໝ່ ແລະ ກຳລັງຢູ່ກຳ. ດັ່ງນັ້ນ, ເຈົ້າໜ້າທີ່ສືບສວນ-ສອບສວນຈຶ່ງຂໍຄຳສັ່ງພາຕົວຈາກຫົວໜ້າອົງການສືບສວນ-ສອບສວນ ແລະ ພາຍຫຼັງໄດ້ຮັບຄຳສັ່ງແລ້ວກໍໄດ້ເອົາຄຳສັ່ງດັ່ງກ່າວໄປພາຕົວທ້າວ ຂ ມາໃຫ້ການຢູ່ອົງການສືບສວນ-ສອບສວນ (ປກສ ເມືອງ). ໃນກໍລະນີນີ້ ເຈົ້າໜ້າທີ່ຕຳຫຼວດໄດ້ສົ່ງໝາຍຮຽກໄປເຖິງ 3 ຄັ້ງ ແລະ ທ້າວ ຂ ເອງກໍໄດ້ຮັບໝາຍຮຽກທັງ 3 ຄັ້ງນັ້ນແລ້ວ, ແຕ່ມີເຈດຕະນາບໍ່ເຂົ້າມາຕາມໝາຍຮຽກ. ເຈົ້າໜ້າທີ່ສືບສວນ-ສອບສວນຈຶ່ງໄດ້ພາຕົວຜູ້ກ່ຽວຕາມຄຳສັ່ງພາຕົວ ແລະ ເຫດຜົນທີ່ທ້າວ ຂ ບໍ່ເຂົ້າມານັ້ນ ຍ້ອນວ່າເມຍຂອງຜູ້ກ່ຽວຫາກໍອອກລູກໃໝ່ ແລະ ກຳລັງຢູ່ກຳ ແຕ່ເມື່ອພິຈາລະນາແລ້ວເຫັນວ່າຜູ້ກ່ຽວມີຄວາມສາມາດຮ້ອງຂໍໃຫ້ພໍ່ແມ່ ຫຼື ບຸກຄົນອື່ນທີ່ໄວ້ວາງໃຈມາເບິ່ງໃຫ້ຊົ່ວຄາວໄດ້ນັ້ນ, ເຫັນວ່າບໍ່ສາມາດຖືເອົາເຫດຜົນທີ່ຜູ້ກ່ຽວອ້າງມານີ້ວ່າເປັນຄວາມຈຳເປັນສຸດວິໄສໄດ້, ໝາຍຄວາມ

---

[12] ການທີ່ຈະຖືວ່າເປັນຜູ້ທີ່ບໍ່ສາມາດເຂົ້າມາຕາມໝາຍຮຽກໄດ້ຍ້ອນເຫດຜົນຈຳເປັນສຸດວິໄສ ຫຼື ບໍ່ນັ້ນ ເພິ່ນໄດ້ອີງໃສ່ຫຼາຍປັດໃຈລວມກັນເພື່ອພິຈາລະນາ. ສຳລັບບຸກຄົນທີ່ຈັດຢູ່ໃນສະຖານະພາບເທົ່າທຽມກັບກໍລະນີແມ່ຍິງຖືພາມານ, ຄົນເຈັບປ່ວຍຜູ້ທີ່ບໍ່ສາມາດອອກຈາກສະຖານທີ່ ຊຶ່ງໄດ້ຮັບການຢັ້ງຢືນຈາກຄະນະແພດ ທີ່ກຳນົດໄວ້ໃນມາດຕາ 137 ວັກສຸດທ້າຍຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍານັ້ນກໍສາມາດໄດ້ຮັບການພິຈາລະນາເຊັ່ນດຽວກັນ. ຕົວຢ່າງ: ຜູ້ຍິງທີ່ຫາກໍເກີດລູກໃໝ່ຊຶ່ງເດັກຍັງບໍ່ຮອດ 5 ເດືອນ, ຜູ້ທີ່ມີລູກ, ພໍ່, ແມ່, ຜົວ ຫຼື ເມຍ ທີ່ເຈັບປ່ວຍໜັກ ຫຼື ນອນປ່ວຍຢູ່ຫ້ອງໄອຊີຢູ.

ວ່າການບໍ່ເຂົ້າມາຂອງທ້າວ ຂ ຈຶ່ງຖືວ່າບໍ່ມີເຫດຜົນພຽງພໍ. ດັ່ງນັ້ນ, ການພາຕົວທ້າວ ຂ ຄື ດັ່ງກ່າວຈຶ່ງຖືວ່າເປັນການພາຕົວທີ່ຖືກຕ້ອງຕາມກົດໝາຍ.

ຄຳຖາມ 22: ເຈົ້າໜ້າທີ່ສືບສວນ-ສອບສວນໄດ້ເອົາຄຳໃຫ້ການ ທ້າວ ກ(ຜູ້ຖືກສົງໄສໃນຄະດີລັກຊັບ) ຜູ້ກ່ຽວໃຫ້ການຮັບສາລະພາບວ່າ ໄດ້ລັກລົດຈັກຂອງ ທ້າວ ຂ ແລ້ວເອົາໄປຂາຍໃຫ້ນາງ ຄ ເມື່ອເຈົ້າໜ້າທີ່ສອບຖາມ ນາງ ຄ ໃຫ້ການວ່າ: ໄດ້ຊື້ລົດຈັກຈາກ ທ້າວ ກ ແທ້ພ້ອມທັງຖືກ ທ້າວ ກ ຂົ່ມຂູ່ວ່າຖ້າບອກຄົນອື່ນຕົນ ແລະ ຄອບຄົວຈະຖືກທຳຮ້າຍຮ່າງກາຍ ຫຼື ຄາດຕະກຳ, ພ້ອມກັນນັ້ນກໍໄດ້ພົບເຫັນລົດຈັກຂອງ ທ້າວ ຂ ຢູ່ເຮືອນ ນາງ ຄ ແທ້ ເຈົ້າໜ້າທີ່ຕຳຫຼວດຈຶ່ງໄດ້ກັກຕົວທ້າວ ກ ໄວ້.

22.1 ການກັກຕົວທ້າວ ກ ຂອງເຈົ້າໜ້າທີ່ສືບສວນ-ສອບສວນໂດຍບໍ່ມີຄຳສັ່ງກັກຕົວຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການ ຖືກຕ້ອງຕາມກົດໝາຍ ຫຼື ບໍ່?

22.2: ເຈົ້າໜ້າທີ່ສືບສວນ-ສອບສວນໄດ້ກັກຕົວທ້າວ ກ ໃນຕອນແລງຂອງວັນສຸກຫຼັງຈາກນັ້ນ ມາຮອດວັນຈັນຂອງອາທິດຕໍ່ມາ ຈຶ່ງຂໍຄຳສັ່ງກັກຕົວ. ການກັກຕົວໃນກໍລະນີດັ່ງກ່າວ ຖືກຕ້ອງຕາມກົດໝາຍ ຫຼື ບໍ່?

22.3: ເຈົ້າໜ້າທີ່ສືບສວນ-ສອບສວນໄດ້ກັກຕົວ ທ້າວ ກ ຕາມຄຳສັ່ງກັກຕົວຂອງຫົວໜ້າອົງການສືບສວນ-ສອບສວນໃນຕອນແລງວັນສຸກ ແລ້ວວັນຈັນຂອງອາທິດຕໍ່ມາຈຶ່ງລາຍງານ ໃຫ້ຫົວໜ້າອົງການໄອຍະການຊາບ, ການກັກຕົວດັ່ງກ່າວຖືກຕ້ອງຕາມກົດໝາຍ ຫຼື ບໍ່?

22.4: ເຈົ້າໜ້າທີ່ສືບສວນ-ສອບສວນໄດ້ກັກຕົວທ້າວ ກ ໂດຍມີຄຳສັ່ງກັກຕົວທີ່ຖືກຕ້ອງ ແຕ່ໄລຍະເວລາການກັກຕົວໄດ້ເກີນເວລາທີ່ກຳນົດໄວ້ ພາຍໃນສີ່ສິບແປດຊົ່ວໂມງ. ການກັກຕົວໃນກໍລະນີນີ້ຖືກຕ້ອງຕາມກົດໝາຍ ຫຼື ບໍ່?

**ຄຳຕອບ 22.1**

ການກັກຕົວແມ່ນໜຶ່ງໃນບັນດາມາດຕະການສະກັດກັ້ນທີ່ໃຊ້ກັກຕົວຜູ້ຖືກສົງໄສຊົ່ວຄາວກ່ອນການອອກຄຳສັ່ງເປີດການສືບສວນ-ສອບສວນແມ່ນມາດຕະການທີ່ກະທົບຕໍ່ເສລີພາບທາງດ້ານຮ່າງກາຍ ແລະ ຈິດໃຈຂອງບຸກຄົນ ກົດໝາຍຈຶ່ງກຳນົດວ່າຈະກັກຕົວຜູ້ຖືກສົງໄສຜູ້ໃດຜູ້ໜຶ່ງໄດ້ຕ້ອງມີຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການ ແຕ່ໃນກໍລະນີນີ້ເຈົ້າໜ້າທີ່ຕຳຫຼວດກັກຕົວໂດຍບໍ່ມີຄຳສັ່ງ.

ອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 12 ວັກ 1 ກຳນົດວ່າບໍ່ອະນຸຍາດໃຫ້ກັກຕົວໂດຍບໍ່ມີຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການ.

ການກັກຕົວທີ່ຖືກຕ້ອງຕາມກົດໝາຍນັ້ນຕ້ອງມີຄຳສັ່ງຢ່າງເປັນລາຍລັກອັກສອນຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການ ແລະ ປະຕິບັດໃຫ້ຖືກຕ້ອງຕາມເງື່ອນໄຂຂອງການອອກຄຳສັ່ງກັກຕົວ ຊຶ່ງເງື່ອນໄຂໃນການອອກຄຳສັ່ງກັກຕົວທີ່ຖືກຕ້ອງຕາມກົດໝາຍນັ້ນມີດັ່ງລຸ່ມນີ້:

1. ເພື່ອສະກັດກັດກັ້ນການກະທຳຜິດຢ່າງທັນການຂອງຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ເມື່ອມີພື້ນຖານທີ່ພາໃຫ້ເຊື່ອໝັ້ນວ່າຜູ້ຖືກສົງໄສຈະສ້າງຄວາມຫຍຸ້ງຍາກໃຫ້ແກ່ການສືບສວນ-ສອບສວນ, ການສັ່ງຟ້ອງ ຫຼື ການພິຈາລະນາຕັດສີນຄະດີຂອງສານລວມທັງຮັບປະກັນການປະຕິບັດຄຳຕັດສີນຂອງສານເຈົ້າໜ້າທີ່ຈຶ່ງໄດ້ນຳໃຊ້ມາດຕະການສະກັດກັ້ນດັ່ງກ່າວ, ໃນມາດຕາ 135 ທີ່ກຳນົດພື້ນຖານທີ່ພາໃຫ້ນຳໃຊ້ມາດຕະການສະກັດກັ້ນນັ້ນບໍ່ໄດ້ກຳນົດໃຫ້ນຳໃຊ້ຕໍ່ຜູ້ຖືກສົງໄສ ໝາຍຄວາມວ່າມາດຕາດັ່ງກ່າວໃຫ້ນຳໃຊ້ໄດ້ສະເພາະຜູ້ຖືກຫາ ຫຼື ຈຳເລີຍເທົ່ານັ້ນ. ຖ້າຫາກພິຈາລະນາຈາກ ມາດຕາ 136 ທີ່ກຳນົດປະເພດຂອງມາດຕະການສະກັດກັ້ນແລ້ວຈະເຫັນວ່າ ບາງມາດຕະການເຊັ່ນ: ການກັກຕົວ ສາມາດນຳໃຊ້ກັບຜູ້ຖືກສົງໄສໄດ້. ດັ່ງນັ້ນ, ການກັກຕົວຕາມທີ່ໄດ້ກຳນົດໄວ້ໃນມາດຕາ 138 ຈຶ່ງເປັນມາດຕະການທີ່ເປັນພື້ນຖານນຳໃຊ້ໄດ້ກັບຜູ້ຖືກສົງໄສຕາມທີ່ໄດ້ກຳນົດໄວ້ໃນມາດຕາ 135 ເຊັ່ນກັນ.

2. ຕ້ອງມີຂໍ້ມູນຫຼັກຖານໜັກແໜ້ນວ່າຜູ້ກ່ຽວໄດ້ກະທຳຜິດທາງອາຍາທີ່ກົດໝາຍໄດ້ກຳນົດໂທດຕັດອິດສະລະພາບ ຫົວໜ້າອົງການສືບສວນ-ສອບສວນອາດຈະອອກຄຳສັ່ງກັກຕົວຜູ້ກ່ຽວໄວ້ໄດ້ພາຍໃນກຳນົດ ສີ່ສິບແປດຊົ່ວໂມງເທົ່ານັ້ນເພື່ອດຳເນີນການສືບສວນ-ສອບສວນຕາມມາດຕາ 138 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

3. ການກັກຕົວແມ່ນເຮັດຂຶ້ນພາຍຫຼັງທີ່ໄດ້ເອົາຄຳໃຫ້ການຂອງຜູ້ຖືກສົງໄສແລ້ວ ແລະ ສາມາດກັກຕົວໄວ້ຊົ່ວຄາວໂດຍມີຄຳສັ່ງກັກຕົວຢ່າງເປັນລາຍລັກອັກສອນຂອງຫົວໜ້າອົງການສືບສວນ-ສອບສວນ. ພ້ອມກັນນັ້ນຫົວໜ້າອົງການສືບສວນ-ສອບສວນຕ້ອງລາຍງານເປັນລາຍລັກອັກສອນໃຫ້ຫົວໜ້າອົງການໄອຍະການຊາບພາຍໃນກຳນົດຊາວສີ່ຊົ່ວໂມງນັບແຕ່ເວລາກັກຕົວເປັນຕົ້ນໄປ. ໃນການກັກຕົວ ເຈົ້າໜ້າທີ່ສືບສວນ-ສອບສວນຕ້ອງອ່ານຄຳສັ່ງກັກຕົວພ້ອມທັງແຈ້ງສິດ ແລະ ພັນທະໃຫ້ຜູ້ຖືກກັກຕົວຊາບ, ພ້ອມທັງແຈ້ງສະຖານທີ່ກັກຕົວໃຫ້ຄອບຄົວ, ສຳນັກງານ, ອົງການທີ່ຜູ້ກ່ຽວສັງກັດຢູ່ຊາບພາຍໃນກຳນົດຊາວສີ່ຊົ່ວໂມງ ແລະ ກຳນົດເວລາຂອງການກັກຕົວນັ້ນແມ່ນສີ່ສິບແປດຊົ່ວໂມງເທົ່ານັ້ນ.

ອີງຕາມການຂົ່ມຂູ່ຂອງທ້າວ ກ ໄດ້ຂົ່ມຂູ່ນາງ ຄ ຜູ້ທີ່ຊື້ລົດຈັກຈາກທ້າວ ກ ວ່າຖ້ານາງ ຄ ບອກເລື່ອງນີ້ໃຫ້ຄົນອື່ນຮູ້ທ້າວ ກ ຈະທຳຮ້າຍນາງ ຄ ພ້ອມທັງຄອບຄົວ ຊຶ່ງເຮັດໃຫ້ນາງ ຄ ມີຄວາມຢ້ານກົວ. ຈາກເຫດຜົນດັ່ງກ່າວຈຶ່ງມີຄວາມເປັນໄປໄດ້ສູງວ່ານາງ ຄ ຈະປະຕິເສດບໍ່ໃຫ້ການຮ່ວມມືກັບເຈົ້າໜ້າທີ່ສືບສວນ-ສອບສວນ. ໃນກໍລະນີດັ່ງກ່າວຈຶ່ງສາມາດເວົ້າໄດ້ວ່າເປັນການສ້າງຄວາມຫຍຸ້ງຍາກໃຫ້ແກ່ການດຳເນີນການສືບສວນ-ສອບສວນ. ສະນັ້ນ, ຈຶ່ງສາມາດຕີຄວາມໝາຍໄດ້ວ່າການກະທຳຂອງທ້າວ ກ ມີພື້ນຖານທີ່ພາໃຫ້ເຊື່ອໝັ້ນໄດ້ວ່າຈະສ້າງ

ຄວາມຫຍຸ້ງຍາກໃຫ້ແກ່ການສືບສວນ-ສອບສວນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 135 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ນອກຈາກນັ້ນ ທ້າວ ກ ຍັງໄດ້ຮັບສາລະພາບວ່າຕົນເປັນຜູ້ລັກລົດຈັກຂອງທ້າວ ຂ ແທ້ ແລະ ເຈົ້າໜ້າທີ່ກໍໄດ້ພົບເຫັນລົດຈັກຄັນດັ່ງກ່າວຢູ່ເຮືອນນາງ ຄ ແລະ ນາງ ຄ ໄດ້ໃຫ້ການວ່າຕົນໄດ້ຊື້ລົດຈັກຄັນນີ້ຈາກທ້າວ ກ ແທ້.

ໃນກໍລະນີນີ້ຈຶ່ງເຫັນວ່າມີຂໍ້ມູນຫຼັກຖານໜັກແໜ້ນວ່າທ້າວ ກ ເປັນຜູ້ກະທຳຜິດທາງອາຍາໃນຂໍ້ຫາການລັກຊັບຂອງພົນລະເມືອງ ຕາມມາດຕາ 119 ຂອງກົດໝາຍອາຍາຈຶ່ງຖືວ່າມີເງື່ອນໄຂອອກຄຳສັ່ງກັກຕົວໄດ້ຕາມມາດຕາ 138 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ. ຈາກເຫດຜົນດັ່ງກ່າວຈຶ່ງມີເງື່ອນໄຂອອກຄຳສັ່ງກັກຕົວທ້າວ ກ ໄດ້, ແຕ່ວ່າເຈົ້າໜ້າທີ່ຕຳຫຼວດໄດ້ກັກຕົວທ້າວ ກ ໂດຍບໍ່ມີຄຳສັ່ງກັກຕົວຈາກຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການຈຶ່ງຖືວ່າການກັກຕົວດັ່ງກ່າວບໍ່ຖືກຕ້ອງຕາມກົດ ໝາຍ.

**ຄຳຕອບ 22.2**

ຈາກກໍລະນີທີ່ເຈົ້າໜ້າທີ່ສືບສວນ-ສອບສວນໄດ້ກັກຕົວທ້າວ ກ ກ່ອນແລ້ວຈຶ່ງຂໍຄຳສັ່ງກັກຕົວຕາມພາຍຫຼັງຈາກຫົວໜ້າອົງການສືບສວນ-ສອບສວນເປັນການຖືກຕ້ອງຕາມກົດໝາຍ ຫຼື ບໍ່.

ການກັກຕົວແມ່ນມາດຕະການສະກັດກັ້ນໜຶ່ງທີ່ຖືກນຳໃຊ້ຕໍ່ຜູ້ຖືກສົງໄສ ຊຶ່ງເປັນຂັ້ນຕອນທີ່ມີຄວາມສຳຄັນ, ເພາະວ່າເປັນມາດຕະການທີ່ແຕະຕ້ອງເຖິງສິດທິທາງດ້ານອິດສະລະພາບຂອງພົນລະເມືອງທີ່ຖືກກັກຕົວ. ດັ່ງນັ້ນ, ການກັກຕົວບຸກຄົນໃດໜຶ່ງທີ່ຕົກເປັນຜູ້ຖືກສົງໄສຕ້ອງປະຕິບັດຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 135 ແລະ ມາດຕາ 138 ວັກ 1 ພ້ອມທັງມີຄຳສັ່ງກັກຕົວຢ່າງເປັນລາຍລັກອັກສອນຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການ. ອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 53, 56 ແລະ 138 ວັກ 1 ໄດ້ກຳນົດວ່າໃຫ້ມີແຕ່ຫົວໜ້າ, ຮອງຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າ, ຮອງຫົວໜ້າອົງການໄອຍະການເທົ່ານັ້ນເປັນຜູ້ມີສິດອອກຄຳສັ່ງກັກຕົວໄດ້. ຈາກເຫດຜົນດັ່ງກ່າວ, ກົດໝາຍຈຶ່ງໄດ້ກຳນົດໄວ້ແບບນີ້ກໍເພື່ອຮັບປະກັນບໍ່ໃຫ້ບຸກຄົນໃດໜຶ່ງສວຍໂອກາດນຳໃຊ້ສິດອຳນາດໜ້າທີ່ຂອງຕົນເພື່ອກັກຕົວບຸກຄົນໃດໜຶ່ງທີ່ຕົກເປັນຜູ້ຖືກສົງໄສໂດຍບໍ່ມີຄຳສັ່ງຢ່າງເປັນລາຍລັກອັກສອນຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການ.

ໃນພາກປະຕິບັດຕົວຈິງຫົວໜ້າ ແລະ ຮອງຫົວໜ້າອົງການສືບສວນ-ສອບສວນກໍໄດ້ສັບປ່ຽນໝູນວຽນກັນປະຈຳການຢູ່ຫ້ອງການ ຊາວສີ່ຊົ່ວໂມງລວມທັງວັນເສົາ ແລະ ວັນອາທິດຕາມລະບຽບພາຍໃນຂອງອົງການສືບສວນ-ສອບສວນຢູ່ແລ້ວ. ດັ່ງນັ້ນ, ບໍ່ວ່າຈະເປັນວັນເສົາ ຫຼື

ວັນອາທິດເຈົ້າໜ້າທີ່ສືບສວນ-ສອບສວນສາມາດຂໍຄຳສັ່ງກັກຕົວຈາກຫົວໜ້າອົງການສືບສວນ-ສອບສວນໄດ້.

ດັ່ງນັ້ນ, ການທີ່ເຈົ້າໜ້າທີ່ສືບສວນ-ສອບສວນໄດ້ກັກຕົວທ້າວ ກ ໃນຕອນແລງຂອງວັນສຸກຮອດວັນຈັນຂອງອາທິດຕໍ່ມາເຈົ້າໜ້າທີ່ສືບສວນ-ສອບສວນຈຶ່ງຂໍຄຳສັ່ງກັກຕົວຈາກຫົວໜ້າອົງການສືບສວນ-ສອບສວນນັ້ນຈຶ່ງເປັນການກັກຕົວທີ່ບໍ່ຖືກຕ້ອງຕາມກົດໝາຍເນື່ອງຈາກວ່າການກັກຕົວໃນກໍລະນີດັ່ງກ່າວເປັນການລະເມີດສິດໃນການຕໍ່ສູ້ຄະດີຂອງຜູ້ຖືກສົງໄສ. ຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 138 ວັກ 2 ກໍໄດ້ກຳນົດວ່າໃນການກັກຕົວ , ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການຕ້ອງອ່ານຄຳສັ່ງກັກຕົວ ພ້ອມທັງແຈ້ງສິດ ແລະ ພັນທະໃຫ້ຜູ້ຖືກກັກຕົວຊາບພ້ອມທັງແຈ້ງສະຖານທີ່ກັກຕົວໃຫ້ຄອບຄົວ, ສຳນັກງານ, ອົງການ ຫຼື ວິສາຫະກິດທີ່ຜູ້ກ່ຽວສັງກັດຢູ່ຊາບພາຍໃນກຳນົດ ຊາວສີ່ຊົ່ວໂມງ. ນອກຈາກນັ້ນ ມາດຕາ 64 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ກຳນົດສິດຂອງຜູ້ຖືກສົງໄສໄວ້ຢ່າງຈະແຈ້ງດັ່ງລຸ່ມນີ້:

- ຮັບຊາບຂໍ້ສົງໄສຂອງຕົນ.
- ໄດ້ຮັບການອະທິບາຍກ່ຽວກັບສິດ ແລະ ພັນທະຂອງຕົນ.
- ໃຫ້ຄຳອະທິບາຍ ຫຼື ໃຫ້ການກ່ຽວກັບຂໍ້ສົງໄສຕໍ່ຕົນ.
- ສະເໜີຫຼັກຖານ.
- ຮ້ອງຟ້ອງຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງອົງການສືບສວນ-ສອບສວນ ຫຼື ອົງການໄອຍະການ.
- ສະເໜີປະກັນຕົວສຳລັບການກະທຳຜິດໃນສະຖານໂທສານຸໂທດທີ່ກົດໝາຍກຳນົດໂທດຕັດອິດສະລະພາບແຕ່ 3 ປີລົງມາ.

ຈາກເຫດຜົນດັ່ງກ່າວຖ້າສົມທຽບໃສ່ກໍລະນີຄຳຖາມແລ້ວເຫັນວ່າການກັກຕົວທ້າວ ກ ກ່ອນຈຶ່ງອອກຄຳສັ່ງກັກຕົວຕາມພາຍຫຼັງນັ້ນແມ່ນບໍ່ຖືກຕ້ອງຕາມກົດໝາຍເນື່ອງຈາກວ່າການກັກຕົວຜູ້ຖືກສົງໄສທຸກຄັ້ງເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການຕ້ອງອ່ານຄຳສັ່ງກັກຕົວພ້ອມທັງແຈ້ງສິດ ແລະ ພັນທະໃຫ້ຜູ້ຖືກກັກຕົວຊາບ. ໃນກໍລະນີເຈົ້າໜ້າທີ່ສືບສວນ-ສອບສວນໄດ້ກັກຕົວທ້າວ ກ ໂດຍບໍ່ມີຄຳສັ່ງກັກຕົວຢ່າງເປັນລາຍລັກອັກສອນ ແລະ ບໍ່ໄດ້ອ່ານຄຳສັ່ງພ້ອມທັງບໍ່ໄດ້ແຈ້ງສິດ ແລະ ພັນທະໃຫ້ຜູ້ກ່ຽວຊາບນັ້ນເປັນການກັກຕົວບໍ່ຖືກຕ້ອງຕາມກົດໝາຍ. ເຖິງຢ່າງໃດກໍຕາມໃນວັນຈັນຂອງອາທິດຕໍ່ມາຈຶ່ງໄດ້ມີຄຳສັ່ງກັກຕົວຢ່າງເປັນລາຍລັກອັກສອນກໍຕາມແຕ່ບໍ່ເປັນເງື່ອນໄຂໃຫ້ລົບລ້າງຄວາມບໍ່ຖືກຕ້ອງເນື່ອງຈາກໄດ້ກັກຕົວມາກ່ອນແລ້ວນັ້ນໄດ້.

## ຄຳຕອບ 22.3

ເຈົ້າໜ້າທີ່ສືບສວນ-ສອບສວນໄດ້ກັກຕົວ ທ້າວ ກ ຕາມຄຳສັ່ງກັກຕົວຂອງຫົວໜ້າອົງການສືບສວນ-ສອບສວນໃນຕອນແລງຂອງວັນສຸກຫຼັງຈາກນັ້ນມາຮອດວັນຈັນຂອງອາທິດຕໍ່

ມາຈຶ່ງລາຍງານໃຫ້ຫົວໜ້າອົງການໄອຍະການປະຊາຊົນຊາບ ຊຶ່ງການລາຍງານດັ່ງກ່າວແມ່ນເກີນໄລຍະເວລາ ຊາວສີ່ຊົ່ວໂມງ ໂດຍບໍ່ປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 138 ວັກ 1 ນັ້ນ ໝາຍຄວາມວ່າການກັກຕົວຖືກຕ້ອງຕາມກົດໝາຍ ແຕ່ລາຍງານໃຫ້ຫົວໜ້າອົງການໄອຍະການຊາບຊັກຊ້ານີ້ຖືກຕ້ອງຕາມກົດໝາຍ ຫຼື ບໍ່.

ອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາມາດຕາ 138 ວັກ 1 ທີ່ກຳນົດວ່າ ພາຍຫຼັງທີ່ໄດ້ກັກຕົວຜູ້ຖືກສົງໄສແລ້ວຕ້ອງລາຍງານຢ່າງເປັນລາຍລັກອັກສອນໃຫ້ຫົວໜ້າອົງການໄອຍະການຊາບນັບແຕ່ເວລາກັກຕົວເປັນຕົ້ນໄປ ແຕ່ໃນກໍລະນີນີ້ເຈົ້າໜ້າທີ່ໄດ້ກັກຕົວທ້າວ ກ ໃນຕອນແລງຂອງວັນສຸກຈົນຮອດວັນຈັນຂອງອາທິດຕໍ່ມາຈຶ່ງລາຍງານໃຫ້ຫົວໜ້າອົງການໄອຍະການຊາບ.

ການລາຍງານຂອງຫົວໜ້າອົງການສືບສວນ-ສອບສວນຕໍ່ຫົວໜ້າອົງການໄອຍະການດັ່ງກ່າວແມ່ນເກີນກຳນົດເວລາຊາວສີ່ຊົ່ວໂມງແລ້ວ. ດັ່ງນັ້ນ, ການກັກຕົວໃນກໍລະນີດັ່ງກ່າວນີ້ຈຶ່ງເປັນການກັກຕົວຜູ້ຖືກສົງໄສທີ່ບໍ່ຖືກຕ້ອງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ຄຳຕອບ 22.4**

ເຈົ້າໜ້າທີ່ສືບສວນ-ສອບສວນໄດ້ກັກຕົວທ້າວ ກ ໄວ້ເກີນໄລຍະເວລາຂອງການກັກຕົວຕາມທີ່ໄດ້ກຳນົດໄວ້ໃນກົດໝາຍນັ້ນເປັນການກັກຕົວທີ່ຖືກຕ້ອງຕາມກົດໝາຍ ຫຼື ບໍ່.

ອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 138 ວັກ 3 ຂໍ້ 1 ທີ່ກຳນົດວ່າຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການສາມາດອອກຄຳສັ່ງກັກຕົວຜູ້ຖືກສົງໄສໄວ້ໄດ້ພາຍໃນກຳນົດສີ່ສິບແປດຊົ່ວໂມງ. ນອກຈາກນັ້ນຫຼັງຈາກອອກຄຳສັ່ງກັກຕົວແລ້ວພາຍໃນກຳນົດ ສີ່ສິບແປດຊົ່ວໂມງເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການຕ້ອງລົງຄຳເຫັນດັ່ງລຸ່ມນີ້:

ຖ້າບໍ່ມີຂໍ້ມູນຫຼັກຖານໜັກແໜ້ນທີ່ພາໃຫ້ອອກຄຳສັ່ງເປີດການສືບສວນ-ສອບສວນໄດ້ ເຈົ້າໜ້າທີ່ສືບສວນ-ສອບສວນຕ້ອງຂໍຄຳສັ່ງປ່ອຍຕົວຈາກຫົວໜ້າອົງການສືບສວນ-ສອບສວນພ້ອມທັງລາຍງານເປັນລາຍລັກອັກສອນໃຫ້ຫົວໜ້າອົງການໄອຍະການຊາບໃນທັນໃດ ຫຼັງຈາກນັ້ນເຈົ້າໜ້າທີ່ສືບສວນ-ສອບສວນຕ້ອງປ່ອຍຕົວຜູ້ຖືກກັກຕົວຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 138 ວັກ 3 ຂໍ້ 1;

ຖ້າມີຂໍ້ມູນຫຼັກຖານໜັກແໜ້ນທີ່ພາໃຫ້ອອກຄຳສັ່ງເປີດການສືບສວນ-ສອບສວນ ຫົວໜ້າອົງການສືບສວນ-ສອບສວນຕ້ອງອອກຄຳສັ່ງເປີດການສືບສວນ-ສອບສວນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 138 ວັກ 3 ຂໍ້ 2. ນອກຈາກນັ້ນ ມາດຕາ 138 ວັກ 3 ຂໍ້ 3 ໄດ້ກຳນົດວ່າຖ້າເຫັນວ່າມີຄວາມຈຳເປັນຕ້ອງທຳການກັກຂັງພາງ, ຫົວໜ້າອົງການສືບສວນ-ສອບສວນ ຫຼື ພະນັກງານໄອຍະການຕ້ອງຂໍຄຳສັ່ງກັກຂັງພາງຈາກຫົວໜ້າອົງການໄອຍະການ.

**ຄຳຖາມ 23: ເຈົ້າໜ້າທີ່ໄດ້ຮັບແຈ້ງຄວາມຈາກນາງ ຂ ວ່າເຮືອນຂອງຕົນຖືກງັດແງະຫຼັງຈາກນັ້ນເຈົ້າໜ້າທີ່ຈຶ່ງໄດ້ລົງຊັນນະສູດສະຖານທີ່ເກີດເຫດດັ່ງກ່າວ ຈຶ່ງຮູ້ວ່າຊັບສິນຂອງນາງ ຂ ເສຍໄປມີຄື: ລົດຈັກເວັບ 100 ສີດຳແດງໝາຍເລກທະບຽນ 0000, ໄດ້ພົບເຫັນເກີບ ແລະ ກະເປົາເງິນພ້ອມດ້ວຍບັດປະຈຳຕົວອອກຊື່ທ້າວ ກ ຕົກເຮ່ຍຢູ່ສະຖານທີ່ເກີດເຫດ ແຕ່ບໍ່ທັນຮູ້ວ່າແມ່ນບຸກຄົນໃດເປັນຜູ້ກະທຳຜິດ. ຫົວໜ້າອົງການສືບສວນ-ສອບສວນຈຶ່ງອອກຄຳສັ່ງເປີດການສືບສວນ-ສອບສວນໃສ່ເຫດການໃນສະຖານ ລັກຊັບຂອງພົນລະເມືອງ, ຜ່ານການຕິດຕາມກວດກາ ແລະ ເກັບໂຮມຂໍ້ມູນຫຼັກຖານໄດ້ພົບເຫັນລົດຈັກເວັບ100 ຂອງນາງ ຂ ທີ່ຖືກລັກມາ ຢູ່ເຮືອນທ້າວ ກ ຊຶ່ງເປັນຄົນທີ່ຢູ່ບ້ານດຽວກັນເຈົ້າໜ້າທີ່ຈຶ່ງຂໍຄຳສັ່ງຈັບຕົວທ້າວ ກ ຕໍ່ອົງການໄອຍະການ. ພາຍຫຼັງໄດ້ຮັບຄຳສັ່ງຈັບຕົວແລ້ວ ຈຶ່ງໄດ້ທຳການຈັບຕົວຂອງທ້າວ ກ. ເຈົ້າໜ້າທີ່ຈັບຕົວທ້າວ ກ ນັ້ນຖືກຕ້ອງ ຫຼື ບໍ່?**

**ຄຳຕອບ**

ການຈັບຕົວແມ່ນໜຶ່ງໃນມາດຕະການສະກັດກັ້ນທີ່ໃຊ້ເພື່ອຄວບຄຸມຕົວຜູ້ຖືກຫາ ໃນເບື້ອງຕົ້ນຂອງການສືບສວນ-ສອບສວນ ຊຶ່ງເປັນການຈຳກັດສິດ ແລະ ເສລີພາບ ທີ່ມີລັກສະນະຮຸນແຮງ. ສະນັ້ນ, ອີງຕາມມາດຕາ 42 ວັກ 2 ຂອງລັດຖະທຳມະນູນ ໄດ້ກຳນົດກ່ຽວກັບການຈັບຕົວໄວ້ວ່າ ພົນລະເມືອງລາວຈະບໍ່ຖືກຈັບຕົວ ຖ້າຫາກບໍ່ມີຄຳສັ່ງຂອງອົງການໄອຍະການ ຫຼື ສານປະຊາຊົນ ເວັ້ນເສຍແຕ່ໃນກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ມາດຕາ 139 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໄດ້ກຳນົດໄວ້ວ່າການຈັບຕົວຕ້ອງມີຄຳສັ່ງເປັນລາຍລັກອັກສອນຂອງຫົວໜ້າອົງການໄອຍະການ ຫຼື ສານ ເວັ້ນເສຍແຕ່ໃນກໍລະນີການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 140 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ການທີ່ຈະອອກຄຳສັ່ງດັ່ງກ່າວໄດ້ໂດຍຖືກຕ້ອງຕາມກົດໝາຍນັ້ນ ຕ້ອງຄົບຕາມເງື່ອນໄຂ(ມາດຕາ 139 ວັກ 2 ກດຍ)ດັ່ງລຸ່ມນີ້:

1. ມີຄຳສັ່ງເປີດການສືບສວນ-ສອບສວນ;
2. ມີການກະທຳ ຊຶ່ງເປັນການກະທຳຜິດທາງອາຍາ ທີ່ກົດໝາຍກຳນົດໂທດຕັດອິດສະລະພາບ;
3. ມີຫຼັກຖານໃນຄະດີໜັກແໜ້ນ.

ນອກຈາກນີ້ແລ້ວຍັງຕ້ອງອີງໃສ່ເງື່ອນໄຂໃດໜຶ່ງເຊັ່ນ: ຜູ້ຖືກຫາອາດຈະເອົາຕົວຫຼົບໜີ, ທຳລາຍຫຼັກຖານ, ກະທຳຜິດໃໝ່, ທຳຮ້າຍຜູ້ຖືກເສຍຫາຍ, ພະຍານ ຫຼື ຜູ້ຖືກຫາອາດຈະຖືກທຳຮ້າຍຈາກຜູ້ຖືກເສຍຫາຍ ຫຼື ຈາກບຸກຄົນອື່ນ (ມາດຕາ 139 ວັກ 3 ກດຍ).

ກໍລະນີນີ້ໄດ້ມີການອອກຄຳສັ່ງເປີດການສືບສວນ-ສອບສວນ ໃນສະຖານລັກຊັບຂອງພົນລະເມືອງ ຊຶ່ງກົດໝາຍອາຍາໄດ້ກຳນົດໂທດຕັດອິດສະລະພາບ ຊຶ່ງໄດ້ພົບກະເປົາເງິນພ້ອມດ້ວຍບັດປະຈຳຕົວອອກຊື່ທ້າວ ກ ຢູ່ສະຖານທີ່ເກີດເຫດ ແລະ ໄດ້ພົບລົດຮອນດ້າເວບ100 ຂອງນາງ ຂ ທີ່ຖືກລັກມາຢູ່ເຮືອນຂອງທ້າວ ກ. ສະນັ້ນ, ຈຶ່ງສະຫຼຸບໄດ້ວ່າມີຫຼັກຖານໜັກແໜ້ນທີ່ຢັ້ງຢືນວ່າທ້າວ ກ ເປັນຜູ້ກະທຳຜິດຕາມຂໍ້ກ່າວຫາແທ້, ພາຍຫຼັງເກີດເຫດແລ້ວທ້າວ ກ ກໍບໍ່ເຂົ້າມາສະເໜີຕົວຕໍ່ເຈົ້າໜ້າທີ່ ຈຶ່ງມີຄວາມເປັນໄປໄດ້ສູງວ່າຜູ້ກ່ຽວຈະເອົາຕົວຫຼົບໜີຈາກຄວາມຜິດຂອງຕົນ.

ສະຫຼຸບແລ້ວ ໃນກໍລະນີຂ້າງເທິງນີ້ ໄດ້ມີການອອກຄຳສັ່ງຈັບຕົວ ໂດຍຄົບຖ້ວນຕາມເງື່ອນໄຂ ພ້ອມທັງໄດ້ຈັດຕັ້ງປະຕິບັດການຈັບຕົວບົນພື້ນຖານຄຳສັ່ງດັ່ງກ່າວແລ້ວ. ສະນັ້ນ,ເຫັນວ່າການຈັບຕົວທ້າວ ກ ໃນກໍລະນີນີ້ແມ່ນຖືກຕ້ອງຕາມກົດໝາຍ. ແຜນວາດປະກອບດັ່ງນີ້ :

ເຮືອນນາງ ຂ ຖືກງັດ



ກະເປົ໋າເງິນ ແລະ ບັດປະຈໍາຕົວ

ເກັບ



ເຈົ້າໜ້າທີ່ໄດ້ຮັບການແຈ້ງຄວາມຈາກນາງ ຂ

ເຈົ້າໜ້າທີ່ລົງສະຖານທີ່ເກີດເຫດ
- ບິດບັນທຶກຊັນນະສູດ
- ເກັບກໍາຂໍ້ມູນຫຼັກຖານຕົວຈິງ

ມີຂໍ້ມູນໜັກແໜ້ນກ່ຽວກັບຄະດີດັ່ງກ່າວ.
- ອອກຄໍາສັ່ງເປີດການສືບສວນ-ສອບສວນໃສ່ເຫດການ.
- ອອກຄໍາສັ່ງເປີດການສືບສວນ-ສອບສວນໃສ່ທ້າວ ກ.(ມຕ 91 ວ 3 ກດຍ)

ມາດຕາ 42 ວັກ 2ລັດຖະທໍາມະນູນ

ເຈົ້າໜ້າທີ່ຂໍຄໍາສັ່ງຈັບຕົວທ້າວ ກ ຈາກອົງການໄອຍະການ ແລະ ຂໍຄໍາສັ່ງກວດຄົ້ນເຮືອນທ້າວ ກ



ກວດຄົ້ນເຮືອນທ້າວ ກ

ພົບວັດຖຸເຄື່ອງຂອງກາງ ຢູ່ເຮືອນທ້າວ ກ

ຈັບທ້າວ ກ ມາດໍາເນີນຄະດີຕາມກົດໝາຍ ມຕ 139 ວັກ 1



ການຈັບຕົວທ້າວ ກ ຂອງເຈົ້າໜ້າທີ່ແມ່ນຖືກຕ້ອງຕາມກົດໝາຍ

**ຄຳຖາມ 24: ທ້າວ ກ ໄດ້ຂັບຂີ່ລົດກະບະດ້ວຍຄວາມໄວສູງໄປຕຳເອົານາງ ຂ ທີ່ຂັບຂີ່ລົດຈັກສວນທາງມາເຮັດໃຫ້ນາງ ຂ ເສຍຊີວິດຄາທີ່. ເຈົ້າໜ້າທີ່ຕຳຫຼວດຜູ້ເຫັນເຫດການດັ່ງກ່າວ ໄດ້ລັດລົດເພື່ອໃຫ້ຈອດ ແຕ່ຜູ້ກ່ຽວໄດ້ລົງຈາກລົດແລ້ວແລ່ນໜີໄປ. ເຈົ້າໜ້າທີ່ຕຳຫຼວດຈຶ່ງໄດ້ແລ່ນໄລ່ເພື່ອຈະຈັບຕົວຜູ້ກ່ຽວ, ໄລ່ມາໄດ້ໄລຍະໜຶ່ງ ຜູ້ກ່ຽວໄດ້ແລ່ນເຂົ້າຕະຫຼາດ ເຈົ້າໜ້າທີ່ຈຶ່ງບໍ່ເຫັນຜູ້ກ່ຽວ. ແຕ່ເຈົ້າໜ້າທີ່ຈື່ຮູບປະພັນຂອງຜູ້ກ່ຽວໄດ້ ວ່າເປັນຜູ້ທີ່ມີລັກສະນະຈ່ອຍສູງ ແລະ ຜົມຍາວ ຈຶ່ງໄດ້ສືບຕໍ່ຕິດຕາມໄປ. ຫຼັງຈາກນັ້ນປະມານ 30 ນາທີ ຕໍ່ມາເຈົ້າໜ້າທີ່ຜູ້ໄລ່ຕິດຕາມຈຶ່ງພົບເຫັນທ້າວ ກ ຢູ່ໃນບໍລິເວນຕະຫຼາດ. ສະນັ້ນ, ເຈົ້າໜ້າທີ່ຈຶ່ງເຂົ້າຈັບຕົວຜູ້ກ່ຽວໃນກໍລະນີເຊິ່ງໜ້າ ໂດຍບໍ່ມີຄຳສັ່ງຈັບຕົວຂອງຫົວໜ້າອົງການໄອຍະການ. ການຈັບຕົວທ້າວ ກ ຂອງເຈົ້າໜ້າທີ່ສືບສວນ-ສອບສວນໃນກໍລະນີນີ້ ຖືກຕ້ອງຕາມກົດໝາຍ ຫຼື ບໍ່?**

**ຄຳຕອບ**

ການຈັບຕົວແມ່ນມາດຕະການສະກັດກັ້ນໜຶ່ງທີ່ນຳໃຊ້ເພື່ອຄວບຄຸມຕົວບຸກຄົນ ຊຶ່ງເປັນການຈຳກັດສິດເສລີພາບຂອງບຸກຄົນ. ຕາມຫຼັກການແລ້ວ ຈະບໍ່ອະນຸຍາດໃຫ້ດຳເນີນໂດຍບໍ່ມີຄຳສັ່ງຈາກຫົວໜ້າອົງການໄອຍະການ ຫຼື ສານ. ແຕ່ໃນກໍລະນີການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນນັ້ນ ແມ່ນຖືເປັນກໍລະນີຍົກເວັ້ນຊຶ່ງສາມາດຈັບຕົວໄດ້ໂດຍບໍ່ມີຄຳສັ່ງຈັບຕົວຂອງຫົວໜ້າອົງການໄອຍະການ ຫຼື ສານ (ມາດຕາ 139 ວັກ 1 ກດຍ ແລະ ມາດຕາ 140 ກດຍ). ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 140 ກໍໄດ້ກຳນົດກ່ຽວກັບການກະທຳຜິດເຊິ່ງໜ້າວ່າ ແມ່ນການກະທຳຜິດຂອງບຸກຄົນໃນກໍລະນີດັ່ງນີ້:

1. ບຸກຄົນ ທີ່ພວມກະທຳຜິດຢູ່ ຫຼື ຫາກໍສິ້ນສຸດການກະທຳຜິດ;
2. ບຸກຄົນທີ່ໄດ້ກະທຳຜິດ ທີ່ພວມຖືກໄລ່ຕິດຕາມໄປ ຫຼື ມີບຸກຄົນ ຊຶ່ງຜູ້ເຫັນເຫດການ ຫຼື ຜູ້ຖືກເສຍຫາຍ ໄດ້ຊີ້ຕົວວ່າເປັນຜູ້ກະທຳຜິດ;
3. ບຸກຄົນ ທີ່ມີຮ່ອງຮອຍຂອງການກະທຳຜິດຢູ່ໃນຕົນຕົວ, ຢູ່ໃນເຮືອນ ຫຼື ບ່ອນເຮັດວຽກຂອງຜູ້ກ່ຽວ ໃນໄລຍະເວລາ ຊຶ່ງການກະທຳຜິດນັ້ນຫາກໍໄດ້ເກີດຂຶ້ນ.

ການຈັບຕົວຜູ້ກະທຳຜິດໃນກໍລະນີເຊິ່ງໜ້ານັ້ນ ບໍ່ຈຳເປັນຕ້ອງຄົບທຸກເງື່ອນໄຂທີ່ໄດ້ກຳນົດໃນມາດຕາ 140 ວັກ 1 ເທິງນັ້ນກໍໄດ້. ໝາຍຄວາມວ່າ ຖ້າເປັນການກະທຳຂອງບຸກຄົນທີ່ຢູ່ໃນເງື່ອນໄຂໃດໜຶ່ງຕາມທີ່ໄດ້ກ່າວມານັ້ນ ກໍຖືເປັນການກະທຳຜິດໃນກໍລະນີເຊິ່ງໜ້າໄດ້. ການຈັບຕົວໃນກໍລະນີການກະທຳຜິດເຊິ່ງໜ້າ ສາມາດຈັບຕົວໄດ້ໂດຍບໍ່ຈຳເປັນຕ້ອງມີຄຳສັ່ງຂອງຫົວໜ້າອົງການໄອຍະການ ຫຼື ສານ ຍ້ອນວ່າ ໄດ້ມີການກະທຳຜິດເກີດຂຶ້ນແທ້ ແລະ ກໍຮູ້ຜູ້ກະທຳຜິດຢ່າງຈະແຈ້ງແລ້ວ ຈຶ່ງຮັບປະກັນໄດ້ວ່າຈະບໍ່ມີການຈັບຜິດຕົວ.

ກໍລະນີນີ້, ເຈົ້າໜ້າທີ່ໄດ້ເຫັນເຫດການທີ່ນາງ ຂ ເກີດອຸບປະຕິເຫດແລ້ວເສຍຊີວິດໂດຍແມ່ນທ້າວ ກ ເປັນຕົ້ນເຫດ. ເຈົ້າໜ້າທີ່ຜູ້ນັ້ນຈຶ່ງເລີ່ມໄລ່ຕິດຕາມທ້າວ ກ ທີ່ພວມຈະເອົາຕົວຫຼົບໜີຈາກສະຖານທີ່ເກີດອຸບປະຕິເຫດດັ່ງກ່າວ ຊຶ່ງໃນນີ້ທ້າວ ກ ແມ່ນຖືກກັບກໍລະນີຂອງບຸກຄົນທີ່ໄດ້ກະທຳຜິດ ທີ່ພວມຖືກໄລ່ຕິດຕາມ (ມາດຕາ 140 ວັກ 1 ຂໍ້ 2 ກດຍ). ໃນເວລານີ້ສາມາດເວົ້າໄດ້ວ່າ ເປັນສະຖານະການທີ່ຄົບຖ້ວນທີ່ສາມາດທຳການຈັບຕົວຜູ້ກ່ຽວໃນກໍລະນີເຊິ່ງໜ້າໄດ້ໂດຍຖືກຕ້ອງຕາມກົດໝາຍ. ເນື່ອງຈາກວ່າທ້າວ ກ ໄດ້ຫຼົບໜີເຂົ້າໄປໃນຕະຫຼາດ ແລະ ບໍ່ເຫັນຜູ້ກ່ຽວເປັນໄລຍະເວລາປະມານ 30 ນາທີ. ສະນັ້ນ, ໃນໄລຍະເວລາ 30 ນາທີ ທີ່ບໍ່ເຫັນຜູ້ກ່ຽວນີ້, ຕໍ່ກັບບັນຫານີ້ ຍັງຖືວ່າເປັນສະຖານະການທີ່ຄົບຖ້ວນທີ່ພາໃຫ້ສາມາດທຳການຈັບຕົວໃນກໍລະນີເຊິ່ງໜ້າໄດ້ ຫຼື ບໍ່.

ກ່ຽວກັບບັນຫາດັ່ງກ່າວນີ້ເຖິງວ່າ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາບໍ່ໄດ້ກຳນົດໄວ້ສະເພາະກໍຕາມ ແຕ່ເນື່ອງຈາກການທີ່ໄດ້ເຫັນເຫດການຂອງການກະທຳຜິດ ຊຶ່ງເຮັດໃຫ້ຮູ້ແຈ້ງກ່ຽວກັບການກະທຳຜິດ ແລະ ຕົວຜູ້ກະທຳຜິດ ຈຶ່ງໄດ້ເລີ່ມໄລ່ຕິດຕາມຜູ້ກະທຳຜິດດັ່ງກ່າວ, ຕອນທີ່ບໍ່ເຫັນຕົວຜູ້ກະທຳຜິດນັ້ນ ກໍຍັງສືບຕໍ່ໄລ່ຕິດຕາມຊອກຫາຢູ່ ແລະ ພາຍຫຼັງທີ່ໄດ້ພົບເຫັນອີກເທື່ອທີສອງນັ້ນ ຖ້າວ່າສາມາດກຳນົດໄດ້ວ່າເປັນບຸກຄົນຜູ້ດຽວກັນກັບຜູ້ກະທຳຜິດແລ້ວ ກໍຈະຖືວ່າສະຖານະການຂອງການຈັບຕົວໃນກໍລະນີເຊິ່ງໜ້ານັ້ນຍັງຄົງສືບຕໍ່ຢູ່ ຊຶ່ງເປັນທີ່ຍອມຮັບໄດ້ວ່າຄວາມສ່ຽງທີ່ຈະຈັບຜິດຄົນນັ້ນມີໜ້ອຍ ແລະ ເຫັນວ່າສົມຄວນໃຫ້ສາມາດຈັບຕົວໃນກໍລະນີເຊິ່ງໜ້າໄດ້.

ເມື່ອສົມທຽບໃສ່ກໍລະນີນີ້, ພາຍຫຼັງທີ່ທ້າວ ກ ໄດ້ລີ້ຊ່ອນປະມານ 30 ນາທີ ເຈົ້າໜ້າທີ່ຈຶ່ງໄດ້ພົບຕົວຜູ້ກ່ຽວ, ເມື່ອເບິ່ງຈາກຮູບປະພົມແລ້ວ ກໍລະນີທີ່ເຈົ້າໜ້າທີ່ສາມາດບົ່ງຕົວຜູ້ກ່ຽວ

ໄດ້ວ່າເປັນຄົນດຽວກັນກັບຜູ້ທີ່ເປັນເປົ້າໝາຍໄລ່ຕິດຕາມໃນເບື້ອງຕົ້ນນັ້ນ, ມັນກໍຈະຖືກັບກໍລະນີບຸກຄົນທີ່ໄດ້ກະທໍາຜິດ ຊຶ່ງເຈົ້າໜ້າທີ່ພວມໄລ່ຕິດຕາມໄປຢ່າງຕໍ່ເນື່ອງ ຕາມມາດຕາ 140 ວັກ 1 ຂໍ້ 2 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ. ສະນັ້ນ, ການຈັບຕົວທ້າວ ກ ໂດຍບໍ່ມີຄໍາສັ່ງນັ້ນເຫັນວ່າ ເປັນການຈັບຕົວໃນກໍລະນີເຊິ່ງໜ້າທີ່ຖືກຕ້ອງຕາມກົດໝາຍ. ຊຶ່ງມີຮູບພາບປະກອບດັ່ງນີ້ :



**ຄຳຖາມ 25: ໃນວັນທີ 20 ມີນາ 2010 ເຈົ້າໜ້າທີ່ສືບສວນ-ສອບສວນໄດ້ກັກຂັງພາງທ້າວ ກ (ຜູ້ຖືກຫາ) ໂດຍຖືກຕ້ອງຕາມກົດໝາຍໃນຂໍ້ກ່າວຫາ ການຄາດຕະກຳ. ການກັກຂັງພາງດັ່ງກ່າວໄດ້ຈັດຕັ້ງປະຕິບັດມາເຖິງວັນທີ 19 ມິຖຸນາ 2010 ແຕ່ການສືບສວນ-ສອບສວນຍັງບໍ່ທັນສຳເລັດ. ເຈົ້າໜ້າທີ່ສືບສວນ-ສອບສວນຈຶ່ງສືບຕໍ່ກັກຂັງພາງເພື່ອດຳເນີນການສືບສວນ-ສອບສວນຈົນຮອດວັນທີ 25 ມິຖຸນາ 2010, ໂດຍບໍ່ມີຄຳສັ່ງຕໍ່ການກັກຂັງພາງ. ການກັກຂັງພາງຂອງເຈົ້າໜ້າທີ່ສືບສວນ-ສອບສວນ ໃນກໍລະນີນີ້ຖືກຕ້ອງຕາມກົດໝາຍ ຫຼື ບໍ່?**

**ກໍລະນີທີ່ເຈົ້າໜ້າທີ່ໄດ້ຕໍ່ກຳນົດເວລາການກັກຂັງພາງເຖິງ 3 ຄັ້ງໂດຍຖືກຕ້ອງຕາມກົດໝາຍແລ້ວຊຶ່ງເທົ່າກັບ 1 ປີ ແຕ່ການສືບສວນ-ສອບສວນຍັງບໍ່ທັນສຳເລັດ, ເຈົ້າໜ້າທີ່ສືບສວນ-ສອບສວນ ສາມາດຂໍຄຳສັ່ງເພື່ອຕໍ່ກຳນົດເວລາ ການກັກຂັງພາງທ້າວ ກ ເປັນເທື່ອທີ 4 ໄດ້ອີກ ຫຼື ບໍ່?**

**ຄຳຕອບ**

ການກັກຂັງພາງ ແມ່ນໜຶ່ງໃນບັນດາມາດຕະການສະກັດກັ້ນ ທີ່ໃຊ້ກັກຂັງຜູ້ຖືກຫາ ເປັນການກັກຂັງຊົ່ວຄາວ ກ່ອນຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໂດຍມີຈຸດປະສົງເພື່ອໃຫ້ມີຕົວຜູ້ຖືກຫາມາດຳເນີນການສືບສວນ-ສອບສວນ, ມາສັ່ງຟ້ອງຂຶ້ນສານ ຫຼື ມາຮັບໂທດຕາມຄຳຕັດສິນຂອງສານ. ເນື່ອງຈາກການກັກຂັງພາງເປັນການຈຳກັດສິດເສລີພາບທາງດ້ານຮ່າງກາຍ ສະນັ້ນ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຈຶ່ງໄດ້ກຳນົດເງື່ອນໄຂຂອງການກັກຂັງພາງໄວ້ວ່າ: ບຸກຄົນໃດໜຶ່ງຈະຖືກກັກຂັງພາງໄດ້ ຕ້ອງມີຄຳສັ່ງຢ່າງເປັນລາຍລັກອັກສອນຈາກຫົວໜ້າອົງການໄອຍະການ ຫຼື ສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 142 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ການທີ່ຫົວໜ້າອົງການໄອຍະການ ຫຼື ສານ ຈະອອກຄຳສັ່ງກັກຂັງພາງຕ້ອງໄດ້ອີງໃສ່ເງື່ອນໄຂ ດັ່ງລຸ່ມນີ້:

1. ມີຄຳສັ່ງເປີດການສືບສວນ-ສອບສວນຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ຂອງຫົວໜ້າອົງການໄອຍະການ (ມາດຕາ 139 ວັກ 2 ຂໍ້ 1 ກດຍ);

2. ມີການກະທຳ ຊຶ່ງເປັນການກະທຳຜິດທາງອາຍາທີ່ກົດໝາຍກຳນົດໂທດຕັດອິດສະລະພາບ (ມາດຕາ 139 ວັກ 2 ຂໍ້ 2 ກດຍ);

3. ຕ້ອງມີຫຼັກຖານໃນຄະດີໜັກແໜ້ນ (ມາດຕາ 139 ວັກ 2 ຂໍ້ 3 ກດຍ).

ນອກຈາກນີ້ແລ້ວການອອກຄຳສັ່ງກັກຂັງພາງ ຍັງຕ້ອງອີງໃສ່ເງື່ອນໄຂໃດໜຶ່ງເຊັ່ນ: ຜູ້ຖືກຫາ ອາດຈະເອົາຕົວຫຼົບໜີ, ທຳລາຍຫຼັກຖານ, ກະທຳຜິດໃໝ່, ທຳຮ້າຍຜູ້ຖືກເສຍຫາຍ, ພະຍານ ຫຼື ຜູ້ຖືກຫາ ອາດຈະຖືກທຳຮ້າຍ ຈາກຜູ້ຖືກເສຍຫາຍ ຫຼື ຈາກບຸກຄົນອື່ນ (ມາດຕາ 139 ວັກ 3 ກດຍ).

ການກັກຂັງພາງເພື່ອດຳເນີນການສືບສວນ-ສອບສວນນັ້ນ ກົດໝາຍໄດ້ກຳນົດຂອບເຂດໄວ້ ບໍ່ໃຫ້ເກີນ 2 ເດືອນ ສຳລັບການກະທຳຜິດໃນສະຖານໂທສານຸໂທດ ແລະ ບໍ່ໃຫ້ເກີນ 3 ເດືອນ ໃນສະຖານຄະຣຸໂທດ ນັບແຕ່ວັນອອກຄຳສັ່ງກັກຂັງພາງເປັນຕົ້ນໄປ (ມາດຕາ 111 ວັກ 1 ກດຍ). ເມື່ອໝົດກຳນົດເວລາກັກຂັງພາງແລ້ວ ແຕ່ຍັງບໍ່ທັນສະຫຼຸບການສືບສວນ-ສອບສວນ ແລະ ປະກອບສຳນວນຄະດີສົ່ງໃຫ້ໄອຍະການນັ້ນ ຫົວໜ້າອົງການໄອຍະການອາດຕໍ່ກຳນົດເວລາກັກຂັງພາງໄດ້ອີກ ເທື່ອລະ 2 ເດືອນ ແຕ່ທັງໝົດບໍ່ໃຫ້ເກີນ 6 ເດືອນ ສຳລັບການກະທຳຜິດໃນສະຖານໂທສານຸໂທດ, ສຳລັບການກະທຳຜິດໃນສະຖານຄະຣຸໂທດນັ້ນ ສາມາດຕໍ່ໄດ້ເທື່ອລະ 3 ເດືອນ ແຕ່ທັງໝົດບໍ່ໃຫ້ເກີນ 1 ປີ (ມາດຕາ 111 ວັກ 2 ກດຍ). ຕາມການສະ ເ ໜີຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ພະນັກງານໄອຍະການ, ການສະເໜີຕໍ່ກຳນົດເວລາກັກຂັງພາງແຕ່ລະເທື່ອ ໃຫ້ດຳເນີນ 15 ວັນ ກ່ອນໝົດກຳນົດເວລາກັກຂັງພາງ, ເມື່ອໝົດກຳນົດເວລາກັກຂັງພາງດັ່ງທີ່ກ່າວມາຂ້າງເທິງແລ້ວ ຫົວໜ້າອົງການໄອຍະການ ຕ້ອງອອກຄຳສັ່ງປ່ອຍຕົວຜູ້ກ່ຽວໃນທັນທີ.

ຕໍ່ບັນຫາທີໜຶ່ງ ໄດ້ມີການອອກຄຳສັ່ງກັກຂັງພາງ ທ້າວ ກ (ຜູ້ຖືກຫາ) ຈາກຫົວໜ້າອົງການໄອຍະການ ຫຼື ສານ ຢ່າງຖືກຕ້ອງແລ້ວ ຊຶ່ງດຳເນີນການກັກຂັງນັບແຕ່ວັນທີ 20 ມີນາ 2010 ຈົນມາຮອດວັນທີ 19 ມິຖຸນາ 2010 ເປັນເວລາ 3 ເດືອນ ແຕ່ເນື່ອງຈາກການດຳເນີນຄະດີສືບສວນ-ສອບສວນ ແລະ ການຊອກຫາຂໍ້ມູນຫຼັກຖານ ຂອງເຈົ້າໜ້າທີ່ ເພື່ອຜູກມັດຕໍ່ທ້າວ ກ (ຜູ້ຖືກຫາ) ນັ້ນຍັງບໍ່ພຽງພໍ ເປັນສາເຫດເຮັດໃຫ້ການສືບສວນ-ສອບສວນ ຊັກຊ້າ ແລະ ຍັງບໍ່ທັນສຳເລັດ, ຈົນຕົກມາຮອດວັນທີ 25 ມິຖຸນາ 2010 ຊຶ່ງກາຍກຳນົດເວລາກັກຂັງພາງ ເປັນເວລາ 5 ວັນ ເຈົ້າໜ້າທີ່ ກໍບໍ່ໄດ້ຂໍຕໍ່ຄຳສັ່ງກັກຂັງພາງ ຈາກຫົວໜ້າອົງການໄອຍະການແຕ່ຢ່າງໃດ. ດັ່ງນັ້ນ, ຈຶ່ງສະຫຼຸບໄດ້ວ່າ ການກັກຂັງພາງຂອງເຈົ້າໜ້າທີ່ຕໍ່ທ້າວ ກ (ຜູ້ຖືກຫາ) ນັບແຕ່ວັນທີ 20 ມິຖຸນາ 2010 ນັ້ນ ເປັນການກັກຂັງພາງທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ

ທັງເປັນການລະເມີດສິດທິມະນຸດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 111 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ຕໍ່ບັນຫາທີສອງໃນກໍລະນີຂ້າງເທິງນັ້ນ, ຖ້າວ່າເຈົ້າໜ້າທີ່ຫາກໄດ້ຂໍຕໍ່ກຳນົດເວລາການກັກຂັງພາງເຖິງ 3 ຄັ້ງ ແລ້ວ ເທົ່າກັບ 1 ປີ ຊຶ່ງການສືບສວນ-ສອບສວນຍັງບໍ່ທັນສຳເລັດ, ເຈົ້າໜ້າທີ່ສືບສວນ-ສອບສວນ ຈະບໍ່ສາມາດຂໍຕໍ່ຄຳສັ່ງກັກຂັງພາງທ້າວ ກ (ຜູ້ຖືກຫາ) ຈາກຫົວໜ້າອົງການໄອຍະການໄດ້ອີກ ເນື່ອງຈາກວ່າ ຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາ 111 ວັກ 2 ກໍໄດ້ກຳນົດຈະແຈ້ງສຳລັບການກະທຳຜິດໃນສະຖານຄະຣຸໂທດນັ້ນ ສາມາດຕໍ່ໄດ້ເທື່ອລະ 3 ເດືອນ ແຕ່ທັງໝົດບໍ່ໃຫ້ເກີນ 1 ປີ.

**ຄຳຖາມ 26: ທິດສະດີກ່ຽວກັບການປ່ອຍຕົວພາງ**

**26.1. ການປ່ອຍຕົວພາງແມ່ນຫຍັງ? ການປ່ອຍຕົວພາງມີຈັກວິທີ?**

**26.2. ການກະທຳຜິດທີ່ສາມາດໄດ້ຮັບການປ່ອຍຕົວພາງນັ້ນ ແມ່ນມີການຈຳກັດໄວ້ສະເພາະ ຫຼື ບໍ?**

**26.3. ຜູ້ທີ່ສາມາດຮ້ອງຂໍໃຫ້ປ່ອຍຕົວພາງໄດ້ນັ້ນແມ່ນບຸກຄົນໃດ?**

**26.4. ຊັບທີ່ຈຳເປັນໃນການຄ້ຳປະກັນການປ່ອຍຕົວພາງນັ້ນ ແມ່ນຊັບແນວໃດ?**

**26.5. ການປ່ອຍຕົວພາງໂດຍໜ້າທີ່ຂອງອົງການໄອຍະການ ຫຼື ສານ ນັ້ນ ມີກໍລະນີໃດແດ່?**

## ຄຳຕອບ 26.1

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ກຳນົດໄວ້ວ່າ: ການປ່ອຍຕົວພາງແມ່ນການປ່ອຍຕົວຜູ້ຖືກຫາຊົ່ວຄາວກ່ອນການຕັດສິນຂອງສານ (ມາດຕາ 143 ວັກ 1 ກດຍ) ຊຶ່ງຜູ້ກ່ຽວໄດ້ຖືກກັກຂັງພາງຕາມຄຳສັ່ງຂອງຫົວໜ້າອົງການໄອຍະການ ຫຼື ສານ, ໃນການປ່ອຍຕົວພາງຕ້ອງມີຄຳສັ່ງເປັນລາຍລັກອັກສອນຂອງຫົວໜ້າອົງການໄອຍະການ ຫຼື ສານ (ມາດຕາ 143 ວັກ 2 ກດຍ).

ການປ່ອຍຕົວພາງນັ້ນ ມີ 2 ວິທີ (ມາດຕາ 143 ວັກ 3 ກດຍ) ຄື:

1. ການປ່ອຍຕົວພາງຕາມການຮ້ອງຂໍ

   ຜູ້ມີສິດຮ້ອງຂໍນີ້ ຕາມກົດໝາຍແລ້ວແມ່ນຈະມີແຕ່ ຜູ້ຖືກຫາ, ອົງການຈັດຕັ້ງທີ່ຜູ້ຖືກຫາສັງກັດຢູ່, ຜູ້ຕາງໜ້າ, ຜົວ ຫຼື ເມຍ, ຜູ້ປົກຄອງ, ພໍ່ ຫຼື ແມ່ ຫຼື ຍາດໃກ້ຊິດຂອງຜູ້ຖືກຫາເທົ່ານັ້ນ.

2. ການປ່ອຍຕົວພາງໂດຍໜ້າທີ່ຂອງຫົວໜ້າອົງການໄອຍະການ ຫຼື ສານ.

## ຄຳຕອບ 26.2

ການກະທຳຜິດທີ່ສາມາດໄດ້ຮັບການປ່ອຍຕົວພາງນັ້ນ ບໍ່ໄດ້ກຳນົດໄວ້ສະເພາະວ່າແມ່ນການກະທຳຜິດໃດແດ່ທີ່ສາມາດປ່ອຍຕົວພາງໄດ້ ແຕ່ວ່າໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໄດ້ກຳນົດແບບກວມລວມໄວ້ໂດຍມີເງື່ອນໄຂໃນການປ່ອຍຕົວພາງໃນ ມາດຕາ 143 ວັກ 3 ຂໍ້ 1 ແລະ ຂໍ້ 2 ຄື:

1. ການທີ່ຈະປ່ອຍຕົວພາງໄດ້ນັ້ນ ແມ່ນການກະທຳຜິດໃນສະຖານໂທສານຸໂທດ ທີ່ກົດໝາຍກຳນົດໂທດຕັດອິດສະລະພາບແຕ່ 3 ປີລົງມາ ຍົກເວັ້ນການກະທຳຜິດທີ່ບໍ່ເຂັດຫຼາບ ຫຼື ເປັນອາຈິນ;

2. ມີຂໍ້ມູນ ຫຼື ພື້ນຖານທີ່ພາໃຫ້ເຊື່ອໝັ້ນວ່າ ຜູ້ຖືກຫາ ຫຼື ຈຳເລີຍ ຈະບໍ່ເອົາຕົວຫຼົບໜີ, ຈະບໍ່ທຳລາຍຫຼັກຖານ, ຈະບໍ່ໄປກະທຳຜິດໃໝ່ອີກ, ຈະບໍ່ໄປທຳຮ້າຍຜູ້ຖືກເສຍຫາຍ, ພະຍານ ຫຼື ຜູ້ຖືກຫາ ຈະບໍ່ຖືກທຳຮ້າຍຈາກຜູ້ອື່ນ.

ການທີ່ຈະໄດ້ຮັບອະນຸມັດປ່ອຍຕົວພາງນັ້ນ ກົດໝາຍໄດ້ກຳນົດໄວ້ວ່າ ການກະທຳຜິດຂອງຜູ້ຖືກຫາທີ່ເປັນເປົ້າໝາຍຂອງການປ່ອຍຕົວພາງນີ້ ຈະຕ້ອງຢູ່ໃນສະຖານໂທສານຸໂທດ ຊຶ່ງກົດໝາຍໄດ້ກຳນົດໂທດຕັດອິດສະລະພາບແຕ່ 3 ປີ ລົງມາ ແລະ ຈະຕ້ອງເປັນການກະທຳຜິດທີ່ກົດໝາຍອະນຸຍາດໃຫ້ປ່ອຍຕົວພາງໄດ້ເທົ່ານັ້ນ ແລະ ໃນທີ່ນີ້ການກະທຳຜິດທີ່ກົດໝາຍກຳນົດໂທດຕັດອິດສະລະພາບຕ່ຳກວ່າ 3 ປີລົງມານັ້ນ ໝາຍຄວາມວ່າແມ່ນການກະທຳຜິດທີ່ກົດໝາຍກຳນົດໂທດຕັດອິດສະລະພາບສູງສຸດ 3 ປີ.

**ຄຳຕອບ 26.3**

ໃນກໍລະນີການປ່ອຍຕົວພາງຕາມການຮ້ອງຂໍນັ້ນ ຜູ້ທີ່ສາມາດທຳການຮ້ອງຂໍປ່ອຍຕົວພາງແມ່ນຈະມີບຸກຄົນດັ່ງຕໍ່ໄປນີ້: ຜູ້ຖືກຫາ, ອົງການຈັດຕັ້ງທີ່ຜູ້ກ່ຽວສັງກັດຢູ່, ຜູ້ຕາງໜ້າ, ຜົວ ຫຼື ເມຍ, ຜູ້ປົກຄອງ, ພໍ່ ຫຼື ແມ່ ຫຼື ຍາດພີ່ນ້ອງໃກ້ຊິດຂອງຜູ້ຖືກຫາກໍສາມາດຮ້ອງຂໍໃຫ້ປ່ອຍຕົວພາງຜູ້ກ່ຽວໄດ້ (ມາດຕາ 65 ຂໍ້ 4 ແລະ ມາດຕາ 143 ວັກ 5 ກດຍ).

**ຄຳຕອບ 26.4**

ຊັບທີ່ນຳມາຄ້ຳປະກັນໃນການປ່ອຍຕົວພາງຕາມການຮ້ອງຂໍມີແຕ່ເງິນສົດເທົ່ານັ້ນ ຈະບໍ່ອະນຸຍາດໃຫ້ເອົາຊັບຢ່າງອື່ນມາຄ້ຳປະກັນ (ມາດຕາ 143 ວັກ 4 ກດຍ) ສ່ວນການປ່ອຍຕົວພາງໂດຍໜ້າທີ່ຈະບໍ່ມີການຄ້ຳປະກັນ.

**ຄຳຕອບ 26.5**

ນອກຈາກການປ່ອຍຕົວພາງຕາມການຮ້ອງຂໍແລ້ວ ຍັງມີການປ່ອຍຕົວພາງໂດຍໜ້າທີ່ຂອງຫົວໜ້າອົງການໄອຍະການ ຫຼື ສານ ເຖິງແມ່ນວ່າບໍ່ມີຄຳຮ້ອງຂໍການປ່ອຍຕົວພາງຈາກຜູ້ຖືກຫາ, ອົງການຈັດຕັ້ງທີ່ຜູ້ກ່ຽວສັງກັດຢູ່, ຜູ້ຕາງໜ້າ, ຜົວ ຫຼື ເມຍ, ຜູ້ປົກຄອງ, ພໍ່ ຫຼື ແມ່ ຫຼື ຍາດພີ່ນ້ອງໃກ້ຊິດຂອງຜູ້ຖືກຫາກໍຕາມ ຫົວໜ້າອົງການໄອຍະການ ຫຼື ສານ ກໍສາມາດອອກຄຳສັ່ງປ່ອຍຕົວພາງໄດ້ (ມາດຕາ 56 ວັກ 1 ຂໍ້ 7 ແລະ ມາດຕາ 143 ວັກ 2 ກດຍ) ຄຳສັ່ງປ່ອຍຕົວພາງດັ່ງກ່າວຈະອອກໄດ້ກໍຕໍ່ເມື່ອຄົບຕາມເງື່ອນໄຂ ຄື: 1. ເປັນການກະທຳຜິດ

ໃນສະຖານໂທສານຸໂທດ ທີ່ກົດໝາຍກຳນົດໂທດຕັດອິດສະລະພາບແຕ່ 3 ປີລົງມາ ຍົກເວັ້ນການກະທຳຜິດທີ່ບໍ່ເຂັດຫຼາບ ຫຼື ເປັນອາຈີນ (ມາດຕາ 143 ວັກ 4 ຂໍ້ 1 ກດຍ) ແລະ 2. ມີຂໍ້ມູນ ຫຼື ພື້ນຖານທີ່ພາໃຫ້ເຊື່ອໝັ້ນວ່າ ຜູ້ຖືກຫາ ຫຼື ຈຳເລີຍ ຈະບໍ່ເອົາຕົວຫຼົບໜີ, ຈະບໍ່ທຳລາຍຫຼັກຖານ, ຈະບໍ່ໄປກະທຳຜິດໃໝ່ອີກ, ຈະບໍ່ໄປທຳຮ້າຍຜູ້ຖືກເສຍຫາຍ, ພະຍານ ຫຼື ຜູ້ຖືກຫາ ຈະບໍ່ຖືກທຳຮ້າຍຈາກຜູ້ອື່ນ (ມາດຕາ 143  ວັກ 4 ຂໍ້ 2 ກດຍ).

ໃນການປ່ອຍຕົວພາງໂດຍໜ້າທີ່ນີ້ ຖືວ່າເປັນການເຮັດໜ້າທີ່ຢ່າງໜຶ່ງຂອງຫົວໜ້າອົງການໄອຍະການ (ມາດຕາ 56 ວັກ 1 ຂໍ້ 7 ກດຍ) ຫຼື ສານ (ມາດຕາ 51 ຂໍ້ 2 ກດຍ) ຊຶ່ງໃນນີ້ຫົວໜ້າອົງການໄອຍະການ ຫຼື ສານ ຕ້ອງພິຈາລະນາຕາມເງື່ອນໄຂໃນການປ່ອຍຕົວພາງຢ່າງຮອບດ້ານ ແລະ ຄຳນຶງເຖິງຜົນເສຍຫາຍທີ່ຈະເກີດຂຶ້ນໃນການປ່ອຍຕົວພາງ ແລະ ການປ່ອຍຕົວພາງໂດຍໜ້າທີ່ຈະບໍ່ມີການຄ້ຳປະກັນ (ມາດຕາ 143 ວັກ 5 ກດຍ).

**ຄຳຖາມ 27: ບົດໂຈດກ່ຽວກັບການປ່ອຍຕົວພາງ**

**ເຈົ້າໜ້າທີ່ຕຳຫຼວດໄດ້ກັກຂັງພາງນາງ ກ ໂດຍຖືກຕ້ອງຕາມກົດໝາຍຕາມຄຳສັ່ງກັກຂັງພາງຈາກຫົວໜ້າອົງການໄອຍະການ ຍ້ອນຖືກຫາວ່າໄດ້ລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດ ເປັນເຫດພາໃຫ້ມີຜູ້ໄດ້ຮັບບາດເຈັບສາຫັດ 1 ຄົນ, ຫົວໜ້າບໍລິສັດບ່ອນທີ່ນາງ ກ ສັງກັດຢູ່ໄດ້ຂຽນຄຳຮ້ອງຂໍປ່ອຍຕົວພາງໂດຍມີເງິນສົດ ຈຳນວນ 20,000,000 ກີບ (ຊາວລ້ານກີບ) ເປັນຫຼັກຊັບຄ້ຳປະກັນ.**

**27.1. ບໍລິສັດບ່ອນທີ່ນາງ ກ ສັງກັດຢູ່ ຕ້ອງຍື່ນຄຳຮ້ອງຂໍປ່ອຍຕົວພາງຕໍ່ອົງການຈັດຕັ້ງໃດ?**

**27.2. ໃນກໍລະນີນີ້ຕ້ອງມີເງື່ອນໄຂອັນໃດແດ່ ຈຶ່ງຈະໄດ້ຮັບການປ່ອຍຕົວພາງຕາມການຮ້ອງຂໍ?**

**ຄຳຕອບ 27.1**

ບໍລິສັດບ່ອນທີ່ນາງ ກ ສັງກັດຢູ່ຕ້ອງຍື່ນຄຳຮ້ອງຂໍປ່ອຍຕົວພາງຕໍ່ອົງການໄອຍະການ ຫຼື ສານ ເນື່ອງຈາກວ່າມີແຕ່ຫົວໜ້າອົງການໄອຍະການ ຫຼື ສານ ເທົ່ານັ້ນ (ມາດຕາ 143 ວັກ 2 ກດຍ) ທີ່ມີສິດອຳນາດໃນການອອກຄຳສັ່ງປ່ອຍຕົວພາງຕາມການຮ້ອງຂໍ.

**ຄຳຕອບ 27.2**

ກ່ອນຈະໄດ້ຮັບການປ່ອຍຕົວພາງຕາມການຮ້ອງຂໍນັ້ນ ຈະຕ້ອງມີເງື່ອນໄຂຄົບຖ້ວນຄື ດັ່ງລຸ່ມນີ້:

1. ຕ້ອງມີຄຳຮ້ອງຂໍຈາກຜູ້ຖືກຫາ, ອົງການຈັດຕັ້ງທີ່ຜູ້ກ່ຽວສັງກັດຢູ່, ຜູ້ຕາງໜ້າ, ຜົວ ຫຼື ເມຍ, ຜູ້ປົກຄອງ, ພໍ່ ຫຼື ແມ່ ຫຼື ຍາດພີ່ນ້ອງໃກ້ຊິດ ຂອງຜູ້ຖືກຫາ (ມາດຕາ 143 ວັກ 3 ກດຍ);

2. ຕ້ອງເປັນກໍລະນີການກະທຳຜິດໃນສະຖານໂທສານຸໂທດ ທີ່ກົດໝາຍກຳນົດໂທດຕັດອິດສະລະພາບແຕ່ 3 ປີ ລົງມາ ໝາຍຄວາມວ່າ ການກະທຳຜິດທີ່ກົດໝາຍກຳນົດໂທດຕັດອິດສະລະພາບແຕ່ 3 ປີລົງມານັ້ນ ແມ່ນການກະທຳຜິດທີ່ກົດໝາຍກຳນົດໂທດຕັດອິດສະລະພາບສູງສຸດ 3 ປີ (ມາດຕາ 143 ວັກ 4 ຂໍ້ 1 ກດຍ);

3. ບໍ່ແມ່ນການກະທຳຜິດບໍ່ເຂັດຫຼາບ ຫຼື ເປັນອາຈິນ (ມາດຕາ 143 ວັກ 4 ຂໍ້ 1 ກດຍ ປະໂຫຍກຫຼັງ);

4. ມີຂໍ້ມູນ ຫຼື ພື້ນຖານທີ່ພາໃຫ້ເຊື່ອໝັ້ນວ່າ ຜູ້ຖືກຫາ ຫຼື ຈຳເລີຍ ຈະບໍ່ເອົາຕົວຫຼົບໜີ, ຈະບໍ່ທຳລາຍຫຼັກຖານ, ຈະບໍ່ໄປກະທຳຜິດໃໝ່ອີກ, ຈະບໍ່ໄປທຳຮ້າຍຜູ້ຖືກເສຍຫາຍ, ພະຍານ ຫຼື ຜູ້ຖືກຫາຈະບໍ່ຖືກທຳຮ້າຍຈາກຜູ້ອື່ນ (ມາດຕາ 143 ວັກ 4 ຂໍ້ 2 ກດຍ).

ໃນກໍລະນີນີ້ ບໍລິສັດປ່ອນທີ່ນາງ ກ ສັງກັດຢູ່ ໄດ້ຍື່ນຄຳຮ້ອງຂໍປ່ອຍຕົວພາງນາງ ກ ຍື່ນຕໍ່ຫົວໜ້າອົງການໄອຍະການ ຫຼື ສານແລ້ວ ບໍ່ໄດ້ໝາຍຄວາມວ່ານາງ ກ ຈະຖືກປ່ອຍຕົວພາງ ເພາະວ່າຫົວໜ້າອົງການໄອຍະການ ຫຼື ສານ ຕ້ອງໄດ້ພິຈາລະນາຄຳຮ້ອງດັ່ງກ່າວເສຍກ່ອນວ່າ ນາງ ກ ມີເງື່ອນໄຂຄົບຖ້ວນ ຫຼື ບໍ່ ວ່າມີເງື່ອນໄຂປ່ອຍຕົວພາງໄດ້, ຖ້າວ່າຫົວໜ້າອົງການໄອຍະການ ຫຼື ສານ ຫາກເຫັນວ່າ ນາງ ກ ມີເງື່ອນໄຂຄົບຖ້ວນຄືດັ່ງທີ່ໄດ້ກ່າວມາແລ້ວ ຫົວໜ້າອົງການໄອຍະການ ຫຼື ສານ ກໍສາມາດອອກຄຳສັ່ງປ່ອຍຕົວພາງນາງ ກ ໄດ້.

# ແຜນວາດການດຳເນີນຄະດີອາຍາ ຂອງອົງການສືບສວນ-ສອບສວນ

**ອົງການ ສ$^4$ ດຳເນີນການ ສ$^4$ ສາເຫດທີ່ພາໃຫ້ເປີດການ ສ$^4$ (ມ 86 ກດຍ)**

- ມີຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມ (ມ 87 ກດຍ), ສົ່ງຄຳຮ້ອງຟ້ອງ ຫຼື ແຈ້ງຄວາມ ໄປໃຫ້ອົງການທີ່ມີສິດ ແລະ ໜ້າທີ່ກ່ຽວຂ້ອງພິຈາລະນາ (ມ 90 ວັກ 1 ຂໍ້ 3 ກດຍ)
- ການເຂົ້າມອບຕົວຂອງຜູ້ກະທຳຜິດ (ມ 88 ກດຍ)
- ການພົບເຫັນຮ່ອງຮອຍຂອງການກະທຳຜິດ (ມ 89 ກດຍ)

- ອາດຈະອອກຄຳສັ່ງກັກຕົວ (ມ 138 ວັກ 1 ກດຍ), ການຈັບຕົວໃນກໍລະນີການກະທຳຜິດ ເຊິ່ງໜ້າ ແລະ ໃນກໍລະນີຮີບດ່ວນ (ມ 140 ກດຍ)

**ສັ່ງຟ້ອງຂຶ້ນສານໂດຍກົງ (ມ 157 ກດຍ)**

- ເປັນການກະທຳຜິດໃນສະຖານລະຫຸໂທດ ຫຼື ໂທສານຸໂທດທີ່ກົດໝາຍກຳນົດໂທດຕັດອິດສະລະພາບຕ່ຳກວ່າ 3 ປີ (ມ 158 ຂໍ້ 1 ກດຍ)
- ມີຫຼັກຖານຄົບຖ້ວນເປັນຕົ້ນແມ່ນການກະທຳຜິດເຊິ່ງໜ້າ, ມີການຮັບສາລະພາບຂອງຜູ້ຖືກຫາ (ມ 158 ຂໍ້ 2 ກດຍ)
- ເມື່ອມີເງື່ອນໄຂຄົບຖ້ວນຕາມທີ່ກຳນົດໄວ້ໃນ (ມ 158 ກດຍ) ຫົວໜ້າອົງການ ສ$^4$ ຕ້ອງສົ່ງສຳນວນຄະດີພ້ອມດ້ວຍຂອງກາງ ແລະ ຜູ້ຖືກຫາໃຫ້ອົງການໄອຍະການ (ມ 159 ກດຍ)

**ອອກຄຳສັ່ງເປີດການ ສ$^4$ (ມ 53 ວັກ 1 ຂໍ້ 4 ແລະ ມ 91 ກດຍ)**

- ມີຂໍ້ມູນໜັກແໜ້ນ (ມ 91 ວັກ 1 ກດຍ)
- ລາຍງານໃຫ້ຫົວໜ້າອົງການໄອຍະການຊາບ (ມ 91 ວັກ 2 ກດຍ)

**ອອກຄຳສັ່ງບໍ່ເປີດການ ສ$^4$ (ມ 53 ວັກ 1 ຂໍ້ 4 ແລະ ມ 93 ກດຍ)**

- ແຈ້ງຄຳສັ່ງບໍ່ເປີດການ ສ$^4$ ໃຫ້ບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮ້ອງຟ້ອງ ຫຼື ແຈ້ງຄວາມຊາບ (ມ 93 ວັກ1 ກດຍ)

**ດຳເນີນການ ສ$^4$ (ມ 95 ກດຍ)**

- ນຳໃຊ້ວິທີການ ສ$^4$: ການເອົາຄຳໃຫ້ການ (ມ 115 ກດຍ), ການເອົາຄຳໃຫ້ການຜູ້ຖືກຫາ (ມ 116 ກດຍ), ການສອບຖາມຊ້ອງໜ້າ (ມ 119 ກດຍ), ການຊີ້ຕົວ ແລະ ການຢັ້ງຢືນ (ມ 120 ກດຍ), ການຍຶດ ຫຼື ອາຍັດຊັບ (ມ 128 ກດຍ), ການຊັນນະສູດສະຖານທີ່ເກີດເຫດ (ມ 129 ກດຍ), ການຊັນນະສູດຊາກສົບ (ມ 131 ກດຍ), ການທົດສອບຂໍ້ມູນຄືນໃໝ່ (ມ 134 ກດຍ), ບົດບັນທຶກການ ສ$^4$ (ມ 100 ກດຍ), ໝາຍຮຽກ (ມ 113 ກດຍ)
- ນຳໃຊ້ມາດຕະການສະກັດກັ້ນ: ການພາຕົວ (ມ 137 ກດຍ), ການຄຸມຕົວຢູ່ກັບທີ່ (ມ 144 ກດຍ)
- ສະເໜີຂໍຄຳສັ່ງ: ຈັບຕົວ, ກັກຂັງພາງ, ປ່ອຍຕົວພາງ, ກວດຄົ້ນເຄຫາສະຖານ, ງົດໜ້າທີ່ ຫຼື ຕຳແໜ່ງ (ມ 53 ວັກ 1 ຂໍ້ 8 ກດຍ)
- ກຳນົດເວລາການ ສ$^4$: 2 ເດືອນ ສຳລັບການກະທຳຜິດໃນສະຖານໂທສານຸໂທດ ແລະ 3 ເດືອນ ສຳລັບການກະທຳຜິດໃນສະຖານຄະຣຸໂທດ (ມ 110 ວັກ 1 ກດຍ)
- ສະເໜີຂໍຕໍ່: ກຳນົດເວລາການ ສ$^4$, ຕໍ່ກຳນົດເວລາກັກຂັງພາງ (ມ 53 ວັກ 1 ຂໍ້ 8, ມ 110 ວັກ 2 ກດຍ)
- ການກວດກາ ແລະ ຊັ່ງຊາຕີລາຄາຫຼັກຖານ (ມ 44 ກດຍ)



ໂຈະການ ສ4 (ມ 146 ກດຍ)
- ຜູ້ຖືກຫາໄດ້ລີ້ຊ່ອນ, ຫຼົບຫຼີກຈາກການດຳເນີນຄະດີ ຫຼື ບໍ່ຮູ້ບ່ອນຢູ່ຂອງຜູ້ກ່ຽວ
- ບໍ່ສາມາດຮູ້ໄດ້ວ່າ ແມ່ນຜູ້ໃດເປັນຜູ້ກະທຳຜິດ
- ຜູ້ຖືກຫາເຈັບປ່ວຍໜັກ ຫຼື ເປັນບ້າເສຍຈິດໂດຍມີການຢັ້ງຢືນຈາກຄະນະແພດ.
ຊັດມ້ຽນຄະດີ (ມ 148 ກດຍ)
- ເມື່ອມີສາເຫດໃດໜຶ່ງທີ່ໄດ້ກຳນົດໄວ້ໃນ (ມ 6 ກດຍ)
- ເມື່ອບໍ່ມີຫຼັກຖານພຽງພໍວ່າຜູ້ຖືກຫາໄດ້ເປັນຜູ້ກະທຳຜິດ
ສະຫຼຸບການ ສ4 ສົ່ງອົງການໄອຍະການ (ມ 150 ກດຍ)
- ສົ່ງບົດສະຫຼຸບພ້ອມດ້ວຍສຳນວນຄະດີ ແລະ ຂອງກາງສົ່ງໃຫ້ອົງການໄອຍະການພາຍໃນ 3 ວັນ

ປື້ມຖາມ-ຕອບ ກ່ຽວກັບການສືບສວນ-ສອບສວນ ຫົວນີ້

ໄດ້ຮັບການຊ່ວຍເຫຼືອ ທາງດ້ານວິຊາການ ແລະ

ການພິມ ຈາກ ອົງການຮ່ວມມືສາກົນຍີ່ປຸ່ນ (ໄຈກາ)

**ສຳລັບແຈກຢາຍ ຫ້າມ ຊື້ - ຂາຍ**

ພິມຄັ້ງທີ 2

4,000 ຫົວ ທີ່ ໂຮງພິມເທບປັນຍາ ນະຄອນຫຼວງວຽງຈັນ, ມີນາ 2018

**JICA Project for Human Resource Development in the Legal sector**

Tel: 021-254307 Fax: 021-254308

**Japan International Cooperation Agency (JICA) Laos Office**

2nd Floor, Sacombank Building, 044 Haengboun Rd, Ban Haisok,

Chanthabouly District Vientiane Capital, Lao P.D.R